ໃນໂອກາດທີ່ໄດ້ມາຢ້ຽມສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກໍ່ໄດ້ເຫັນ ພູມີປະເທດແລະໄດ້ພົບກັບເຈົ້າໜ້າທີ່ທັງຝ່າຍລັດຖະບານແລະປະຊາຊົນຂອງລາວ ເຮັດໃຫ້ມີ ຄວາມຮູ້ສຶກວ່າດີໃຈທີ່ມີໂອກາດມາຢ້ຽມຢາມມິດປະເທດ ແລະໃນໂອກາດນີ້ກໍ່ໄດ້ມາພົບຄົນໄທທີ່ ພັກອາໃສຢູ່ໃນປະເທດນີ້ ຊຶ່ງທາງທ່ານທູດ ກໍ່ໄດ້ແຈ້ງວ່າມີຫຼາຍປະເພດ ຕັ້ງແຕ່ປະເພດທີ່ເປັນ ຂ້າລາຊການຫຼືເຈົ້າເຈົ້າໜ້າທີ່ລັດວິສະຫະກິດທີ່ມາພັກອາໃສຢູ່ໃນປະເທດລາວ ເປັນພວກທີ່ໄປ ໆ ມາ ໆ ຫຼືຮຽກວ່າເປັນພີ່ນ້ອງກັນທີ່ຂ້າມແດນເຂົ້າ ໆ ອອກ ໆ ເປັນປະຈຳມາຊ້ານານ ອີກປະເພດ ໜຶ່ງກໍ່ເປັນພວກທີ່ໄດ້ທຳມາຫາກິນຕັ້ງການຄ້າຫຼືການປະຕິບັດເລັກ ໆ ນ້ອຍໆ ໃນປະເທດລາວ

ແລະອີກປະເພດໜຶ່ງກໍ່ຄື ຜູ້ທີ່ມາເປັນຄັ້ງຄາວແລະໄດ້ລົງມາລົງທຶນໃນປະເທດລາວນີ້ ແລະໄດ້ຮ່ວມມືກັບທາງຝ່າຍທາງການລາວ ທັງ 4 ປະເພດນີ້ກໍ່ມີເຫດຜົນທີ່ມາແຕກຕ່າງກັນ ມີຖານະແຕກຕ່າງກັນ ແຕ່ລວມແລ້ວກໍ່ມີຖານະຄືກັນ ຄືເປັນຜູ້ທີ່ເປັນຜູ້ແທນເປັນຕົວແທນຂອງຄົນໄທທັງຫຼາຍທີ່ມາມີກິດຈະການຕ່າງ ໆ ໃນປະເທດລາວນີ້ມີໜ້າທີ່ເໝືອນກັນທຸກຄົນ ຄືຈະຕ້ອງປະຕິບັດງານແລະປະຕິບັດຕົນໃຫ້ເປັນທີ່ນິຍົມຮັກແພງຂອງທັງປະຊາຊົນ ທັງຝ່າຍທາງການລາວ ເພື່ອທີ່ຈະໃຫ້ທັງສອງປະເທດນີ້ມີຄວາມຈະເລີນ ມີຄວາມໝັ້ນຄົງແລະມີຄວາມສະຫງົບສຸກ

ໃນການເຮັດແບບນີ້ເພື່ອຄວາມສະຫງົບສຸກຫຼືຄວາມໝັ້ນຄົງຂອງທັງສອງປະເທດນີ້ກໍ່ມີວິທີການແຕກຕ່າງກັນແຕ່ວ່າຖ້າຫາກວ່າຕ້ອງຄິດວ່າ ຖ້າຫາກວ່າປະເທດທັງສອງບໍ່ມີຄວາມສະຫງົບກໍ່ບໍ່ສາມາດທີ່ຈະປະຕິບັດງານຂອງຕົນຜູ້ທີ່ຈະເຮັດການຄ້າກໍ່ບໍ່ສາມາດທີ່ຈະທຳການຄ້າໂດຍມີກຳໄລ ມີຄວາມກ້າວໜ້າສະນັ້ນສິ່ງທີ່ສຳຄັນສຳລັບຄົນໄທທຸກຄົນ ຈະມີຖານະໃດໆກໍ່ຕາມມາຢູ່ໃນປະເທດນີ້ກໍ່ຈະຕ້ອງເຮັດງານແລະວາງຕົວໃຫ້ເປັນທີ່ນິຍົມຂອງປະຊາຊົນແລະທາງການຂອງປະເທດເລົ່ານີ້ ຖ້າວ່າເຮັດແບບນີ້ໄດ້ກໍ່ນັບວ່າໄດ້ເຮັດໜ້າທີ່ໂດຍສົມບູນ ແລະຕ້ອງລະນຶກເຖິງວ່າ ຖ້າຫາກວ່າບໍ່ສາມາດທີ່ຈະເຮັດໃຫ້ເປັນຜົນສົມບູນນີ້ ທ່ານທັງຫຼາຍກໍ່ບໍ່ຢູ່ທີ່ນີ້ ຄືກັບໃນສະໄໝກ່ອນນີ້ ກໍ່ບໍ່ມີຄົນໄທ ມາພັກອາໃສຢູ່ທີ່ປະເທດນີ້ ດັ່ງທີ່ທ່ານທັງຫຼາຍໄດ້ມາຢູ່ເພາະວ່າບໍ່ຮຽບຮ້ອຍ ດຽວນີ້ຮຽບຮ້ອຍຂຶ້ນ ມີຄວາມຜາສຸກ,ມີຄວາມສະຫງົບ ກໍ່ມາໄດ້ເປັນຈຳນວນຫຼາຍ ຕໍ່ໄປກໍ່ຈະມີຈຳນວນຫຼາຍຍິ່ງຂຶ້ນ ແຕ່ຈະຕ້ອງຮັກສາປະຕິບັດ,ລະດັບການປະຕິບັດເຊັ່ນນີ້ຕໍ່ໄປ ເພາະວ່າຕ້ອງສຳນຶກວ່າ ຖ້າຫາກວ່າລະດັບການປະຕິບັດບໍ່ໄດ້ສ້າງສັນຄວາມຜາສຸກຂອງປະເທດຈະເປັນປະເທດໄທຫຼືປະເທດລາວກໍ່ຈະຫຼຸດລົງໄປ ມິດຕະພາບກໍ່ອາດຈະບໍ່ແໜ້ນແຟ້ນ ສະນັ້ນ ການມາຢູ່ອາໃສຢູ່ໃນປະເທດນີ້ ກໍ່ຄົງບໍ່ມີຄວາມຜາສຸກແລະລົງທ້າຍກໍ່ບໍ່ສາມາດທີ່ຈະມາຢູ່ໄດ້ ສະນັ້ນທຸກຄົນຈະມີໜ້າທີ່ໄດ້ກໍ່ຕາມ ມີໜ້າທີ່ສຳຄັນທີ່ຈະສົ່ງເສີມມິດຕະພາບໂດຍການວາງຕົວໃຫ້ເປັນທີ່ໜ້າຮັກຂອງປະຊາຊົນແລະທາງການ ຊ່ວຍຫຍັງໄດ້ກໍ່ຄວນຈະຊ່ວຍ ຢ່າງໃນວັນນີ້ໄດ້ນຳເງິນແລະສິ່ງຂອງມາໃຫ້ ເພື່ອພັດທະນາໃນໂຄງການຕ່າງໆ ທີ່ໄດ້ຕັ້ງເອົາໄວ້ ເພື່ອຄວາມຈະເລີນຂອງປະຊາຊົນແລະປະເທດລາວນີ້ ທ່ານກໍ່ໄດ້ເຮັດໜ້າທີ່ທີ່ດີເຊັ່ນນີ້ຢ່າງໜຶ່ງແລ້ວ ແລ້ວກໍ່ທີ່ທ່ານໄດ້ບໍລິຈາກກໍ່ຈະມອບໃຫ້ທ່ານເອກອັກຄະຣາຊທູດໃຫ້ໄດ້ດຳເນີນການຈຸດປະສົງຕໍ່ໄປ

ການທີ່ເຮັດໂຄງການດັ່ງທີ່ໄດ້ກ່າວໄວ້ ກໍ່ເພື່ອຈະໄດ້ໃຫ້ປະຊາຊົນຢູ່ເຢັນເປັນສຸກ ເວົ້າເຖິງປະຊາຊົນແບບນີ້ ບໍ່ໄດ້ເວົ້າວ່າປະຊາຊົນໄທຫຼືລາວ ເພາະວ່າຖ້າປະຊາຊົນທີ່ໃດກໍ່ຕາມ ປະເທດໃດກໍ່ຕາມ ມີຄວາມຢຢູ່ເຢັນເປັນສຸກ ສັນຕິສຸກຫຼືຄວາມສະຫງົບກໍ່ຈະເກີດຂຶ້ນ ບໍ່ເຈະຈົ

ວ່າປະເທດໄທຫຼື ປະເທດລາວຖ້າຫາກວ່າປະຊາຊົນໃນປະເທດໃດມີຄວາມຄວາມສຸກມີຄວາມ ຢູ່ເຢັນເປັນສຸກຄືມີຄວາມເປັນຢູ່ທີ່ດີ ກໍ່ໝາຍຄວາມວ່າປະຊາຊົນນັ້ນມີຄວາມໝັ້ນຄົງ ພູມີພາກໃດ ມີປະເທດ ທີ່ມີຄວາມໝັ້ນຄົງດີ ຢ່າງນີ້ ເປັນພູມີພາກທີ່ເຂັ້ມແຂງໃນໂລກນີ້ ມີຄວາມຫຍຸ້ງຍາກຫຼາຍ ໃນທຸກທະວີບ ແລະ ແມ່ນແຕ່ໃນຂະນະນີ້ເອງກໍ່ມີການຕີກັນ ຂ້າກັນຢ່າງບໍ່ນ່າຈະເປັນໄປໄດ້ ບາງປະເທດ ເປັນປະເທດແລ້ວກໍ່ແຕກແຍກອອກຈາກກັນ , ຕີກັນຂ້າກັນລະຫວ່າງພີ່ນ້ອງ ຜູ້ທີ່ມີເຊື້ອຊາດ, ສັນຊາດດຽວກັນ ກໍ່ຂ້າກັນເປັນຈຳນວນເປັນໝື່ນ ສະນັ້ນໃນພູມີພາກນີ້ ເຮົາມີຄວາມກ້າວໜ້າ ເຮົາມີຄວາມສະຫງົບສຸກຫຼາຍຂຶ້ນ ມາໃນໄລຍະຫຼາຍປີທີ່ຜ່ານມານີ້ ພັດທະນາຂຶ້ນໄປໃນທາງທີ່ດີ ເຮົາກໍ່ຈະຕ້ອງຮັກສາການພັດທະນາ ເພື່ອຈະເຮັດໃຫ້ພູມີພາກຂອງ ໂລກນີ້ມີຄວາມສະຫງົບ ແລະ ຈະມີຄວາມເຂັ້ມແຂງໃນທີ່ສຸດຈະບໍ່ເປັນຄືກັບປະເທດຕ່າງໆ ໃນທະວີບອື່ນໆທີ່ລົບລ້າຂ້າຟັນກັນ ພີ່ນ້ອງກໍ່ບໍ່ໄວ້ຊີວິດ ຖ້າຫາກເຮົາຮັກສາຈິດໃຈທີ່ຈະເອື້ອເຟື້ອ ເພື່ອແພ່ເຊິ່ງກັນ ແລະ ກັນແບບນີ້ ກໍ່ຈະເຮັດໃຫ້ທຸກຄົນໃນປະເທດໃນພູມີພາກນີ້ມີຄວາມ ສະຫງົບສຸກໄດ້ຫຼາຍ ຍິ່ງມີຄວາມສະຫງົບສຸກ ມີຄວາມເຂັ້ມແຂງໄດ້ຫຼາຍໃນໂລກນີ້ເຮົາຈະຫຍິ່ງດີ ໄດ້ຊື່ວ່າເປັນພູມີພາກແຫ່ງສະຫງົບສຸກ ພູມີພາກແຫ່ງສຸດຈະຣິດ ຢ່າງມີເມດຕາເພື່ອແພ່ກັນ ຈະ ເປັນໄທ ຫຼື ລາວ ກໍ່ເພື່ອແພ່ເຊິ່ງກັນ ແລະ ກັນ ຈະເປັນຕົວຢ່າງຂອງການເປັນຢູ່ຂອງປະຊາຊົນ ໃນໂລກນີ້ ປະຊາຊົນໃນພູມີພາກອື່ນໂລກນີ້ເຫັນຕົວຢ່າງຂອງມິດຕະພາບລາວ-ໄທ ກໍ່ຈະອາດ ເກີດຄວາມຮູ້ສຶກວ່າເປັນສິ່ງທີ່ຄວນຊື່ນຊົມ ອາດເຮັດຕາມ ຖືເປັນຕົວຢ່າງຈະເຮັດໃຫ້ໂລກຂອງເຮົາ ທົ່ວໂລກມີຄວາມສະຫງົບສຸກ ສະນັ້ນທ່ານທຸກຄົນໃນໜ້າທີ່ຕ່າງໆທີ່ທ່ານ ຈະເຮັດກໍ່ມີໜ້າທີ່ອັນນີ້ ເຊິ່ງອາດຈະນຶກວ່າບໍ່ເປັນໄປໄດ້ ແຕ່ເຊື່ອວ່າເປັນໄປໄດ້ ເປັນຕົວຢ່າງສຳລັບທົ່ວໂລກ ເຖິງມິດຕະພາບ ລະຫວ່າງສອງປະເທດ ຈະນຳມາສູ່ສັນຕິສຸກ ສັນຕິພາບໃນໂລກໄດ້.

ສະນັ້ນໃນໂອກາດນີ້ກໍ່ຂໍຊົມເຊີຍທ່ານ ແລ້ວຂໍໃຫ້ກຳລັງໃຈໃຫ້ທ່ານທັງຫຼາຍໄດ້ປະຕິບັດ ວຽກຢ່າງດີ ເພື່ອໃຫ້ບັນລຸຈຸດໝາຍທີ່ສູງສຸດນີ້ ແລ້ວກໍ່ໂດຍທີ່ເຮົາໄດ້ມາຢ້ຽມຢາມປະເທດລາວຄັ້ງນີ້ ກໍ່ໄດ້ຜ່ານມາທາງຂົວມິດຕະພາບ ກໍ່ຂໍໃຫ້ເລີ່ມເປັນໄລຍະ ເປັນໄລຍະເວລາທີ່ຈະເລີ່ມຍຸກໃໝ່ຂອງ ການປະຕິບັດວຽກຂອງທ່ານ ແລະ ເພື່ອເປັນຍຸກໃໝ່ຂອງຄວາມສຳພັນລະຫວ່າງປະເທດໄທ ກັບປະເທດລາວກໍ່ຂໍທຸກທ່ານມີກຳລັງທັງຈິດໃຈ ແລະກາຍທີ່ເຂັ້ມແຂງ ແຂງແຮງເພື່ອທີ່ຈະປະຕິບັດ ວຽກທັງໃນໜ້າທີ່ຂອງທ່ານ ກໍ່ຄືໃນກິດຈະການຂອງທ່ານໃຫ້ສຳເລັດ ແລະ ຂໍໃຫ້ທ່ານສ້າງ ມິດຕະພາບ ແລະ ສ້າງຄວາມຢູ່ດີກິນດີໃນພູມີພາກນີ້ ຂໍໃຫ້ທ່ານມີກຳລັງກາຍ ກຳລັງໃຈເຂັ້ມແຂງ ແລະ ປະສົບຄວາມຈະເລີນຮຸ່ງເຮືອງທຸກປະການ.



ບົດທີ 2
ສານສ້າງການພັດທະນາ



ສຳພັນ ທະ ພາບສອງ ແຜ່ນດິນ ມີ ຄວາມ ແໜ້ນ ແຟ້ນຍິ່ງ ຂຶ້ນ ຫຼັງຈາກ ທີ່ ພຣະບາດສົມເດັດພຣະມະຫາພູມິພົນອະດຸນຍະ ເດດມະຫາຣາດ ບໍຣົມນາດບໍພິດ ໄດ້ພຣ ະຣາ ຊທາ ນພຣະຣາຊ ດຳຣິ ໃຫ້ ຈັດຕັ້ ງສູນ ພັດທະນາ ແລະ ບໍລິການ ດ້ານກະສິກຳ ທີ່ປະເທດ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ເຊິ່ງການ ດຳເນີນງານໃຫ້ຄວາມຊ່ວຍເຫຼືອ ໃນຄັ້ງນີ້ ເປັນວຽກທີ່ບໍ່ງ່າຍ ທັງນີ້ ເນື່ອງຈາກ ວັດທະນະທຳ ປະເພນີ ແລະ ລະບຽບກົດໝາຍຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແຕກຕ່າງຈາກປະເທດໄທ

ການປະຕິບັດງານຂອງສູນພັດທະນາ ແລະ ບໍລິການດ້ານກະສິກຳຫ້ວຍຊອນ-ຫ້ວຍຊົ້ວ ມີດັ່ງນີ້

ການພັດທະນາໂຄງລ້າງພື້ນຖານ

ຊ່ວງ ທີ່ ດຳ ເນີນ ງານ ຈັດຕັ້ງ ສູນ ມີ ປະ ຊາ ຊົນ ອາ ໃສ ຢູ່ ບໍ່ ໜາ ແໜ້ນ ສະ ພາບ ທີ່ ຢູ່ ອາ ໃສ ມີ ລັກ ສະ ນະ ເປັນ ບ້ານ ເຮືອນ ຖາ ວອນ ແຕ່ ລະ ຊຸມ ຊົນ ບໍ່ ມີ ບໍ ລິ ການ ສາ ທາ ລະ ນະ ບໍ່ ມີ ໄຟ ຟ້າ ທາງ ເປັນ ທາງ ດິນ ແດງ ການ ສັນ ຈອນ ລຳ ບາກ ປະ ຊາ ຊົນ ສ່ວນ ໃຫຍ່ ມີ ອາ ຊີບ ເຮັດ ນາ ເຮັດ ໄຮ່ ແລະ ຮັບ ຈ້າງ ທົ່ວ ໄປ ບັນ ຫາ ທີ່ ສຳ ຄັນ ໃນ ການ ປະ ກອບ ອາ ຊີບ ຄື ການ ຂາດ ແຄນ ນ້ຳ ແລະ ດິນ ທີ່ ຂາດ ຄວາມ ອຸ ດົມ ສົມ ບູນ ດັ່ງ ນັ້ນ ໃນ ໄລ ຍະ ທຳ ອິດ ຈຶ່ງ ໄດ້ ດຳ ເນີນ ການ ກໍ່ ສ້າງ ລະ ບົບ ສາ ທາ ລະ ນູ ປະ ໂພ ກ ເຊັ່ນ: ໄຟ ຟ້າ ນ້ຳ ປະ ປາ ເສັ້ນ ທາງ ຄົມ ມະ ນາ ຄົມ ພາຍ ໃນ ແລະ ອ້ອມ ສູນ ກໍ່ ສ້າງ ຫ້ອງ ການ ສູນ ທຳ ພັກ ຝຶກ ອົບ ຮົມ ເຮືອນ ພັກ ຝຶກ ອົບ ຮົມ ຫ້ອງ ອາ ຫານ ໂຮງ ເກັບ ເມັດ ພັນ ລານ ຕາ ກ ເມັດ ພັນ ຄອກ ສັດ ແລະ ໜອງ ລ້ຽງ ປາ



ເຊິ່ງ ປະ ຈຸ ບັນ ມີ ຜູ້ ເຂົ້າ ມາ ຝຶກ ອົບ ຮົມ ໃນ ສູນ ຢ່າງ ຕໍ່ ເນື່ອງ ທັງ ຈາ ກ ພາຍ ໃນ ແລະ ນອກ ແຂວງ ສາ ທາ ລະ ນະ ລັດ ປະ ຊາ ທິ ປະ ໄຕ ປະ ຊາ ຊົນ ລາ ວ ລວມ ເຖິງ ປະ ເທດ ໄທ ແລະ ຈີນ ເປັນ ຕົ້ນ.



ການພັດທະນາແຫລ່ງນ້ຳ

ວຽກງານການພັດທະນາແຫຼ້ງນ້ຳເປັນກິດຈະກຳທີ່ສຳຄັນເຊິ່ງທາງຝ່າຍລາວມີຄວາມຕ້ອງການຫຼາຍ. ຈາກການສຳຫຼວດເຫັນວ່າມີລຳນ້ຳສຳຄັນໄຫຼຜ່ານພື້ນທີ່ສູນ ແລະ ໝູ່ບ້ານເປົ້າໝາຍທັງ 5 ໝູ່ບ້ານຂອງລາວຄື: ຫ້ວຍຊອນ ແລະ ຫ້ວຍຊົ້ວ ສຳຫຼັບພື້ນທີ່ສູນນັ້ນແມ່ນຢູ່ລະຫວ່າງ ຫ້ວຍຊົ້ວ ແລະ ຫ້ວຍຊອນໄຫຼຜ່ານຄົບກັນ. ໄດ້ມີການດຳເນີນການພັດທະນາແຫຼ່ງນ້ຳດັ່ງນີ້:



1. ການກໍ່ສ້າງອ່າງເກັບນ້ຳຫ້ວຍຊອນ ມີຂະໜາດສັນເຂື່ອນດິນຍາວ 550 ແມັດ ສູງ 14 ແມັດ ກວ້າງ 8 ແມັດ. ລະບົບສົ່ງນ້ຳເປັນຄອງເບຕົ້ງມີຄວາມຍາວ 5,570 ແມັດ. ສາມາດບັນຈຸນ້ຳໄດ້ 1.8 ລ້ານແມັດກ້ອນ ເຊິ່ງໍ່ສ້າງສຳເລັດເມື່ອປີ 1998 ສາມາດສະໜອງນ້ຳໃຫ້ແກ່ກິດຈະກຳຂອງ ສູນຕະຫຼອດຮອດພື້ນທີ່ປູກພືດຂອງກະເສດຕະກອນໃນ ໝູ່ບ້ານນາຍາງ, ບ້ານຫ້ວຍຂ້ວ ແລະບ້ານນາຊອນໃນຂົງເຂດພື້ນທີ່ ທັງໝົດ 2,233 ໄລ່ ໃນລະດູຝົນແລະລະດູແລ້ງ 1,155 ໄລ່ ເຊິ່ງຕໍ່ມາໃນປີ 2002 ໄດ້ປັບປຸງເພື່ອເພີ່ມບໍ່ລິມາດນ້ຳຂຶ້ນເປັນ 2 ລ້ານແມັດກ້ອນ ສາມາດສົ່ງນ້ຳໃນຂອບເຂດພື້ນທີ່ 2,500 ໄລ່. ຊ່ວຍເຫຼືອກະເສດຕະກອນ 9 ໝູ່ບ້ານ ໄດ້ແກ່ ບ້ານນາຍາງ, ບ້ານນາຊອນ, ບ້ານຫ້ວຍຂ້ວ, ບ້ານນ້ຳກ້ຽງເໜືອ, ບ້ານາກ້ຽງໃຕ້, ບ້ານດ່ານຊີ, ບ້ານນາຊັບ, ບ້ານໜອງຄັນຄູ ແລະ ບ້ານຫ້ວຍຊ້າງ ລວມ 1,676 ຄອບຄົວ ໃຫ້ສາມາດປູກເຂົ້ານາແຊງໄດ້

ການບໍລິຈັດການນ້ຳ: ຣາກຖານຊາວລາວມີການຈັດຕັ້ງ ກຸ່ມຜູ້ຊົມໃຊ້ນ້ຳຈຳນວນ 7 ກຸ່ມ, ມີສະມາຊິກ 275 ຄົນ





ລ/ດ	ໝູ່ບ້ານ	ຈຳນວນສະມາຊິກ	ເນື້ອທີ່(ໄລ່)	ຈຳນວນເຮັກຕາ
1	ກຸ່ມບ້ານນາຍາງຝາຍຫ້ວຍຊີ້ວ	15	52.20	8.35
2	ກຸ່ມບ້ານນາຍາງອ່າງເກບນ້ຳ	16	55.50	8.88
3	ກຸ່ມບ້ານນາຊອນອ່າງເກັບນ້ຳ	42	196.50	31.44
4	ກຸ່ມບ້ານຫ້ວຍຂ້ວອ່າງເກັບນ້ຳ	61	280	44.80
5	ກຸ່ມບ້ານຫ້ວຍຂ້ວຝາຍນ້ຳກ້ຽງ	18	105.80	16.92
6	ກຸ່ມບ້ານນ້ຳກ້ຽງຝາຍນ້ຳກ້ຽງ	66	375.10	60.01
7	ກຸ່ມບ້ານນາຊັບຝາຍນາຊັບ	57	90.90	14.54
	ລວມ	275	1,156	184.94

2. ການຂຸດສະນ້ຳປະຈຳໄຮ່ນາຂອງກະເສດຕະກອນ ໂດຍກະຈາຍຕາມໝູ່ບ້ານອ້ອມຂ້າງ ສູນຂະໜາດບັນຈຸ 1,250 ແມັດກ້ອນ ປີລະ 25 ສະ ລວມ 225 ສະ. ເຮັດໃຫ້ພື້ນທີ່ການກະສິກຳ ອ້ອມຮອບສູນຈຳນວນ 250 ໄລ່ມີຜົນຜະລິດທາງການກະເສດສູງຂຶ້ນ ລວມທັງມີການຈັດຕັ້ງກຸ່ມ ຜູ້ຊົມໃຊ້ນ້ຳຈຳນວນ 7 ກຸ່ມ ມີສະມາຊິກຮ່ວມໂຄງການ 4,690 ຄົນ

3. ສະໜັບສະໜູນກໍ່ສ້າງຝາຍທົດນ້ຳຫ້ວຍຊົ້ວ ບ້ານນາຍາງ ເຂດນ້ຳກ້ຽງ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ເປັນຝາຍຄອນກຣີດຂະໜາດສັນຝາຍກ້ວາງ 15 ແມັດ, ສູງ 2.5 ແມັດ ກັ້ນບໍລິເວນລຳນ້ຳຫ້ວຍຊົ້ວເໜືອ ບໍລິເວນອ່າງເກັບນ້ຳຫ້ວຍຊອນຂຶ້ນໄປ ເພື່ອເປັນແຫຼ່ງນ້ຳ ສຳຫຼັບອຸປະໂພກ ບໍລິໂພກ ແລະ ກະເສດຕະກອນຂອງພື້ນຖານໂດຍມີພື້ນທີ່ຮັບປະໂຫຍດ ປະມານ 500 ໄລ່ ຄອບຄຸມພື້ນທີ່ 3 ໝູ່ບ້ານ ຄື: ບ້ານນາຍາງ, ບ້ານອີ່ໄລ ແລະບ້ານໜອງຄັນຄູ ເຊິ່ງມີປະຊາກອນປະມານ 300 ຄອບຄົວ, 1,500 ຄົນ ພ້ອມເກັບກັກນ້ຳໃຫ້ແກ່ປະຊາຊົນລາວ ໄດ້ໃນເດືອນກຸມພາ 2009



4. ການກໍ່ສ້າງຝາຍທົດນ້ຳເພີ່ມເຕີມ ເນື່ອງຈາກລັດຖະບານລາວເຫັນຄວາມສຳຄັນ ຂອງການກໍ່ສ້າງອ່າງເກັບນ້ຳຫ້ວຍຊອນ ແລະ ຝາຍຫ້ວຍຊົ້ວ ຊຶ່ງໃຫ້ປະໂຫຍດແກ່ລັດຖະບານໃນພື້ນທີ່ບໍລິເວນນັ້ນ ແລະ ເພື່ອໃຫ້ການໃຊ້ປະໂຫຍດໃຫ້ຄຸ້ມຄ່າຈາກແຫຼ່ງນ້ຳແຫຼ່ງນີ້ຫຼາຍກ່ວາເກົ່າ ລັດຖະບານຈຶ່ງໄດ້ສ້າງຝາຍທົດຂຶ້ນອີກ 3 ແຫ່ງຢູ່ໃນເຂດບ້ານນ້ຳກ້ຽງ 1 ແຫ່ງ ແລະ ບ້ານນາຊັບ 2 ແຫ່ງ ໂດຍມີພື້ນທີ່ຮັບປະໂຫຍດປະມານ 800 ໄລ່ ມີຊາວກະສິກອນລວມປະມານ 850 ຄອບຄົວ, ຈຳນວນ 3,500 ຄົນ ດຳເນີນການສຳເລັດແລ້ວ ໃນເດືອນເມສາ ປີ 2011





ສະເດັດໄປເປີດຝາຍຫ້ວຍຊົ້ວ ວັນທີ 5 ມີນາ 2009



ผົນปะโหยดจาภาทานพัดทะนาแหล่งน้ำ

ตั้งแต่ก่ำส้างเกับน้ำห้อยซอนพ้อมละบบส่งน้ำสำเล็ดธยบร้อยสามาดเกับกักน้ำ และ ส่งน้ำให้แก่ปะชาชินที่อู่ในขิงเขดพื้นที่โคงการทั้งเพื่อการอุปะโพกบໍลิโพก และ การกะสิกำย่างพยงพໍ

ในละดูฝົนมีพื้นที่ปูกปะมาน 500 เฮักตา (3,125 ไล่) สามาดเพิ่มผົนผะลิดจาก 2,50 โตน/เฮักตา (400 kg/ไล่) เป้น 4,20 โตน/เฮักตา (672 kg/ไล่).



ผົนผะลิดเข้ำที่เพิ่มขึ้น 272 kg/ไล่ หากคิดเป้นเงินจากพื้นที่ปูก 3,125 ไล่, จะได้ผົนผะลิดเพิ่มขึ้น 850,000 kg/ปี หากคิดเป้นลาคาโดยสะเล่ย 9 บาด/kg ผົนผะลิดที่เพิ่มขึ้นคิดเป้นมูนค่าลอม 7,650,000 บาด/ปี.

ในละดูแล้งจากที่บ่เคียเฮ็ดการเพาะปูกได้เลียเฮ็ดให้สามาดเพาะปูกได้ทุกปีซึ่งตามแผนเก่ำในละดูแล้งสามาดปูกได้พยง 80 เฮักตา (500 ไล่) แต่มีการปูกกันจำนอนหลายบ่ต่ำกอ่าปีละ 150 เฮักตา (937.5 ไล่)

จิ่นต้องเฮ็ดการเสิมสันทางละบายน้ำล้ินเพื่อเพิ่มคอามบันจุน้ำอีก 2 แสนแม็ดก้อน, เฮ็ดให้คอามบันจุน้ำเพิ่มขึ้นเป้น 2 ล้านแม็ดก้อน.



สำหับผົนผะลิดเข้ำนาแฮงสะเล่ย 4,3 โตน/เฮักตา (688 kg/ไล่) จะได้รับผົนผะลิดลอม 645,000 kg/ปี หากคิดเป้นลาคาสะเล่ย 9 บาด/kg จะมีลายได้คิดเป้นมูนค่าลอม 5,805,000 บาด/ปี.

จากผົนตอบแทนดั่งก่าอ สะเล่ยลอมปีละ 7,650,000 บาด + 5,805,000 บาด = 13,455,000 บาด/ปี หักค่าลงทืนไล่ละปะมาน 60% กำไล 40% จะเหือกำไลปีละ 13,455,000 x 0.40 = 5,382,000 บาด, ดั่งนั้น เมิอคำนอนจากไลยะเอลาการสั่งน้ำมาแล้อ 16 ปี คิดเป้นกำไล 86,112,000 บาด, หักค่าลงทืนก่ำส้างอ่างเกับน้ำพ้อมละบบส่งน้ำ จำนอน 84 ล้านบาด เถิงปะจุบันก่ำถือ่าอู่ทืนแล้อ.

ผืมตอบแทมจาหกาม

พัดทะนาแห้ๆม้ำ



ข้าว 850,000 หท/ปี,พืดอื่มๆ

ผะลิดที่เพิ่มขึ้มจาหเดิมที่เคียเธ็ดได้
มูมค่า 7.6 ล้ามบาด

เอ้ำ 645,000 หท/ปี,พืดอื่มๆ

ปะจุบัมเธ็ดผืมผะลิดได้
มูมค่า 5.8 ล้ามบาด



“ฃาดหืม ถิ ทำไล”

อ่างเก็บม้ำห้อยฮอมก่ำส้างๆ 84 ล้ามบาด
มีละบบชืมละปะหาม
สามาดปูหาเอ้ำ และ พืดอื่มๆ, ล้ำงสัด
ผืมผะลิดหืมแหมสู่ฃาวหะฮิหอม
มูมค่าทำไลถ้ำเพื่อ 5.3 ล้ามบาด/ปี



ສ່ວນຝາຍຫ້ວຍຊີ້ວນັ້ນໃນລະດູຝົນປູກໄດ້ 80 ເຮັກຕາ (500 ໄລ່) ສາມາດເພີ່ມຜົນຜະລິດຈາກ 2,5 ໂຕນ/ເຮັກຕາ (400 kg/ໄລ່) ເປັນ 4.2 ໂຕນ/ເຮັກຕາ (672 kg/ໄລ່) ໄດ້ຜົນຜະລິດທີ່ເພີ່ມຂຶ້ນ 272 kg/ໄລ່ ຄິດເປັນເງິນປະມານ 1,224,000 ບາດ/ປີ

ໃນຂະນະທີ່ລະດູແລ້ງ ຈະປູກໄດ້ 20 ເຮັກຕາ (125 ໄລ່) ໄດ້ຜົນຜະລິດສະເລ່ຍ 4.3 ໂຕນ/ເຮັກຕາ (688 kg/ໄລ່) ຄິດເປັນເງິນປະມານ 774,000 ບາດ.

ຜົນຕອບແທນຈາກຝາຍຫ້ວຍຊີ້ວຕໍ່ປີຈະໄດ້ປະມານ 1,998,000 ບາດ, ຖ້າຄິດໄລ່ລົງທຶນ 60% ກຳໄລ 40% ຈະໄດ້ກຳໄລປີລະປະມານ 799,200 ບາດ.



ການພັດທະນາທີ່ດິນ

ລັກສະນະດິນຂອງພື້ນທີ່ໂຄງການ ສ່ວນໃຫ່ຍເປັນດິນທີ່ມີຄວາມອຸດົມສົມບູນຄ້ອນຂ້າງ ຕ່ຳເຖິງຕ່ຳຫລາຍ ມີປະຕິກິລິຍາຂອງດິນເປັນກົດ ຄ່າຄວາມເປັນກົດເປັນດ່າງປະມານ 4.3 – 5.3 ດິນສ່ວນໃຫ່ຍເປັນຊາຍແປ້ງ ແລະ ຊາຍລະອຽດ ເຮັດໃຫ້ຄຸນສົມບັດທາງກາຍຍະພາບຂອງດິນ ບໍ່ດີ ດິນມີລັກສະນະແນ່ນແຂງ ໄດ້ມີການດຳເນີນການດັ່ງນີ້:









1. ງານປັບປຸງບຳລຸງດິນ

■ ສົ່ງເສີມການສາທິດຜະລິດປຸ໋ຍໝັກໂດຍໃຊ້ສານເລ່ັງຊຸບເປີ ພດ.1 ໄວ້ໃຊ້ໃນ ແປງສາທິດເພື່ອເຮັດໃຫ້ຄຸນນະພາບຂອງດິນມີຄວາມລ່ວນຊຸຍອຸ້ມນ້ຳໄດ້ດີ ມີຄວາມເໝາະສົມ ຕໍ່ການປູກພືດຫຼາຍຂຶ້ນ ແລະ ທັງເຮັດໃຫ້ຊາວກະສິກອນໄດ້ຮຽນຮູ້ວິທີການເຮັດປຸ໋ຍໝັກຈາກ ວັດສະດຸເຫຼືອໃຊ້ທາງການກະເສດ ເຊ່ັນ: ເຟືອງເຂ້ົາ, ເສດຫຍ້າ ແລະ ມູນສັດ ສົ່ງຜົນໃຫ້ຕົ້ນທຶນ ການໃຊ້ປຸ໋ຍເຄມີລົດລົງ ເຮັດໃຫ້ລາຍໄດ້ຂອງຊາວກະສິກອນສູງຂຶ້ນ.

■ ສົ່ງເສີມການຜະລິດປຸ໋ຍໝັກຊີວະພາບ (ປຸ໋ຍໝັກແຫ້ງ) ໃຊ້ສານເລ່ັງຊຸບເປີ ພດ.1 ຮ່ວມກັບນ້ຳໝັກຊີວະພາບ ຊຶ່ງເປັນປຸ໋ຍທີ່ເຮັດໃຫ້ດິນບໍ່ແຂງແກ່ນລ່ວນຊຸຍ ເຮັດໃຫ້ລະບົບ ຫາກພືດຊອກຫາອາຫານໄດ້ງ່າຍຂຶ້ນ ມີທາດອາຫ່ານ ແລະຈຸລິນຊີທີ່ເປັນປະໂຫຍດເພີ່ມຂຶ້ນ ນິຍົມໃຊ້ກັບນາເຂ້ົາ ແລະ ພືດຜັກ ໂດຍໃຊ້ວັດສະດຸທີ່ມີໃນສູນ ເຊ່ັນ: ກ້ອນເຮັດທີ່ບໍ່ສາມາດ ເກັບກ້ອນເຮັດໄດ້ແລ້ວ, ຂີ້ງົວ, ຂີ້ໝູ ແລະ ເສດວັດສະດຸທີ່ເຫຼືອຈາກການລ້ຽງໝູຂຸມ ເປັນຕົ້ນ.

■ ສົ່ງເສີມການຜະລິດປຸ໋ຍໝັກຊີວະພາບໂດຍໃຊ້ສານເລ່ັງຊຸບເປີ ພດ.2 ເພື່ອເພີ່ມຈຸລິນຊີທີ່ເປັນປະໂຫຍດ ແລະ ຮ໋ອກໂມນທີ່ຈຳເປັນຕໍ່ພືດເຮັດໃຫ້ພືດມີການຈະເລີນເຕີບ ໂຕເຕັມທີ່ ຊຶ່ງຊາວກະສິກອນສາມາດປະຍຸກໃຊ້ຮ່ວມກັບປຸ໋ຍໝັກໂດຍຈະສົ່ງຜົນເຮັດໃຫ້ພືດຜັກ ມີການດູດຊັບທາດອາຫານຫລາຍຂຶ້ນ ທັງນີ້ຍັງສົ່ງເສີມໃຫ້ນຳນ້ຳໝັກຊີວະພາບມາໃຊ້ຮ່ວມກັບ ການໄຖກົບເສດຫຍ້າ ເພື່ອປັບໂຄງສ້າງຂອງດິນ ແລະ ເພີ່ມຄວາມອຸດົມສົມບູນຂອງດິນໃຫ້ ມີຫຼາຍຂຶ້ນອີກດ້ວຍ.

■ ສົ່ງເສີມການຜະລິດສານປ້ອງກັນແມງໄມ້ສັດຕູພືດໂດຍໃຊ້ສານເລ່ັງ ພດ.7 ຊຶ່ງຜະລິດຈາກພືດສະໝຸນໄພໃນທ້ອງຖິ່ນເຊ່ັນ: ຫົວສີໄຄ, ຂ່າ, ຂົມກະເດົາ, ເຄືອເຂົາໝໍ ເປັນຕົ້ນ ຊ່ວຍໃຫ້ຊາວກະສິກອນສາມາດລຸດຕົ້ນທຶນການໃຊ້ສານເຄມີ ເຮັດໃຫ້ຜົນຜະລິດມີຄວາມປອດໄພ ຈາກສານພິດ ເປັນທີ່ຕ້ອງການຂອງຕະຫຼາດ ອີກທັ້ງຊາວກະສິກອນມີສຸຂະພາບທີ່ດີ ແລະ ມີລາຍໄດ້ເພີ່ມສູງຂຶ້ນດ້ວຍ.


■ ສົ່ງເສີມການໃຊ້ປຸ໋ຍພືດສົດ ເປັນປຸ໋ຍອິນຊີທີ່ໄດ້ຈາກການໄຖກົບຂະນະທີ່ພືດຍັງ ຂຽວສົດຢູ່ລົງໃນດິນ ໃນຊ່ວງທີ່ພືດເລີ່ມອອກດອກ ປ່ອຍໃຫ້ຍ່ອຍສະລາຍປະມານ 7 – 14 ມື້ ແລ້ວຈຶ່ງປູກພືດຫຼັກຕາມ ເປັນພືດຕະກູນຖົ່ວ ມີປະລິມານໄນໂຕເຈນ ໃນລຳຕົ້ນ,ໃບ ແລະ ຮາກສູງ ຊ່ວຍເພີ່ມປຸຍໃນດິນ ແລະ ເຮັດໃຫ້ດິນມີ ຊ່ອງວ່າງ ລ່ວນຊຸຍ ພືດປຸ໋ຍສົດທີ່ສົ່ງເສີມໃຫ້ປູກ ໄດ້ແກ່ ປໍເທືອງ, ຖົ່ວພຸ່ມ, ຖົ່ວເຫຼືອງ ເປັນຕົ້ນ.



■ ສອນການເກັບຕົວຢ່າງດິນ ແລະ ການວິເຄາະດິນຢ່າງງ່າຍ ດ້ວຍເຄື່ອງມືວິເຄາະດິນຢ່າງງ່າຍ (Soil Test Kit)ເພື່ອປະໂຫຍດ ໃນການວາງແຜນການປູກພືດ ລຸດຕົ້ນທຶນການຜະລິດ ເປັນແນວທາງ ໃນ ການວາງແຜນການຈັດການດິນເພື່ອການປູກພືດທີ່ຖືກຕ້ອງ ໂດຍສອນໃຫ້ ເຈົ້າໜ້າທີ່ພາຍໃນສູນ ໃຫ້ເກີດຄວາມຊຳນານ ແລະ ສາມາດຖ່າຍທອດຄ ວາມຮູ້ໃຫ້ກັບຊາວກະສິກອນຜູ້ທີ່ມີຄວາມສົນໃຈໄດ້.

ສະພາບພື້ນທີ່	ວິທີການ	ຜົນການປະຕິບັດງານ
ແປງນາເຂົ້າ(ນາປີ,ນາແຊງ) (ຈຸດທີ່ 1: N 2003339E233517)	-ປັບປຸງດິນນາລວມ,ໃສ່ປູນຂາວ, ປູກສະໂນອາຟຣິກັນແລະປໍເທືອງເປັນ ຝຸ່ນພືດສົດ 2ຄັ້ງ,ໃສ່ຝຸ່ນຍິ່ມ,ຝຸ່ນຄອກ ແລະ ຝຸ່ນເຄມີ (ຍຸດໃສ່ຕັ້ງແຕ່ປີ 2003)	-ດິນມີອິນຊີວັດຖຸສູງຂຶ້ນຕະຫຼອດຊັ້ນດິນ ໂດຍດິນຊັ້ນເທິງເພີ່ມຈາກ ຮ້ອຍລະ1.06 ເປັນຮ້ອຍລະ 1.58 ປະຕິກິລິຍາຂອງດິນສູງຂຶ້ນຈາກ 4.4 ເປັນ 5.3 ຄວາມເຄັ້ມຂອງດິນຫຼຸດລົງ ຈາກ 0.21 ຫຼື 0.04ds/m
ແປງສອນພືດໄຮ່ (ຈຸດທີ່ 2:N2003390E233584)	-ປູກແຝກຕາມແນວລະດັບ, ປູກສະໂນອາຟຣິກັນແລະປໍເທືອງ, ໃສ່ປູນຂາວປັບປະຕິກິລິຍາຂອງດິນ	-ດິນມີອິນຊີວັດຖຸເພີ່ມຂຶ້ນຈາກ ຮ້ອຍລະ 1.12 ເປັນຮ້ອຍລະ 1.52
ແປງຂະຫຍາຍພັນພືດຝຸ່ນສົດແລະ ແປງຫຍ້າແຝກ (ຈຸດທີ່ 3:N206339E233517)	-ປັບສະພາບພື້ນທີ່,ໃສ່ປູນຂາວ,ຝຸ່ນຍິ່ມ	-ດິນມີອິນຊີວັດຖຸເພີ່ມຂຶ້ນຈາກຮ້ອຍລະ 0.54 ເປັນຮ້ອຍລະ 1.01
ແປງໄມ້ໃຫ້ໝາກ (ຈຸດທີ່ 4: N2003436E233644)	-ໃສ່ປູນຂາວ,ຝຸ່ນຄອກ, ຝຸ່ນເຄມີຕາມ ຊ່ວງເວລາປູກແຝກ	-ດິນມີອິນຊີວັດຖຸເພີ່ມຂຶ້ນຍົກເວັ້ນ pH ສ່ວນໂຊດ່ຽມຫຼຸດລົງຈາກ 1.6 ເຫຼືອ 0.04 ds/m
ແປງນາລວມ (ຈຸດທີ່ 5:N2003600E233713)	-ໃສ່ປູນຂາວ, ຝຸ່ນຍິ່ມປູກສະໂນອາຟຣິກັນ ແລ້ວໄກ່ບ 2-3 ຄັ້ງ	-ດິນມີອິນຊີວັດຖຸເພີ່ມຂຶ້ນ ຈາກຮ້ອຍລະ 1.0 ເປັນຮ້ອຍລະ 1.79

ບໍລິເວນຈຸດເຈາະສຳຫຼວດດິນ ພາຍໃນພື້ນທີ່ສູນພັດທະນາ ແລະ ບໍລິການດ້ານການກະເສດ
ຫ້ວຍຊອນ-ຫ້ວຍຊົ້ວ ເມືອງນາຊາຍທອງ ນະຄອນຫຼວງຢຽງຈັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.




- ● ຈຸດເຈາະສຳຫຼວດດິນ ຊ່ວງປີ 1995
- ● ຈຸດເຈາະສຳຫຼວດດິນ ຊ່ວງປີ 2014-2018


■ ຜົນການສຳຫຼວດ ແລະ ວິເຄາະດິນ: ຈາກການເຝົ້າຕິດຕາມການປ່ຽນແປງ ຄຸນສົມບັດທາງເຄມີ ອັນເກີດຈາກກິດຈະກຳ ການປັບປຸງບຳລຸງດິນ ພາຍໃນບໍລິເວັນພື້ນທີ່ສູນ ຕັ້ງ ແ ຕ່ ປີ 1995 ເຖິງ 2018 ພົບວ່າຄຸນສົມບັດທາງເຄມີຂອງດິນມີການປ່ຽນແປງທີ່ດີຂຶ້ນ ທັງດິນເທິງ ແລະ ລຸ່ມ ເຊິ່ງສະແດງໃຫ້ເຫັນເຖິງດິນບໍລິເວັນພາຍໃນສູນ ມີຄວາມອຸດົມສົມບູນ ໂດຍທຳມະຊາດຫຼາຍຂຶ້ນ ແລະ ເໝາະສຳຫຼັບການປູກພືດ.

ແຜນການສະແດງ**ຄວາມອຸດົມສົມບູນ**ຂອງ**ດິນ**ໃນ**ພື້ນທີ່ສູນ**


ອິນຊີວັດຖຸ(%om)




ຟົດສະຟໍລັດ(ppm)



ໂພເທັກຊຽມ (ppm)




ບັນຈຸບວກ (me/100g)





ກົດ-ດ່າງ (pH)



ດິນເທິງ

ດິນລຸ່ມ

ຄວາມອຸດົມສົມບູນຂອງດິນໃນພື້ນທີ່ສູນ ເລີ່ມສ້າງໂຄງການ ທຽບກັບປະຈຸບັນ(ປີ 1995-2018)



ຊ່ວງຕົ້ນໂຄງການ ປີ 1995

ປັດຈຸບັນ ປີ 2018

ຕາຕະລາງການປ່ຽນແປງຄວາມອຸດົມສົມບູນຂອງດິນໃນພື້ນທີ່ສູນ.

ປີ	% OM		P(pp)		K(ppm)		CEC (me/100g)		pH	
	ດິນເທິງ	ດິນລ່າງ	ດິນເທິງ	ດິນລ່າງ	ດິນເທິງ	ດິນລ່າງ	ດິນເທິງ	ດິນລ່າງ	ດິນເທິງ	ດິນລ່າງ
1995	1.06	0.53	63.00	22.00	2.00	2.00	7.50	9.20	4.40	4.70
2004	1.58	0.91	9.71	20.01	7.00	2.20	7.50	5.75	5.30	5.20
2007	1.31	1.08	14.45	26.25	22.50	69.77	10.36	12.60	5.10	5.30
2011	1.79	0.84	16.54	21.05	24.03	6.39	12.25	13.60	5.50	5.20
2015	1.80	0.92	20.25	14.55	30.50	39.25	13.25	15.15	5.60	5.40
2018	1.85	0.98	22.55	17.65	31.40	39.50	13.80	14.65	5.80	5.40

2. ງານອານຸລັກດິນ ແລະ ນ້ຳ

ຊາວກະສິກອນໄດ້ຮັບຄວາມຮູ້ໃນການຂະຫຍາຍພັນຫຍ້າແຝກ ໂດຍສາມາດຜະລິດ ສົ່ງ ຂາຍ ໃຫ້ກັບສູນ ໃນສ່ວນກິດຈະການແຈກຈ່າຍຫຍ້າແຝກ ມີຊາວກະສິກອນສົນໃຈຂໍຮັບ ບໍລິການຈ່າຍຫຍ້າແຝກນຳໄປປູກໃນພື້ນທີ່ຂອງຕົນເອງເຊັ່ນ: ບໍລິເວນຂອບໜອງປາ ແລະ ຄັນນາ ເປັນ ຕົ້ນ ເພື່ອອານຸລັກດິນ ແລະ ນ້ຳລຸດການຊໍ້ເຈື່ອນຂອງໜ້າດິນ ລວມເຖິງພາກເອກະຊົນ ທີ່ຂໍຮັບ ພັນຫຍ້າແຝກໄປປູກ ເພື່ອປ້ອງກັນການຊະລ້າງ ແລະ ຊໍ້ເຈື່ອນຂອງໜ້າດິນເຊັ່ນ: ໂຄງການນ້ຳເທີນ II ແລະ ໂຄງການບ້ານບໍ່ທອງ ແຂວງຄຳມ່ວນ ເປັນຕົ້ນ.



3. ງານສຳຫຼວດ ແລະ ການໃຊ້ປະໂຫຍດທີ່ດິນ

ຈາ ກການ ສົ່ງເສີມການໃຊ້ປະໂຫຍດທີ່ດິນໃຫ້ເໝາະສົມ ເຮັດໃຫ້ຊາວກະສິກອນ ປ່ຽນວິທີການເຮັດການກະເສດແບບເຊີງດ່ຽວ ມາເປັນການກະເສດແບບປະສົມປະສານ.

4. ງານເຝິກອົບຮົມ ແລະ ຖ່າຍທອດເທັກໂນໂລຢີການກະເສດ

ເຮັດໃຫ້ຊາວກະສິກອນທີ່ເຂົ້າຮ່ວມການເຝິກອົບຮົມ ເຂົ້າໃຈ ແລະ ຮຽນຮູ້ວິທີການເກັບ ຕົວຢ່າງດິນ ການວິເຄາະດິນເບື້ອງຕົ້ນ ການວາງແຜນໃຊ້ທີ່ດິນ ການປັບປຸງບຳລຸງດິນຢ່າງຖືກວິທີ ເຊັ່ນ: ການໄຖກົບເສດຫຍ້າ ແລະ ການໃຊ້ປຸຍພືດສົດ ຮ່ວມກັບການໃຊ້ປຸຍໝັກ ນ້ຳໝັກຊີວະພາບ ເປັນຕົ້ນ.

ຊາວກະສິກອນສາມາດຜະລິດປຸຍໝັກໂດຍໃຊ້ສານເລ່ັງຈຸລິນຊີ ພດ. 1 ນ້ຳໝັກຊີວະ ພາບໂດຍໃຊ້ສານເລ່ັງຈຸລິນຊີ ພດ.2 ສານປ້ອງກັນແມງໄມ້ສັດຕູພືດໃຊ້ສານເລ່ັງ ພດ.7 ສຳຫຼັບ ນ ຳ ມ າໃຊ້ ໃນພື້ນທີ່ປູກຂອງຕົນເອງຜົນຜະລິດເພີ່ມຫຼາຍຂຶ້ນ ຕົ້ນທຶນການຜະລິດລຸດຕ່ຳລົງ ເປັນແບບຢ່າງທີ່ສາມາດແນະນຳໃຫ້ແກ່ກຸ່ມຊາວກະສິກອນໃນທ້ອງຖິ່ນໄດ້ຕໍ່ໄປ.





ການພັດທະນາດ້ານກະສິກຳ

ອາຊີບໂດຍທົ່ວໄປຂອງຊາວກະສິກອນໃນພື້ນທີ່ອ້ອມຂ້າງສູນ ມີລັກສະນະບໍ່ແຕກຕ່າງໄປຈາກຊຸມຊົນ ຊົນນະບົດຂອງປະເທດໄທທີ່ປະກອບອາຊີບກະເສດຕະກຳ ຄື: ເຮັດນາ, ເຮັດສວນ, ເຮັດໄຮ່, ຫາຂອງປ່າ ແລະ ຊາວກະສິກອນບາງຄົນໄດ້ປັບປ່ຽນອາຊີບໄປຮັບຈ້າງແຮງງານ, ເຮັດທຸລະກິດຄ້າຂາຍ ແລະ ມີການອອກໄປຮັບຈ້າງທົ່ວໄປນອກຊຸມຊົນ



ບັນຫາຂອງການພັດທະນາກະສິກຳທີ່ພົບຄື: ເລື່ອງຂອງປະສິດທິພາບການຜະລິດທີ່ອາໃສການຜະລິດແບບດັ້ງເດີມຄື: ປູກເຂົ້າປີລະຄັ້ງໂດຍອາໃສນ້ຳຝົນ ແລະ ມີບາງສ່ວນເປັນພື້ນທີ່ໂຄກ ຫ າ ກຝົນບໍ່ຕົກຕາມລະດູການ ເຮັດໃຫ້ຜົນຜະລິດເຂົ້າບໍ່ດີເທົ່າທີ່ຄວນ ນອກຈາກນີ້ຍັງມີບັນຫາໃນເລື່ອງແມງໄມ້ສັດຕູພືດ, ບັນຫາໃນເລື່ອງດິນທີ່ຂາດຄວາມອຸດົມສົມບູນ ຕະຫຼອດຈົນການຂະຫຍາຍຕົວເມືອງເພີ່ມຂຶ້ນ ແລະ ເທດໂນໂລຍີໃນການເພີ່ມຜົນຜະລິດ ພືດທີ່ຂາດຄວາມຮູ້ຄວາມເຂົ້າໃຈ ໂດຍມີການດຳເນີນການດັ່ງນີ້:

1. ກິດຈະກຳເຂົ້າ ດຳເນີນການຜະລິດເມັດພັນດີ ເປັນທີ່ຍິ່ງມບໍລິໂພກ, ໃຫ້ຜົນຜະລິດຕໍ່ໄລ່ສູງ, ມີຄວາມຕ້ານທານໂລກ ແລະ ແມງໄມ້ເຊັ່ນ: ພັນເຂົ້າພັນຫອມທ່າດອກຄຳ1, ທ່າສະໂນ 3, ພັນເຂົ້າ CR- 203 ແລະ Q5 ສຳລັບແຈກຈ່າຍໃຫ້ຊາວກະຊິກອນໃນພື້ນທີ່ອ້ອມຂ້າງສູນ ແລະ ຊາວກະສິກອນທົ່ວໄປທີ່ສົນໃຈ ໂດຍໃຊ້ຂະບວນການຜະລິດເຂົ້າປອດໄພ ເພື່ອພັດທະນາສູ່ການຜະລິດເຂົ້າອິນຊີ, ຜົນຜະລິດທີ່ໄດ້ໃນລະດູນາປີ ສະເລ່ຍ 475 ກິໂລກຣາມຕໍ່ໄລ່ ຫຼື ສະເລ່ຍ 47.5 ຖັງຕໍ່ໄລ່, ລະດູນາແຊງ ສະເລ່ຍ 560 ກິໂລກຣາມຕໍ່ໄລ່ ຫຼື ສະເລ່ຍ 56 ຖັງຕໍ່ໄລ່, ການຜະລິດເຂົ້າ ທ ັ ງສ ອງລະ ດ ູ ຜ ະລິດປູກໂດຍລະບົບກະສິກຳອິນຊີໃຊ້ຝຸ່ນຄອກ, ຝຸ່ນບົ່ມຊີວະພາບ ແລະ ນ້ຳໝັກຊີວະພາບ. ໂດຍສະເພາະການຜະລິດ ພັນເຂົ້າ CR 203 ໃຫ້ຜົນຜະລິດສະເລ່ຍ 550-650 ກິໂລກລາມຕໍ່ໄລ່, ເຂົ້າພັນນ້ຳຕານໃຫ້ຜົນຜະລິດສະເລ່ຍ 520-600 ກິໂລກຣາມຕໍ່ໄລ່

ຂໍ້ມູນດ້ານການຜະລິດ	ປີ 1994	ປີ 2004	ປີ 2009	ປີ 2014	ປີ 2019
1 ພັນເຂົ້າ	ພື້ນເມືອງ	ພື້ນເມືອງ	ນ້ຳຕານ,CR-203ພື້ນເມືອງ, ສັນປາຕອງ	ທ່າດອກຄຳ1,3,8,11 ທ່າສະໂນ 1	ທ່າດອກຄຳ1,ທ່າສະໂນ3, CR-203,Q5
2 ພື້ນທີ່ປູກເຂົ້າ(ເຮັກຕາ)	100	100	350	500	400
3 ຜົນຜະລິດສະເລ່ຍ (ໂຕນ/ເຮັກຕາ)	2.87	3	3.5	4.3	3.8
4 ມູນຄ່າລວມ (ລ້ານກີບ)	358.75	675	214	483	580

ການຜະລິດເຂົ້າໃນພື້ນທີ່ຂອງສູນ

ປີ 1994

ພັນພື້ນເມືອງ

ຜົນຜະລິດ 287 ໂຕນ/ເຮັກຕາ
ພື້ນທີ່ປູກ 100 ເຮັກຕາ
ມູນຄ່າລວມ 309 ລ້ານກີບ





ນາແຊງ 560 ກິໂລກຣາມ/ໄລ່

ປີ 2019

ພັນທ່າດອກຄຳ1,ທ່າສະໂນ3,CR-203,Q5

ຜົນຜະລິດ 38 ໂຕນ/ເຮັກຕາ
ພື້ນທີ່ປູກ 400 ເຮັກຕາ
ມູນຄ່າລວມ 560 ລ້ານກີບ





ນາປີ 475 ກິໂລກຣາມ/ໄລ່

2. ກິດຈະກຳໄມ້ໃຫ້ໝາກ ແລະ ໄມ້ຍືນຕົ້ນ

2.1 ແປງສາທິດການຜະລິດໄມ້ໃຫ້ມາກໃນພື້ທີ່ 10 ໄຮ່ ເຊັ່ນ: ໝາກມ່ວງ, ລີ້ນຈີ່, ລຳໄຍ, ມະຍົງສິດ ແລະ ສົ້ມໂອ, ໝາກນາວໃນແຫ່ງສ້າງ.

2.2 ແປງສາທິດການຜະລິດຮູບແບບຕ່າງໆເຊັ່ນ: ໄຜ່ຕົງ, ໄຜ່ຫວານ, ເກດສະໜາ ແລະ ອື່ນໆ ສຳລັບເປັນບ່ອນຮຽນຮູ້.

2.3 ການປູກພືດເພື່ອສຶກສາຄວາມເປັນໄປໄດ້ໃຫ້ເປັນຈຸດຮຽນຮູ້ໃນຮູບແບບການຜະລິດຕ່າງໆ ເຊັ່ນ: ການທົດລອງປູກຢາງພາລາ ແລະ ການປູກພືດທົດແທນພະລັງງານ ຫຼື ພືດພະລັງງານທາງເລືອກໄດ້ແກ່: ການທົດລອງປູກປາມນ້ຳມັນສຸລາດທານີ 2 ອາຍຸ 8-10 ປີ ມີຈຳນວນທະລາຍຕໍ່ຕົ້ນເທົ່າກັບ 3,33 ທະລາຍ, ນ້ຳໜັກຕໍ່ທະລາຍ 15,6ກິໂລກາລາມຕໍ່ຕົ້ນ ແລະ ນ້ຳໜັກທະລາຍຕໍ່ໄລ່ຕໍ່ປີເທົ່າກັບ 2,14 ໂຕນ



2.4 ໄມ້ໃຫ້ໝາກທີ່ດຳເນີນການສຳເລັດແລ້ວໄດ້ແກ່:

- ລີ້ນຈີ່ພັນນະຄອນພະນົມ 1 ໃຫ້ຜົນຜະລິດສະເລ່ຍ 733 ກິໂລກາລາມຕໍ່ໄລ່ຕໍ່ປີ ແລະ ຂະຫຍາຍງ່ຳພັນດີ ຈຳນວນ 1,500 ງ່ຳຕໍ່ປີ,
- ການຜະລິດສົ້ມໂອພັນທອງດີໃຫ້ຜົນຜະລິດສະເລ່ຍ 1,785 ກິໂລກາລາມຕໍ່ໄລ່ ແລະ ຂະຫຍາຍງ່ຳພັນດີ ຈຳນວນ 800 ງ່ຳ
- ການຜະລິດໝາກນາວໃນແຫ່ງສ້າງໃຫ້ຜົນຜະລິດສະເລ່ຍ 11,925 ໜ່ວຍຕໍ່ໄລ່ຕໍ່ປີ, ຂະຫຍາຍກ່ຳພັນດີ ຈຳນວນ 1,800 ງ່ຳ.

ຜົນຜະລິດທີ່ໄດ້ນຳອອກຈຳໜ່າຍເພື່ອເປັນລາຍໄດ້ໝູນວຽນພາຍໃນສູນ ແລະ ແຈກຍາຍໃຫ້ຊາວກະຊິກອນຜູ້ທີ່ສົນໃຈເຂົ້າມາສຶກສາດູງານ, ຂະຫຍາຍຜົນສູ່ຊາວກະສິກອນໃນພື້ນທີ່ໝູ່ບ້ານເປົ້າໝາຍ ແລະ ຕ່າງແຂວງຕາມເງື່ອນໄຂ.

ຂໍ້ມູນດ້ານການຜະລິດ	ປີ 1994	ປີ 2004	ປີ 2009	ປີ 2014	ປີ 2019
1 ໝາກມ່ວງ	5,000	5,000	5,000	5,000	5,000
2 ລີ້ນຈີ່	1,000	1,000	2,000	2,000	7,500
3 ລຳໄຍ	1,000	1,000	2,000	2,000	3,000
4 ໄມ້ໃຫ້ໝາກຊະນິດອື່ນໆ (ໝາກຫຸ່ງ,ໝາກຄຽບ,ໝາກນາວ,ສົ້ມໂອ)	5,000	5,000	5,000	5,000	4,000
ລວມ	12,000	12,000	14,000	14,000	19,500

3. ກິດຈ ະກຳຜັກ ໃນແຕ່ລະປີສູນ ດຳເນີນການສົ່ງເສີມກິດຈະກຳການປູກພືດຜັກ ໄດ້ແກ່ ຊາວກະສິກອນ ດັ່ງນີ້:

3.1 ດ ຳເນີນການປູກຜັກຊະນິດຕ່າງໆ ດ້ວຍລະບົບກະສິກຳອິນຊີໃນພື້ນທີ່ສູນ ເພື່ອເປັນຕົ້ນແບບ ໃຫ້ແກ່ຊາວກະສິກອນ ໂດຍໄດ້ຜົນຜະລິດ ດັ່ງນີ້: ກະລ່ຳປີ ສະເລ່ຍ 3,500 ກິໂລກລາມຕໍ່ໄລ່, ບ໋ອກໂຄລີ ສະເລ່ຍ 3,000 ກິໂລກລາມຕໍ່ໄລ່, ຜັກກາດນາ ສະເລ່ຍ 2,200 ກິໂລກລາມຕໍ່ໄລ່, ຜັກກວາງຕຸ່ງດອກ ສະເລ່ຍ 2,000 ກິໂລກລາມຕໍ່ໄລ່, ຜັກສະລັດ ຜົນຜະລິດ ສະເລ່ຍ 2,700 ກິໂລກລາມຕໍ່ໄລ່, ຜັກບົ້ງ ຜົນຜະລິດ ສະເລ່ຍ 2,500 ກິໂລກລາມຕໍ່ໄລ່.



3.2 ແປງສາທິດການຜະລິດຜັກລະດູຝົນ ໂດຍມຸ່ງຫຼັງຄາພລາສະຕິກໃສຄຸມແປງ ເຊັ່ນ ຜົນຜະລິດສະເລ່ຍ ຜັກຫອມປ້ອມ 1,500 ກິໂລກລາມຕໍ່ໄລ່ ແລະ ການຜະລິດພືດພື້ນບ້ານເຊັ່ນ: ໝາກເພັດ, ໝາກເຂືອເພາະ, ໝາກບວບ, ຖົ່ວຟັກຍາວ ຜົນຜະລິດ ສະເລ່ຍ 1,200 ກິໂລກລາມຕໍ່ໄລ່ ຊຶ່ງຂາຍໄດ້ລາຄາດີ ແລະ ຕະຫຼາດມີຄວາມຕ້ອງສູງ.



4. ກິດຈະກຳພືດໄຮ່ ດຳເນີນການຜະລິດພືດໄຮ່ຕາມຫຼັກວິຊາການກະສິກຳ ເພື່ອເປັນຈຸດຮຽນຮູ້ການຜະລິດທີ່ເໝາະສົມ ແລະເປັນແປງຕົ້ນແບບໃຫ້ແກ່ຊາວກະສິກອນທົ່ວໄປທີ່ສົນໃຈ ໂດຍໄດ້ຜົນຜະລິດຈາກການຜະລິດສາລີຫວານ ຜົນຜະລິດສະເລ່ຍ 1,965 ກິໂລກລາມຕໍ່ໄລ່ ແລະ ການຜະລິດສາລີເຂົ້າໜຽວ ຜົນຜະລິດສະເລ່ຍ 1,715 ກິໂລກລາມຕໍ່ໄລ່.



5. ກິດຈະກຳການຜະລິດເຫັດ ດຳເນີນການຈັດຕັ້ງໂຮງເຮືອນ ຈຳນວນ 3 ຫຼັງ ໃນແຕ່ລະປີທີ່ຜ່ານມາມີການຜະລິດຫົວເຊື້ອເຫັດ ຂອນຂາວ, ເຫັດບົດ, ເຫັດນາງຟ້າ ແລະ ເຫັດນາງລົມ ຊຸກຍູ້ສົ່ງເສີມຊາວກະສິກອນທີ່ມາສຶກສາດູງານ ແລະ ຂະຫຍາຍຜົນສູ່ຊາວກະສິກອນໃນພື້ນທີ່ໜູ່ບ້ານເປົ້າໝາຍ ລວມປີລະ 15,000 ກ້ອນ, ການຜະລິດຫົວເຊື້ອເຫັດໃນເມັດພືດ ປີລະ 1,500 ແກ້ວ, ຜະລິດຫົວເຊື້ອເຫັດໃນອາຫານວຸ້ນ ຈຳນວນ 225 ແກ້ວ, ຜົນຜະລິດເຫັດນາງຟ້າ ແລະ ນາງລົມ ຈຳນວນ 4,500 ກ້ອນ ຜົນຜະລິດ 1,225 ກິໂລກລາມຕໍ່ລອບການຜະລິດ, ເຫັດຂອນຂາວ ຈຳນວນ 2,500 ກ້ອນ ຜົນຜະລິດ 320 ກິໂລກລາມຕໍ່ລອບການຜະລິດ.

6. ກິດຈະກຳອື່ນໆ

- ແປງສາທິດການປູກມອນເຊັ່ນ: ພັນບູລິລຳ 60 ໂດຍສາມາດຂະຫຍາຍພັນໄດ້ປີລະປະມານ 5,000 ທ່ອນ.

ຂໍ້ມູນດ້ານການຜະລິດ	ປີ 1994	ປີ 2004	ປີ 2009	ປີ 2014	ປີ 2019
1 ການຜະລິດເຫັດຂອນຂາວ,ນາງຟ້າ,ນາງລົມ(ກ້ອນ)	1,000	2,000	5,000	10,000	12,500
2 ການຜະລິດຫົວເຊື້ອເຫັດໃນວຸ້ນ(ແກ້ວ)	50	50	80	100	225
3 ການຜະລິດຫົວເຊື້ອເຫັດໃນເມັດພືດ(ແກ້ວ)	150	150	500	500	500
4 ການຜະລິດຫົວເຊື້ອເຫັດໃນເມັດເຂົ້າ(ແກ້ວ)	500	500	1,000	2,000	12,500





- ການຜະລິດດອກໄມ້-ໄມ້ປະດັບເຊັ່ນ: ການຂະຫຍາຍພັນເຟື່ອງຟ້າ ປີລະ 600 ກະຖັງ.
- ການຂະຫຍາຍພັນຊາທອງ ປີລະ ປະມານ 9,000 ຖົງ.
- ການປູກພືດທົດແທນພະລັງງານ ເພື່ອເປັນແປງຕົ້ນແບບສຳຫຼັບການຂະຫຍາຍພັນເຊັ່ນ: ມັນຕົ້ນ(ພັນລະຍອງ7 ແລະ ລະຍອງ 9) ແລະ ອ້ອຍ.

7. ການຝຶກອົບຮົມ ແລະ ສົ່ງເສີມວິຊາການ ຈັດຝຶກອົບຮົມເພື່ອຖ່າຍຖອດຄວາມຮູ້ເທັກໂນໂລຢີໃນການຜະລິດພືດໃຫ້ກັບຊາວກະສິກອນ ໄດ້ດຳເນີນການປີລະ 80 ຄົນ ຈຳນວນ 2 ລຸ່ນ (ລຸ່ນລະ 40 ຄົນ) ໂດຍມີຫົວຂໍ້ການອົບຮົມທີ່ຫຼາກຫຼາຍເຊັ່ນ: ການຜະລິດເຂົ້າປອດໄພ, ການຜະລິດຜັກປອດສານພິດ, ການຜະລິດໄມ້ໃຫ້ໝາກ, ການຜະລິດພືດໄຮ່ ການຂະຫຍາຍພັນພືດ, ການເພາະເຫັດເສດຖະກິດ ແລະ ອື່ນໆ.



ຖານຄວາມຮູ້ການພັດທະນາດ້ານວິຊາການກະເສດ

1. ກິດຈະກຳເທັກໂນໂລຢີການຜະລິດເຂົ້າອິນຊີ

ເທັກໂນໂລຢີການຜະລິດເຂົ້າອິນຊີ ທົດສອບລະບົບການຜະລິດເຂົ້າໃນພື້ນທີ່ສູນ ໂດຍການໃຊ້ຝຸ່ນຄອກ 1.5 ໂຕນຕໍ່ໄລ່ຮອງພື້ນ ແລະ ຝຸ່ນຍ່ຳຊີວະພາບ ອັດຕາ 250 ກິໂລກລາມຕໍ່ໄລ່, ນ້ຳໝັກຊີວະພາບ ອັດຕາ 4 ລິດຕໍ່ໄລ່ ກ່ອນໄຖຮຸດ ແລ້ວຄາດຄົບ ແລະ ປັກດຳ ເຫັນວ່າ ເທັກໂນໂລຊີການຜະລິດເຂົ້າອິນຊີບໍ່ໄດ້ເຮັດໃຫ້ຜົນຜະລິດເຂົ້າແຕກຕ່າງຈາກວິທີການໃຊ້ປຸ໋ຍເຄມີ ໃນປີທຳອິດແຕ່ເຮັດໃຫ້ຕົ້ນທຶນການໃຊ້ປຸ໋ຍຫຼຸດລົງຈາກ 375,000 ກີບ/ໄລ່ (1,500 ບາດ) ໄປເປັນ 125,000 ກີບ/ໄລ່ (500 ບາດ) ຊຶ່ງຫຼຸດລົງຫຼາຍກວ່າຮ້ອຍລະ 70 ໃນຂະນະທີ່ຜົນຜະລິດມີແນວໂນ້ມເພີ່ມຂຶ້ນໃນປີຕໍ່ມາ ເຊິ່ງພົບວ່າເຂົ້າພັນ CR- 203 ໄດ້ຜົນຜະລິດ 550 ກິໂລຕໍ່ໄລ່, ເຂົ້າ Q5 ໃຫ້ຜົນຜະລິດສະເລ່ຍ 700 ກິໂລກລາມຕໍ່ໄລ່, ເຂົ້າພັນທ່າດອກຄຳ1 ໃຫ້ຜົນຜະລິດສະເລ່ຍ 750 ກິໂລຕໍ່ໄລ່ ຫຼື ປະມານ 4,5 ໂຕນຕໍ່ເຮັກຕາ ເນື່ອງຈາກດຳເນີນການໃນພື້ນທີ່ຂະໜາດນ້ອຍສາມາດຄວບຄຸມລະດັບນ້ຳໄດ້ຕະຫຼອດຊ່ວງເວລາການປູກ ແລະ ຂະບວນການຜະລິດເຂົ້າອິນຊີຍັງເຮັດໃຫ້ສາມາດລຸດການໃຊ້ປຸ໋ຍເຄມີ ຜົນຜະລິດມີການເພີ່ມຂຶ້ນໃນປີຕໍ່ມາ

2. ກິດຈະກຳເທັກໂນໂລຢີການຜະລິດຜັກອິນຊີ





ເທັກໂນໂລຢີການຜະລິດຜັກອິນຊີ ທົດສອບລະບົບການຜະລິດຜັກໃນພື້ນທີ່ສູນ ມີການທົດສອບຜັກຫຼາຍຊະນິດຕາມລະດູການເຊັ່ນ: ກະລ່ຳປີ, ບ່ອກໂຄລີ, ຜັກກາດຊອມ (ຜັກກວາງຕຸ້ງ), ຖົ່ວຝັກຍາວ ໂດຍໃຊ້ຝຸ່ນບົ່ມຊີວະພາບ ອັດຕາ 1,000 ກິໂລກລາມຕໍ່ໄລ່ ຮອງພື້ນກ່ອນປູກ ຫຼັງຈາກນັ້ນມີການໃສ່ຝຸ່ນບົ່ມຊີວະພາບ ອັຕາ 500 ກິໂລກລາມຕໍ່ໄລ່ ທຸກໆ 15 ວັນ ແລະ ໃຊ້ນ້ຳໝັກຊີວະພາບ ປະສົມນ້ຳ ອັດຕາ 100 ຊີຊີ ຕໍ່ນ້ຳ 20 ລິດຫົດທຸກ 3-5 ວັນ ພົບວ່າກະລ່ຳປີ ສະເລ່ຍ 3,500 ກິໂລກລາມຕໍ່ໄລ່, ບ່ອກໂຄລີ ຜົນຜະລິດສະເລ່ຍ 3,000 ກິໂລຕໍ່ໄລ່, ຜັກກາດນາ ຜົນຜະລິດສະເລ່ຍ 2,200 ກິໂລກລາມຕໍ່ໄລ່, ກວາງຕຸ່ງດອກ ຜົນຜະລິດສະເລ່ຍ 2,000 ກິໂລກລາມຕໍ່ໄລ່, ຜັກສະລັດ ຜົນຜະລິດສະເລ່ຍ 2,700 ກິໂລກລາມຕໍ່ໄລ່, ຜັກບົ້ງ ຜົນຜະລິດສະເລ່ຍ 2,500 ກິໂລກລາມຕໍ່ໄລ່, ຫອມປ້ອມ ຜົນຜະລິດສະເລ່ຍ 1,500 ກິໂລກລາມຕໍ່ໄລ່, ແລະ ການຜະລິດພືດພື້ນບ້ານ ໜາກເພັດ, ໜາກເຂືອເພາະ, ໜາກບວບ, ຖົ່ວຝັກຍາວ ຜົນຜະລິດສະເລ່ຍ 1,200 ກິໂລກລາມຕໍ່ໄລ່, ຊຶ່ງຂາຍໄດ້ລາຄາດີ ແລະ ຕະຫຼາດມີຄວາມຕ້ອງການສູງ ແລະ ຍັງສາມາດລຸດການໃຊ້ປຸ໋ຍເຄມີລົງໄດ້ ຊຶ່ງມີຄວາມປອດໄພຕໍ່ຂະບວນການຜະລິດ ແລະ ສິ່ງແວດລ້ອມໄດ້ຢ່າງຍັ່ງຍືນ.

3. ກິດຈະກຳເທັກໂນໂລຢີການຜະລິດໜາກນາວໃນລະດູແລ້ງ

ເທັກໂນໂລຍີການປູກໜາກນາວໃນລະດູແລ້ງ ໂດຍບັງຄັບໃຫ້ໄດ້ຜົນຜະລິດນອກລະດູ ໂດຍໃຊ້ວິທີຢຸດການໃຫ້ນ້ຳໃນຊ່ວງເດືອນຕຸລາຫາເດືອນພະຈິກ ສາມາດເຮັດໄດ້ທຸກສາຍພັນ ໂດຍປູກໃນອ່າງຊີເມັນ ພ້ອມຝາຂະໜາດເສັ້ນຜ່າສູນກາງ 90-110 ແມັດ ວາງໃນໄລຍະ 3x4 ແມັດ (134 ຕົ້ນຕໍ່ໄລ່) ປະສົມດິນ, ຝຸ່ນຄອກ ແລະ ແກບເຜົ່າ ອັດຕາ 2:1:1 ໃສ່ເພີ່ມຕື່ມຝຸ່ນບົ່ມເສດເປືອກຖົ່ວ, ໃສ່ປຸ໋ຍເຄມີສູດ 15-15-15 ຮອງພື້ນກ່ອນປູກ ໃນອັດຕາ 100 ກລາມຕໍ່ຂຸມ ໃຫ້ນ້ຳທຸກ ເຊົ້າ-ແລງ ຫຼັງປູກ ໃສ່ປຸ໋ຍເຄມີສູດ 12-24-12 ໃນອັດຕາ 100-200 ກລາມຕໍ່ຕົ້ນ ຈົນເຖິງໄລຍະອອກດອກ ແລະ ໃຊ້ເຟືອງ ຫຼື ຫຍ້າແຫ້ງ ຄຸມໂຄນຕົ້ນ, ຕັດແຕ່ງກິ່ງເປັນປະຈຳ ໃສ່ດິນປູກແລະ ໃສ່ຝຸ່ນຄອກເພີ່ມ ເຊິ່ງພົບວ່າໜາກນາວໃນລະດູແລ້ງ ໃຫ້ຜົນຜະລິດສະເລ່ຍ 11,925 ໜ່ວຍຕໍ່ໄລ່ຕໍ່ປີ ແລະຍັງສາມາດຂະຫຍາຍງ່າພັນດີ ຈຳນວນ 1,800 ງ່າ ໃຫ້ແກ່ຊາວກະສິກອນທີ່ສົນໃຈ.



4. ການປູກເຫັດເສດຖະກິດ ແລະ ເຫັດພື້ນເມືອງ

ຂັ້ນຕອນການຜະລິດກ້ອນເຊື້ອເຫັດ ແລະການຜະລິດເຫັດ ໂດຍໃຊ້ວັດສະດຸປູກເຫັດ ດັ່ງນີ້:



ຂີ້ເລື່ອຍ 100 ກິໂລກລາມ, ຮຳລະອຽດ 5 ກິໂລກລາມ, ປູນຂາວ 1 ກິໂລກລາມ, ດິເກືອ 0.2 ກິໂລກລາມ, ວິທີເຮັດ ປະສົມສູດອາຫານທັງໝົດເຂົ້າເປັນເນື້ອດຽວກັນ ເພີ່ມຄວາມຊຸ່ມ ໂດຍການຫົດນ້ຳລົງໄປໃຫ້ມີຄວາມຊຸ່ມ 60% ນຳສ່ວນປະສົມບັນຈຸລົງໃນຖົງຢາງພາລາສະຕິກ ທົນຮ້ອນຂະໜາດ 6.5 x 12.5 ນິ້ວ ນ້ຳໜັກ 800 ກລາມຕໍ່ຖົງ ອັດໃຫ້ແໜ້ນພໍສົມຄວນໃສ່ຄໍພລາສະຕິກ ອັດດ້ວຍສຳລີ ແລະ ປິດດ້ວຍກະດາດ ແລ້ວນ້ຳໄປໜຶ່ງຂ້າເຊື້ອ ແບບໃຊ້ຄວາມດັນ 3 ຊົ່ວໂມງ ອຸນະພູມມີ 100 ອົງສາເຊ ເມື່ອຄົບຕາມເວລາໜຶ່ງຂ້າເຊື້ອປ່ອຍໃຫ້ເຢັນແລ້ວໃສ່ເຊື້ອເຫັດ ຈາກເມັດເຂົ້າຝ້າງ ແລະ ພັກເຊື້ອ 90-120 ວັນ ໂດຍການເກັບໄວ້ໃນໂຮງພັກເຊື້ອບ່ໃຫ້ຖືກ ແສງແດດ ແລະຄວາມຊຸ່ມ ຫາກພົບວ່າເຫັນກ້ອນເຊື້ອເຫັດເກີດລາດຳ ຫຼື ລາຂຽວໃຫ້ແຍກອອກ ເພື່ອທຳລາຍຖີ້ມທັນທີ.

ວິທີການເປີດດອກເຫັດນາງຟ້າ ການເປີດດອກເຮັດໄດ້ໂດຍການດຶງສຳລີທີ່ອັດ ຫຼື ເປີດຖົງອອກ ຫົດນ້ຳໃຫ້ຄວາມຊຸ່ມພາຍໃນໂຮງເຮືອນ ເຊົ້າ, ສວຍ, ແລງ ແຕ່ລະວັງຢ່າ ໃຫ້ນ້ຳເຂົ້າຖົງກ້ອນເຊື້ອ ເພາະຈະເຮັດໃຫ້ກ້ອນເຊື້ອເນົ່າ ແລະ ເສຍຫາຍໄວ ຫຼັງຈາກເປີດຖົງ ໄດ້ 14 ວັນ ການເກັບກ່ຽວດອກເຫັດ ໃຊ້ມືຈັບດອກເຫັດແລ້ວດຶງເບົາໆໂດຍໄປທາງຊ້າຍ ແລະ ຂວາ ດອກເຫັດຈະລຸດອອກມາ ຢ່າໃຫ້ມີເສດຂອງກ້ານເຫັດຕິດຢູ່ໃນປາກຖົງເພາະ ຈະເຮັດໃຫ້ກ້ອນເຊື້ອເຫັດເນົ່າ ເກັບຜົນຜະລິດທຸກວັນຕອນເຊົ້າ ແລະ ຕອນແລງ ຫຼັງເກັບດອກເຫັດ ຫົດນ້ຳເພື່ອປັບສະພາບຄວາມຊຸ່ມ ອາຍຸເກັບກ່ຽວປະມານ 4 ເດືອນ.











ວິທີການເປີດດອກເຫັດບົດ ແລະ ເຫັດຂອນຂາວ ການເປີດດອກ ເຮັດໄດ້ໂດຍການຕັດປາກຖົງ ປັບໂຮງເຮືອນໃຫ້ມີສະພາບຮ້ອນຂຶ້ນ ອຸນນະພູມປະມານ 33-36 ອົງສາເຊ ປະມານ 2-3 ວັນ ດອກເຫັດຈະເລີ່ມອອກດອກ ຈາກນັ້ນປັບອຸນະພູມໃນໂຮງເຮືອນໃຫ້ລຸດລົງ ມີອາກາດຖ່າຍເທໄດ້ດີ ມີຄວາມຊຸ່ມສຳພັດ 60-70% ມີແສງສະຫວ່າງປານກາງ ເພື່ອໃຫ້ດອກເຫັດຈະເລີນເຕີບໂຕຕໍ່ໄປ ໃນລະຫວ່າງໃຫ້ຜົນຜະລິດແຕ່ລະຄັ້ງເສັ້ນໃຍເຫັດບົດຈະພັກໂຕ ປະມານ 15-20 ວັນ ສ່ວນເຫັດຂອນຂາວແມ່ນຈະທະຍ່ອຍໃຫ້ຜົນຜະລິດ ການເກັບດອກເຫັດຄວນເກັບວັນລະ 2-3 ຄັ້ງ ເກັບສ່ວນຕ່າງໆຂອງດອກເຫັດໃຫ້ອອກຈົນໝົດເພື່ອປ້ອງກັນການເນົ່າເສຍຈາກເສດ ຫຼື ສ່ວນຂອງດອກເຫັດທີ່ເຫຼືອຕິດຄ້າງຢູ່ທີ່ກ້ອນເຊື້ອ ຫຼັງເກັບດອກເຫັດແລ້ວຫົດນ້ຳເພື່ອປັບສະພາບຄວາມຊຸ່ມ ອາຍຸເກັບກ່ຽວປະມານ 4 ເດືອນ.

ການຜະລິດເຫັດນາງຟ້າແບບຄົບວົງຈອນ ໃນໂຮງເຮືອນຂະໜາດ 4x5 ແມັດ ສາມາດບັນຈຸ ພ້ອມເປີດດອກໄດ້ 2,000 ກ້ອນ ໂດຍເຫັດ 1 ກ້ອນ ໃຫ້ຜົນຜະລິດສະເລ່ຍ 350 ກລາມ ຫຼື 700 ກິໂລກລາມຕໍ່ 1 ໂຮງຕໍ່ລອບ ການຜະລິດຄິດເປັນລາຍໄດ້ເທົ່າກັບ 42,000 ບາດ ກຳໄລສຸດທິ 26,000 ບາດ ຫຼື ຄິດເປັນເງິນກີບເທົ່າກັບ 6.5 ລ້ານກີບ.

5. ກິດຈະກຳຝຶກອົບຮົມ ແລະ ຂະຫຍາຍຜົນ

ຂະຫຍາຍຜົນໂດຍການຈັດການຂະບວນການຮຽນຮູ້ການຜະລິດເຂົ້າອິນຊີ ແລະ ການຜະລິດຜັກອິນຊີ ການຜະລິດໄມ້ໃຫ້ໜາກປະສົມປະສານ ແລະ ການຂະຫຍາຍພັນ ການຜະລິດໜາກນາວ ຜ່ານກະສິກອນຄອບຄົວແບບຂອງສູນ ແລະ ກະສິກອນໃນພື້ທີ່ໝູ່ບ້ານ ເປົ້າໝາຍບໍລິເວນອ້ອມຂ້າງສູນ ແລະ ກະສິກອນທີ່ສົນໃຈຕາມແຂວງຕ່າງໆເຊັ່ນ: ສະຫວັນນະເຂດ, ບໍລິຄຳໄຊ, ນະຄອນຫຼວງວຽງຈັນ ແລະ ອື່ນໆ ລວມເຖິງນັກສຶກສາຝຶກງານຈາກໂຮງຮຽນກະສິກຳ ແລະ ປ່າໄມ້ ຕ່າງໆຢູ່ປະເທດລາວ ປີລະປະມານ 100 ຄົນ, ນັກສຶກສາຝຶກງານຈາກປະເທດໄທ ປີລະບໍ່ຕ່ຳກ່ວາ 20 ຄົນ, ເຂົ້າຮ່ວມຝຶກປະສົບການ ແລະ ແລກປ່ຽນເທັກນິກຕ່າງໆເພື່ອເພີ່ມ ຜົນຜະລິດ

ຊາວກະສິກອນທີ່ປະສົບຜົນສຳເລັດໃນດ້ານໄມ້ໃຫ້ໜາກ ແບບປະສົມປະສານ ແລະ ການຂະຫຍາຍພັນພືດເຊັ່ນ:

- ທ້າວ ກາເຢ່ຶ ຈ໊ຽຍາຊ໊ຽ ບ້ານນ້ຳເດີນ ເມືອງຄຳເກີດ, ແຂວງບໍລິຄຳໄຊ,
- ທ້າວ ຄຳໝັ້ນ ເມືອງສັງທອງ ນະຄອນຫຼວງວຽງຈັນ
- ສູນຄຳປະແໜ ເມືອງຈຳພອນ ແຂວງສະຫວັນນະເຂດ ແລະ

ຊາວກະສິກອນທີ່ປະສົບຜົນສຳເລັດໃນການຜະລິດເຂົ້າອິນຊີເຊັ່ນ:

- ທ້າວ ແກ້ວ ພິມພິສອຍ ບ້ານນາຍາງ,
- ທ້າວ ຄຳປົນ ບ້ານນ້ຳກ໋ຽເໜືອ

ໂດຍສາມາດລຸດຕົ້ນທຶນການໃຊ້ປຸ໋ຍໃນນາເຂົ້າລົງ ປະມານ 50% ເພາະຊາວກະສິກອນ ສາມາດເຮັດໄດ້ເອງ ໃຊ້ຊັບພະຍາກອນໃນທ້ອງຖິ່ນ ລຸດການເພິ່ງພາປັດໃຈການຜະລິດຈາກ ພາຍນອກອັນຈະເຮັດໃຫ້ຕົ້ນທຶນການຜະລິດລຸດລົງ ລວມເຖິງການປົກປັກຮັກສາສະພາບ ແວດລ້ອມໃນໄລຍະຍາວຕາມແນວເສດຖະກິດພໍພຽງ.



ການພັດທະນາດ້ານລ້ຽງສັດ



ຊາວກະສິກອນລາວເກືອບທຸກຄອບຄົວນິຍົມລ້ຽງສັດຫຼາຍຊະນິດເຊັ່ນ: ງົວ, ຄວາຍ. ລ້ຽງໄວ້ໃຊ້ງານ ແລະ ຂາຍເພື່ອຍາມຂາດເຂີນເງິນຄຳ ສ່ວນການລ້ຽງໝູແມ່ນມີໜ້ອຍບໍ່ຫຼາຍເທົ່າທີ່ຄວນ ເນື່ອງຈາກມີຂໍ້ຈຳກັດດ້ານອາຫານສຳລັບ ເປັດ, ໄກ່ ລ້ຽງໄວ້ບໍລິໂພກພາຍໃນຄົວເຮືອນ ໂດຍສູນມີໜ້າທີ່ໃນການຈັດຕັ້ງຝາມເປັນແບບຢ່າງໃນການສາທິດການລ້ຽງ ແລະ ຖ່າຍທອດເຕັກໂນໂລຊີທາງວິຊາການ ເມື່ອເກີດຜົນຜະລິດຈະສົ່ງເສີມຂະຫຍາຍຜົນໃຫ້ແກ່ຊາວກະສິກອນ ກຸ່ມຊາວກະສິກອນ ໂຮງຮຽນ, ສະຖານທີ່ສຶກສາ ຫຼື ຂະຫຍາຍຜົນໄປພື້ນທີ່ຕ່າງແຂວງຂອງ ສ ປ ປ ລາວ ມີການຈັດຕັ້ງປະຕິບັດດັ່ງນີ້:

1. ກິດຈະກຳສາທິດການລ້ຽງສັດ:

ເປັນການສາທິດການລ້ຽງສັດພັນດີທີ່ລ້ຽງງ່າຍໃຫ່ຍໄວ້, ຕະຫຼາດຕ້ອງການ ເປັນທີ່ຕ້ອງການຂອງຊາວກະສິກອນ ແລະ ປະຊົນຊົນເໝາະສົມລ້ຽງໃນສະພາບອາກາດໃນ ສ ປ ປ ລາວ ໄດ້ດີ ປະກອບດ້ວຍ:

- ການສາທິດການລ້ຽງງົວຊີ້ນ: ນຳງົວພັນດີມາລ້ຽງຄື: ງົວພັນຊາຮິວານ (Sahiwal) ເປັນງົວທີ່ໃຫ້ທັງຊີ້ນ ແລະ ນົມ ລຳໂຕມີຂະໜາດປານກາງ ມີສີແດງນ້ຳຕານຄ້າຍຄືງົວພື້ນເມືອງຂອງ ສປປ ລາວ ມີຄວາມທົນທານຕໍ່ສະພາບແວດລ້ອມໄດ້ດີ. ສີນ້ຳຕານເປັນທີ່ຕ້ອງການຂອງຊາວກະສິກອນ ແລະ ປະຊາຊົນ.



ໃນປີ 2018 ສູນມີສັກກາຍະພາບສາມາດລ້ຽງງົວພັນຊາຮີວານ (Sahiwal) ມີງົວພໍ່ພັນ ຊາຮີວານ 1 ໂຕ, ແມ່ພັນ 5 ໂຕ, ງົວລຸ່ນ 4 ໂຕ ແລະ ຜະລິດລູກງົວ 5 ໂຕ ລວມທັງໝົດມີ 15 ໂຕ. ລູກງົວໂຕແມ່ທີ່ເກີດມາໄດ້, ແມ່ນຈະເກັບທົດແທນເປັນແມ່ພັນໃນຝູງ, ສ່ວນໂຕຜູ້ຈຳໜ່າຍ ໃຫ້ຊາວກະສິກອນ ລ້ຽງເປັນພໍ່ພັນປະສົມກັບແມ່ພັນພື້ນເມືອງເພື່ອໃຫ້ໄດ້ລູກໂຕໃຫຍ່ ໃຫຍ່ໄວ ແລະ ລາຄາດີ ໃນປີ 2015 ໄດ້ນຳພໍ່ພັນງົວຊາຮີວານ ໂຕໃໝ່ມາປ່ຽນ ເນື່ອງຈາກພໍ່ພັນເດີມ ໄດ້ໃຊ້ງານມາຫຼາຍປີ ອາດມີໂອກາດປະສົມພັນກັບລູກສາວແລ້ວກໍ່ໃຫ້ເກີດບັນຫາເລືອດໄກ້ຄຽງ ກັນຂຶ້ນໃນຝູງໄດ້.



- ການສາທິດການລ້ຽງໝູ: ນຳໝູພັນດີ ໄດ້ແກ່ໝູພັນລັດສວາຍ, ພັນແລນເລດ, ພັນດູຣອກ, ພັນປາກຊ່ອງ5 ແລະ ພັນເໝີຍຊານ ເປັນການລ້ຽງໝູ ພັນແທ້ ແລະ ພັນລູກປະສົມ ໂດຍໃນແຕ່ລະປີຈະມີເປົ້າໝາຍການລ້ຽງໝູພໍ່ພັນ 2 ໂຕ, ແມ່ພັນ 14 ໂຕ, ໝູທົດແທນ 12 ໂຕ ແລະ ຜະລິດລູກ 224 ໂຕ, ລູກໝູທີ່ຜະລິດໄດ້ເກັບໄວ້ທົດແທນໃນຝູງ ຫຼື ຈຳໜ່າຍໃຫ້ແກ່ຊາວກະສິກອນ ທີ່ສົນໃຈນຳໄປລ້ຽງເພື່ອຂະຫຍາຍພັນ,ໂດຍຈະຈຳໜ່າຍໂຕລະ 400,000 ກີບ (1,600 ບາດ) ແລະ ໃນປີ 2015 ໄດ້ນຳໝູຊຸດໃໝ່ ພໍ່ພັນ ຈຳນວນ 2 ໂຕ ແລະ ແມ່ພັນ 5 ໂຕ ມາປ່ຽນພັນ ຖຸກຳຂອງຝູງໝູໃນສູນ.





• ການສາທິການລ້ຽງເປັດເທດ: ນຳເປັດເທດພັນດີ ໄດ້ແກ່ເປັດເທດ ພັນທ່າພະ ແລະ ພັນກະບິ່ນບູລີ ເຊິ່ງລ້ຽງງ່າຍ, ໃຫຍ່ໄວ ທົນທານຕໍ່ພະຍາດ, ລາຄາດີ, ຊີ້ນແຊບ ເປັນທີ່ຕ້ອງການ ຂອງຕະຫຼາດໃນພື້ນທີ ໃນແຕ່ລະປີຈະມີເປົ້າໝາຍໃນການລ້ຽງພໍ່ພັນ 50 ໂຕ, ແມ່ພັນ 200 ໂຕ, ເປັດທົດແທນ 240 ໂຕ ແລະ ຜະລິດລູກເປັດເທດ 6,000 ໂຕ ລູກເປັດເທດທີ່ຜະລິດໄດ້ເກັບທົດແທນ ເປັນພໍ່ແມ່ພັນ ຈຳໜ່າຍໃຫ້ຊາວກະສິກອນ ແລະ ປະຊາຊົນສາມາດຈຳໜ່າຍ ລູກເປັດເທດໂຕລະ 13,000 ກີບ (52ບາດ).





- ການສາທິດການລ້ຽງໄກ່ໄຂ່ໂຣດໄທ ແລະ ໄກ່ດູກດຳພູພານ: ໄກ່ໄຂ່ໂຣດໄທ ເປັນໄກ່ພັນໄຂ່ທີ່ໃຫ້ໄຂ່ໄດ້ດີປະມານ 240 ໜ່ວຍ/ປີ ສ່ວນໄກ່ດູກດຳພູພານເປັນພັນໄກ່ຊີ້ນພື້ນເມືອງທີ່ຊາວກະສິກອນສາມາດ ລ້ຽງໄດ້ ໄກ່ທັງສອງພັນຈະສາມານຳມາດຜະລິດເປັນໄກ່ພັນແທ້ ຫຼື ລູກປະສົມຕາມຄວາມຕ້ອງການຂອງຊາວກະສິກອນ ການລ້ຽງໄກ່ເປັນການລ້ຽງເພີ່ມເຕີມຈາກກິດຈະກຳປົກກະຕິແຕ່ໃຊ້ງົບປະມານເທົ່າເດີມໂດຍແຕ່ລະປີຈະເກັບທຶດແທນເອງ ແລະລູກໄກ່ທີ່ເຫຼືອກໍ່ຈຳໜ່າຍໃຫ້ຊາວກະສິກອນ ຫຼື ປະຊາຊົນທົ່ວໄປ ລູກໄກ່ໄຂ່ໂຣດໄທໂຕ 5,000 ກີບ (20 ບາດ) ແລະ ໄກ່ດູກດຳພູພານໂຕ 7,000 ກີບ (28 ບາດ).
- ການຜະລິດພືດອາຫານສັດ: ໄດ້ດຳເນີນການປັບປຸງພື້ນທີ່ສຳລັບປູກຫຍ້າພັນດີ ໄດ້ແກ່: ພັນຫຍ້າລູຊີ ຈຳນວນ 30 ໄລ່, ຫຍ້າເນເປຍປາກຊ່ອງ1 ຈຳນວນ 2 ໄລ່ ແລະ ຫຍ້າແຝັງ ໂກຣາຈຳນວນ 2 ໄລ່ ເພື່ອໃຊ້ສຳລັບລ້ຽງງົວຂອງ ສູນພັດທະນາ ແລະ ບໍລິການດ້ານການກະເສດ ຫ້ວຍຊອນ-ຫ້ວຍຊົ້ວເພື່ອເປັນການສາທິດໃຫ້ກັບຊາວກະສິກອນທີ່ສົນໃຈ ແລະ ສາມາດເຮັດໄວ້ເປັນອາຫານຫຍາບ ເພື່ອກຽມໄວ້ໃນລະດູແລ້ງທີ່ອາຫານຫຍາບຂາດແຄນ.

2. ຜົນສຳເລັດທີ່ເກີດພາຍໃນສູນ

ກິດຈະກຳດ້ານການສາທິດການລ້ຽງສັດທຸກຊະນິດພາຍໃນສູນ ສາມາດສ້າງຜົນຜະລິດ ແລະ ສ້າງລາຍໄດ້ໃຫ້ກັບສູນ ແລະ ຍັງສາມາດຈຳໜ່າຍພັນ ໃຫ້ແກ່ຊາວກະສິກອນຜູ້ທີ່ສົນໃຈ ນຳໄປລ້ຽງຂະຫຍາຍພັນຕໍ່ ໄດ້ສົ່ງຜົນໃຫ້ພັນຖຸກຳສັດພັນດີ ເຫຼົ່ານີ້ສາມາດຂະຫຍາຍພັນຖຸກຳພັນດີເຫຼົ່ານີ້ໃນພື້ນທີ່ຂອງຊາວກະສິກອນໄດ້ ໂດຍເມື່ອຄົບຮອບ 25 ປີ (2019) ສູນສາມາດມີຜົນຜະລິດລູກສັດທີ່ເກີດສະສົມພາຍໃນສູນເທ່າກັບ 173,711 ໂຕ ຄິດເປັນລາຄາຂອງລູກສັດທີ່ຜະລິດໄດ້ເທົ່າກັບ 3 ພັນລ້ານກີບ ຫຼື ເທົ່າກັບ 12 ລ້ານບາດ ລາຍລະອຽດສະແດງໃນຕາຕະລາງຕໍ່ໄປນີ້:



ຄົບຮອບ **15** ປີ (ປີ 2009)

ລາຍການ	ຈຳນວນ (ໂຕ)	ມູນຄ່າ (ກີບ)	ມູນຄ່າ (ບາດ)
ຜະລິດລູກງົວ	44	132,000,000	330,000
ຜະລິດລູກໝູ	3,458	735,918,000	2,943,672
ຜະລິດລູກເປັດເທບ	111,974	1,035,010,000	4,140,040
ຜະລິດລູກໄກ່	-	-	-
ລວມ	**143,565**	**2,358,565,562**	**9,434,262**

ຄົບຮອບ **20** ປີ (ປີ 2014)

ລາຍການ	ຈຳນວນ (ໂຕ)	ມູນຄ່າ (ກີບ)	ມູນຄ່າ (ບາດ)
ຜະລິດລູກງົວ	52	156,000,000	624,000
ຜະລິດລູກໝູ	4,354	926,601,206	3,706,404
ຜະລິດລູກເປັດເທບ	135,974	1,256,849,356	5,027,397
ຜະລິດລູກໄກ່	3,185	19,115,000	76,460
ລວມ	**143,565**	**2,358,565,562**	**9,434,262**

ຄົບຮອບ **25** ປີ (ປີ 2019)

ລາຍການ	ຈຳນວນ (ໂຕ)	ມູນຄ່າ (ກີບ)	ມູນຄ່າ (ບາດ)
ຜະລິດລູກງົວ	65	161,200,000	644,800
ຜະລິດລູກໝູ	5,276	1,295,401,206	5,181,604
ຜະລິດລູກເປັດເທບ	160,123	1,570,786,356	6,283,145
ຜະລິດລູກໄກ່	8,247	49,487,000	197,948
ລວມ	**173,711**	**3,076,874,562**	**12,307,498**









ຜົນຜະລິດດ້ານການລ້ຽງສັດ ທີ່ເກີດສະສົມພາຍໃນສູນ

ປະເພດ	ລູກງົ້ວ	ລູກໝູ	ລູກເປັດເທບ	ລູກໄກ່
25 ປີ ປີ 2019	65ໂຕ 644,800 ບາດ	5,000ໂຕ 5.1 ລ້ານບາດ	160,000ໂຕ 6.2 ລ້ານບາດ	8,000ໂຕ 197,000 ບາດ
20 ປີ ປີ 2014	52 ໂຕ 624,000 ບາດ	4,000 ໂຕ 3.7 ລ້ານບາດ	135,000 ໂຕ 5 ລ້ານບາດ	3,000 ໂຕ 76,000ບາດ
15 ປີ ປີ 2009	44 ໂຕ 330,000 ບາດ	3,000 ໂຕ 2.9 ລ້ານບາດ	111,000 ໂຕ 4.1 ລ້ານບາດ	ເລີ່ມລ້ຽງໄກ່ໄຂ່ ໂລດໄຫເມື່ອປີ 2011







3. ງານສົ່ງເສີມ ແລະ ຂະຫຍາຍຜົນ

ກິດຂະກຳທົດລອງການລ້ຽງສັດຂອງສູນ ເປັນທີ່ສົນໃຈຂອງຊາວກະສິກອນຈຶ່ງໄດ້ຂັດໃຫ້ມີການຝຶກອົບຮົມຊາວກະສິກອນໃນໝູ່ບ້ານເປົ້າໝາຍ 8 ບ້ານ ນັກສຶກສາຈາກສະຖາບັນການສຶກສາຕ່າງໆ ທົ່ວປະເທດ, ພະນັກງານ-ລັດຖະກອນຕາມເມືອງ ແລະ ແຂວງຕ່າງໆ ລວມທັງປະຊາຊົນ ຕາມຂົງເຂດຕ່າງໆທີ່ມີຄວາມສົນໃຈທາງດ້ານການລ້ຽງສັດ ຈາກການຝຶກອົບຮົມ ແມ່ນ 2 ຄັ້ງຈາກການຝຶກອົບຮົມປັນເວລາຫຼາຍກວ່າ 20 ປີ ທີ່ມີຊາວກະສິກອນນັກສຶກສາຈາກ ສະຖາບັນການສຶກສາຕ່າງໆ ທົ່ວປະເທດ ພະນັກງານ-ລັດຖະກອນຕາມເມືອງ ແລະ ແຂວງຕ່າງໆ, ຜູ້ທີ່ໃຫ້ຄວາມສົນໃຈເຂົ້າຮັບການຝຶກອົບຮົມ ແລະ ຝຶກງານລວມແລ້ວປະມານ 2,000 ຄົນ, ນອກຈາກນີ້ຍັງໄດ້ຝຶກອົບຮົມພະນັກງານ-ລັດຖະກອນດ້ານກະສິກຳຕາມແຂວງຕ່າງໆ ຈຳນວນ 320 ຈາກ 9 ແຂວງຄື:

1. ນະຄອນຫຼວງພະບາງ
2. ແຂວງ ສະຫວັນນະເຂດ
3. ແຂວງ ບໍລິຄຳໄຊ
4. ນະຄອນຫຼວງວຽງຈັນ
5. ແຂວງ ຫຼວງນ້ຳທາ
6. ແຂວງ ອຸດົມໄຊ
7. ແຂວງ ອັດຕະປື
8. ແຂວງ ຜົ້ງສາລີ
9. ແຂວງ ຊຽງຂວາງ



ຊຶ່ງການຝຶກອົບຮົມຈະເປັນການໃຫ້ຄວາມຮູ້ດ້ານການລ້ຽງການຈັດການ ແລະ ການອານາໄມປ້ອງກັນໂລກໃນງົວ, ໝູ, ເປັດເທບ ແລະ ໄກ່ ພ້ອມທັງການສາທິດການປະສົມອາຫານ ແລະໝັກໂດຍໃຊ້ວັດຖຸດິບທ້ອງຖິ່ນໃຫ້ໄດ້ອາຫານລ້ຽງສັດທີ່ມີລາຄາຖືກເປັນຕົ້ນຜົນສຳເລັດ ຈາກການຝຶກອົບຮົມຄືຜູ້ທີ່ເຄີຍໄດ້ເຂົ້າຮັບການຝຶກອົບຮົມສາມາດນຳຄວາມຮູ້ທີ່ໄດ້ຮັບໄປປະຍຸກໃຊ້ໃຫ້ເກີດປະໂຫຍດໃນດ້ານການລ້ຽງສັດພ້ອມກັບໄປແນະນຳສົ່ງເສີມແກ່ຊາວກະສິກອນຄົນອື່ນໆ ອີກທັງເປັນການເພີ່ມລາຍໄດ້ໃນຄອບຄົວໃຫ້ແກ່ຊາວກະສິກອນ ແລະ ປະຊາຊົນໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວທີ່ສົນໃຈຕໍ່ໄປ.



ນັກສຶກສາຝຶກງານອົບຮົມດ້ານການກະເສດ
ການປູກ-ການລ້ຽງ

ໃນຊ່ວງໄລຍະ 5 ປີທີ່ຜ່ານມາສູນໄດ້ໃຫ້ຄວາມສຳຄັນກັບການສົ່ງເສີມ ແລະ ຂະຫຍາຍຜົນສູ່ແຂວງຕ່າງໆດ້ວຍການອອກໄປດຳເນີນການຝຶກອົບຮົມໃຫ້ກັບຊາວກະສິກອນ ແລະ ພະນັກງານກະສິກຳເມືອງໂດຍຕະຫຼອດ ການຝຶກອົບຮົມໃນແຕ່ລະປີ ຈຳນວນ 40 ຄົນ, ໄລຍະເວລາ 5 ປີ ລວມທັງໝົດຈຳນວນ 200 ຄົນ ເປັນການຝຶກອົບຮົມໃຫ້ແກ່ຊາວກະສິກອນ, ພະນັກງານກະສິກຳເມືອງ ແລະ ນັກສຶກສາ. ນອກຈາກການໃຫ້ຄວາມຮູ້ ແລະ ເຕັກໂນໂລຊີຕ່າງໆແລ້ວຍັງສະໜັບສະໜູນພັນສັດໃຫ້ແກ່ຊາວກະສິກອນ ຫຼື ສະຖາບັນການສຶກສາໃນພື້ນທີ່ເພື່ອນຳໄປເປັນແມ່ພັນ ແລະຂະຫຍາຍພັນລ້ຽງໃນພື້ນທີ່ຕໍ່ໄປຊຶ່ງໃນຮອບ 5 ປີ ທີ່ຜ່ານມາຄິດເປັນມູນຄ່າທັງໝົດຈຳນວນ 79,437,000 ກີບ (317,748 ບາດ) ມີລາຍລະອຽດດັ່ງຕໍ່ໄປນີ້:

ລ/ດ	ສະຖານທີ່	ລາຍການທີ່ໄດ້ສະໜັບສະໜູນ	ມູນຄ່າ(ກີບ)	ມູນຄ່າ(ບາດ)
1.	ເມືອງວັງວຽງ,ວິທະຍາໄລເຕັກນິກວິຊາຊີບ ແລະ ໂຮງຮຽນວັດທະນາທຳຊົນເຜົ່າຫຼັກ 67 ແຂວງວຽງຈັນ	ລູກເປັດ 380 ໂຕ ລູກໝູ 17 ໂຕ ອາຫານເປັດ 11 ເປົ໋າ ອາຫານໝູ 3 ເປົ໋າ	13,990,000	55,960
2.	ເມືອງນາຊາຍທອງ,ເມືອງສັງທອງ ແລະ ວິທະຍາໄລກະສິກຳດົງຄຳຊ້າງ ເຂດນະຄອນຫຼວງວຽງຈັນ	ລູກເປັດ 235 ໂຕ ລູກໝູ 4 ໂຕ	4,665,000	18,620
3.	ເມືອງບໍລິຄັນ ແລະ ເມືອງຄຳເກີດ ແຂວງບໍລິຄຳໄຊ	ລູກເປັດ 100 ໂຕ ລູກໄກ່ 42 ໂຕ ອາຫານໝູ 7 ໂຕ	4,436,000	17,744
4.	ວິທະຍາໄລເຕັກນິກແຂວງຊຽງຂວາງ	ລູກເປັດ 20 ໂຕ ລູກໝູ 8 ໂຕ	3,688,000	14,752
5.	ບ້ານນາແທນ ແຂວງຫົວພັນ	ລູກເປັດ 175 ໂຕ ລູກໝູ 9 ໂຕ ອາຫານເປັດ 7 ເປົ໋າ ອາຫານໝູ 5 ເປົ໋າ	7,925,000	31,700
6.	ເມືອງສະໜາມໄຊ ແຂວງອັດຕະປື	ລູກເປັດ 1,200 ໂຕ ລູກໄກ່ 880 ໂຕ ອາຫານເປັດ-ໄກ່ 50ເປົ໋າ	44,743,000	178,972
		ລວມ	**79,437,000**	**317,748**

การสิ่งเสิม การขะหยายผืมด้านการล้ยงสัดออกสู่ต่างแขวง



ການພັດທະນາດ້ານປະມົງ

ວຽກງານການພັດທະນາດ້ານປະມົງ ແມ່ນມີບົດບັດສຳຄັນ ຕໍ່ກັບການຜະລິດສັດນ້ຳຈືດ, ການພັດທະນາ ແລະ ການສົ່ງເສີມອາຊີບ ການຂະຫຍາຍພັນ ແລະ ການລ້ຽງສັດນ້ຳຈືດ ໃນພື້ນທີ່ເປົ້າໝາຍ 09 ໝູ່ບ້ານ ອ້ອມຮອບບໍລິເວນໂຄງການ ແລະ ຂະຫຍາຍຜົນສູ່ແຂວງຕ່າງໆ ໃນ ສ ປ ປ ລາວ, ໂດຍການຝຶກອົບຮົມຖ່າຍທອດເຕັກໂນໂລຊີ ການຂະຫຍາຍພັນ, ການລ້ຽງສັດນ້ຳຈືດ, ການບໍລິການທາງດ້ານວິຊາການ ແລະ ເປັນບ່ອນສາທິດ, ເປັນບ່ອນຮຽນຮູ້ດ້ານປະມົງໃຫ້ແກ່ປະຊາຊົນທົ່ວໄປ, ຊຶ່ງປະກອບດ້ວຍກິດຈະກຳຕ່າງໆດັ່ງນີ້:

1. ກິດຈະກຳການຜະລິດສັດນ້ຳຈືດ:



1.1 ການຜະລິດພັນປາ: ມີການພັດທະນາ ຄວາມສາມາດໃນການຜະລິດປານ້ຳຈືດໄດ້ ຫຼາຍຊະນິດ ໄດ້ແກ່ ປານິນແປງເພດ, ປາປາກຂາວ, ປາໄນ, ປານອນຈັນເທດ, ປາໂລຮູ້, ປາເກັດແລບ, ປາກິນຫຍ້າ, ປາດຸກເປັນຕົ້ນໂດຍມີການສະນັບສະໜູນແມ່ພັນປາໃຫ້ແກ່ກິດຈະກຳການຜະລິດດ້ານປະມົງໃນແຫຼ່ງນ້ຳ ໜອງປາຂອງໂຮງຮຽນວັດທະນາທຳເດັກກຳພ້າ ຫຼັກ67 ແຂວງວຽງຈັນ ແລະ ໜ່ວຍງານຂອງລັດທີ່ກ່ຽວຂ້ອງຕ່າງໆ ລວມທັງສະໜັບສະໜູນລູກປາໃຫ້ແກ່ ຊາວກະສິກອນໂຄງການຂອງສູນ, ນອກຈາກນີ້ ຍັງມີການຜະລິດພັນປາພື້ນເມືອງ ໄດ້ແກ່ ປາເພ້ຍ ແລະ ປາກົດເຫຼືອງ ຈຳນວນບໍ່ຕ່ຳກ່ວາ 500,000 ໂຕ/ປີ ເພື່ອສະໜັບສະໜູນ ການອານຸລັກພັນປາພື້ນເມືອງໃນແຫຼ່ງນ້ຳທຳມະຊາດ ຕະຫຼອດຈົນຮອດການຜະລິດພັນສັດນ້ຳ ທີ່ມີຄຸນນະພາບ ໄດ້ແກ່ ປານິນແປງເພດ ເພື່ອຈຳໜ່າຍໃຫ້ ແກ່ຊາວກະສິກອນຜູ້ລ້ຽງສັດນ້ຳທົ່ວໄປ ໂດຍລາຍໄດ້ໃຊ້ເປັນທຶນໝູນວຽນໃນກິດຈະກຳຕ່າງໆ ໂຄງການຂອງສູນ.

ປັດຈຸບັນມີຄວາມສາມາດຜະລິດພັນສັດນ້ຳຈືດຊະນິດຕ່າງໆ ບໍ່ຕ່ຳກ່ວາ 2.5 ລ້ານໂຕຕໍ່ປີ ມີລາຍໄດ້ຈາກການຈຳໜ່າຍລູກພັນສັດນ້ຳເປັນເງິນ ປີລະບໍ່ຕ່ຳກ່ວາ 120 ລ້ານກີບ, ຜົນການຈັດຕັ້ງປະຕິບັດໃນໄລຍະເວລາ 25 ປີ ທີ່ຜ່ານມາສາມາດຜະລິດລູກພັນປາໄດ້ຈຳນວນບໍ່ຕ່ຳກ່ວາ 35 ລ້ານໂຕ ຄິດເປັນມູນຄ່າບໍ່ຕ່ຳກ່ວາ 3,5 ຕື້ກີບ (14 ລ້ານບາດ) ແລະ ຜົນການຈັດຕັ້ງປະຕິບັດ ກິດຈະກຳຜະລິດລູກປາ ຕັ້ງແຕ່ປີ 2015-2019 ມີລູກປາທີ່ຜະລິດໄດ້ຈຳນວນ 8 ລ້ານໂຕ ຄິດເປັນມູນຄ່າບໍ່ຕ່ຳກ່ວາ 800 ລ້ານກີບ (3,200,000ບາດ) ສາມາດຈຳໜ່າຍລູກປາໂຕລະ 100 ກີບ (0.50ບາດ).

ການຜະລິດລູກປາ

ຜົນຜະລິດ	ມູນຄ່າ
5 ປີ ໄດ້ຜົນຜະລິດຈຳນວນ 8 ລ້ານໂຕ	800 ລ້ານກີບ (3 ລ້ານບາດ)
25 ປີໄດ້ຜົນຜະລິດຈຳນວນ 35 ລ້ານໂຕ	3,5 ຕື້ກີບ (14 ລ້ານບາດ)

1.2 ການຜະລິດໄຮແດງ: ການລ້ຽງໄຮແດງ ຊຶ່ງເປັນອາຫານທຳມະຊາດ ທີ່ໃຊ້ເປັນອາຫານອານຸບານສັດນ້ຳແຕ່ຍັງນ້ອຍ ເຮັດໃຫ້ຂະບວນການຜະລິດສັດນ້ຳມີຄວາມສົມບູນຍິ່ງຂຶ້ນ ມີການຜະລິດພັນໄຮແດງປີ 2014 ແລະ ປັບປຸງພັດທະນາ ເພີ້ມປະສິດທິພາບໄຮແດງໃນອ່າງ ຊີເມັນຂະໜາດ ກ້ວາງ 2 ແມັດ, ຍາວ 4 ແມັດ, ຈຳນວນ 6 ອ່າງ ເຮັດໃຫ້ປີ 2015 - 2019 ມີການຜະລິດໄຮແດງ ໄດ້ປະລິມານລວມທັງໝົດ 275 ກິໂລກຣາມ ຄິດເປັນມູນຄ່າບໍ່ຕ່ຳກ່ວາ 7 ລ້ານກີບ (27,500 ບາດ) ສາມາດຈຳໜ່າຍໄຮແດງ ກິໂລກຣາມລະ 25,000 ກີບ (100 ບາດ).

1.3 ການຜະລິດລູກກົບນາ: ຈາກການສາທິດການຜະລິດລູກກົບ, ການລ້ຽງກົບ ໃນໂຄງການ ເຮັດໃຫ້ຊາວກະສິກອນ ໄດ້ມີຄວາມສົນໃຈ ແລະ ລ້ຽງກົບຫຼາຍຂຶ້ນ ສົ່ງຜົນໃຫ້ມີຄວາມຕ້ອງການລູກກົບຫຼາຍຂຶ້ນ, ດັ່ງນັ້ນປີ 2014 ໄດ້ນຳພໍ່ແມ່ພັນກົບ ຈຳນວນ 500 ໂຕ ຈາກປະເທດໄທມາລ້ຽງ ແລະ ເພີ້ມຂະຫຍາຍພັນ ໃນປີ 2015 - 2019 ມີລູກກົບຜະລິດໄດ້ຈຳນວນ 12,000 ໂຕ, ຄິດເປັນມູນຄ່າ 3.6 ລ້ານກີບ (14,400 ບາດ) ສາມາດຈຳໜ່າຍລູກກົບໂຕລະ 300 ກີບ (1.20 ບາດ).





2. ກິດຈະກຳສາທິດການລ້ຽງສັດນ້ຳ:

ການຈັດຕັ້ງປະຕິບັດວຽກງານ ການຜະລິດສັດນ້ຳໃນພື້ນທີ່ຂອງຊາວກະສິກອນ ແລະ ບໍລິເວນໂຄງການ ຂອງສູນທີ່ພັດທະນາ ໄດ້ແກ່ ການລ້ຽງກົບໃນກະຊັງ, ການລ້ຽງປານິນໃນກະຊັງ, ການລ້ຽງກົບປາດຸກ ແລະ ກົບ ໃນໜອງຜ້າຢາງການລ້ຽງປາໃນໜອງດິນແບບປະສົມປະສານ ກັບການລ້ຽງສັດ ແລະ ການລ້ຽງປາໃນນາເຂົ້າ ສົ່ງຜົນໃຫ້ປະຈຸບັນມີຊາວກະສິກອນ ປະກອບອາຊີບການລ້ຽງສັດນ້ຳ ມີຈຳນວນເພີ່ມຂຶ້ນຫຼາຍ ໂດຍມີການລ້ຽງສັດນ້ຳແບບລ້ຽງຊີບ ແລະ ແບບການຄ້າ ໄລຍະເວລາ 25 ປີ ທີ່ຜ່ານມາ ນອກຈາກເປັນບ່ອນຮຽນຮູ້ໃຫ້ແກ່ຊາວ ກະສິກອນ ແລະ ຜູ້ສົນໃຈຢາກມາສຶກສາຢ້ຽມຢາມເບິ່ງວຽກງານແລ້ວ ຍັງສາມາດສ້າງລາຍໄດ້ ຈາກການຂາຍຜະລິດຕະພັນສັດນ້ຳບໍ່ຕ່ຳກວ່າ 5,000 ກິໂລກຣາມ/ປີ ຄິດເປັນເງິນປະມານ 75 ລ້ານກີບ/ປີ. (300,000 ບາດ/ປີ)

ກິດຈະກຳສາທິດການລ້ຽງສັດນ້ຳ

ຜົນຜະລິດ	ມູນຄ່າ
1 ປີ ຈຳນວນ 5,000 ກິໂລກຣາມ	75 ລ້ານກີບ
25 ປີ ຈຳນວນ 125,000 ກິໂລກຣາມ	1,875 ລ້ານກີບ







3. ກິດຈະກຳຖ່າຍທອດເຕັກໂນໂລຊີດ້ານປະມົງ:

3.1. ການຝຶກອົບຮົມເຕັກໂນໂລຊີດ້ານການຜະລິດສັດນ້ຳ: ເປັນການໃຫ້ຄວາມຮູ້ ແລະ ຄຳແນະນຳເຕັກນິກການຜະລິດ ແລະ ລ້ຽງສັດນ້ຳ ໃຫ້ແກ່ຊາວກະສິກອນຜູ້ລ້ຽງສັດນ້ຳ ແລະ ພະນັກງານກະສິກຳເມືອງ ທັງພາຍໃນ ແລະ ພາຍນອກເຂດພື້ນທີ່ໂຄງການຂອງສູນທີ່ພັດທະນາ ເພື່ອພັດທະນາຄວາມຮູ້ ເພີ່ມຄວາມສາມາດດ້ານການຜະລິດສັດນ້ຳ ແລະການລ້ຽງສັດນ້ຳທີ່ໃຊ້ນ້ຳປະລິມານໜ້ອຍເຊັ່ນ: ການລ້ຽງກົບ, ການລ້ຽງປາດຸກໃນກະຊັງບົກ, ການລ້ຽງປາດຸກໃນອ່າງຜ້າຢາງ, ດ້ານອາຫານ ແລະ ການຜະລິດອາຫານຈາກພາງສ່ວນທີ່ນຳໃຊ້ວັດຖຸດິບທີ່ມີຢູ່ໃນທ້ອງຖິ່ນ ພ້ອມທັງການປ້ອງກັນຮັກສາ-ປິ່ນປົວພະຍາດ ໂດຍໄລຍະເວລາ 5 ປີ (2015 - 2019) ມີການຝຶກອົບຮົມຕໍ່ປີ 40 ຄົນ ລວມທັງໝົດ ຈຳນວນ 200 ຄົນ.

3.2. ການຝຶກອົບຮົມໃຫ້ຄວາມຮູ້ທາງດ້ານວິຊາການ ແລະ ການປະຕິບັດຕົວດ້ານປະມົງ: ເປັນການຝຶກອົບຮົມການຜະລິດພັນປາຊະນິດຕ່າງໆ, ການຜະລິດພັນກົບ, ການຜະລິດໄຮແດງ, ການຜະລິດປານິນແປງເພດ ແລະ ການກວດກາເພດຂອງປານິນ ຈາກການໃຊ້ຮໍໂມນແປງເພດໂດຍ, ໄລຍະ 5 ປີ (2015-2019) ມີການຝຶກອົບຮົມໃຫ້ນັກສຶກສາ ປີລະ ບໍ່ໜ້ອຍກວ່າ 200 ຄົນ ທີ່ເຂົ້າຝຶກງານໃນໂຄງການຂອງສູນ ພັດທະນາ ແລະ ບໍລິການດ້ານການກະເສດ ຫ້ວຍຊອນ-ຫ້ວຍຊົ້ວ.

4. ກິດຈະກຳການສົ່ງເສີມ ແລະ ຂະຫຍາຍຜົນການຜະລິດສັດນ້ຳ:

4.1 ການສົ່ງເສີມອາຊີບການລ້ຽງກົບ: ເປັນການສົ່ງເສີມ ແລະ ພັດທະນາອາຊີບໃຫ້ແກ່ຊາວກະສິກອນນອກເຂດໂຄງການພັດທະນາ ຈຳນວນ 20 ຄົນ ໃຫ້ໄດ້ຄວາມຮູ້ ແລະ ປະສົບການໃນການລ້ຽງກົບ ໂດຍຊາວກະສິກອນສາມາດລ້ຽງກົບໄດ້ໂຕຂະໜາດສະເລ່ຍ 5 ໂຕ/ກິໂລກຣາມ ມີຜົນຜະລິດກົບຈາກການລ້ຽງກົບໃນກະຊັງຂະໜາດ 2 x 3 x 1.2 ແມັດ ຈຳນວນ 300 ໂຕຕໍ່ກະຊັງຕໍ່ຄົນ ໄລຍະເວລາລ້ຽງ 6 ເດືອນ ລວມທັງໝົດ 390 ກິໂລກຣາມ, ຊາວກະສິກອນນຳໄປບໍລິໂພກໃນຄົວເຮືອນ 262 ກິໂລກຣາມ ແລະ ຈຳໜ່າຍ 128 ກິໂລກຼາມ ກິໂລກຣາມລະ 25,000 ກີບ ຄິດເປັນລາຍໄດ້ລວມ 3,200,000 ກີບ (12,800 ບາດ).

4.2 ການສົ່ງເສີມອາຊີບການຜະລິດລູກກົບເພື່ອຈຳໜ່າຍ: ເປັນການສົ່ງເສີມ ແລະ ການພັດທະນາອາຊີບໃຫ້ແກ່ຊາວກະຊິກອນ ນອກເຂດໂຄງການຂອງສູນທີ່ພັດທະນາ ມີຊາວກະສິກອນຈຳນວນ 5 ຄົນ ທີ່ໄດ້ຮັບການສົ່ງເສີມອາຊີບການລ້ຽງກົບແລ້ວ ແລະ ຕ້ອງການ ຜະລິດລູກກົບຈຳໜາຍເພື່ອເພີ້ມລາຍໄດ້ ຈຶ່ງມີການຝຶກອົບຮົມ ແລະ ໃຫ້ຄຳແນະນຳການລ້ຽງ ການຄັດເລືອກພໍ່ແມ່ພັນກົບ, ການປະສົມພັນກົບ, ການອານຸບານລູກກົບ, ການໃຊ້ຢາແລະສານເຄມີ ໃນການປ້ອງກັນຮັກສາ ແລະ ປິ່ນປົວພະຍາດກົບ ແລະ ສະໜັບສະໜູນວັດຖຸອຸປະກອນຕ່າງໆ ການຜະລິດລູກກົບໃຫ້ແກ່ຊາວກະສິກອນດັ່ງນີ້:



- ກະຊັງລ້ຽງພໍ່ແມ່ພັນກົບ ຂະໜາດ 2 x 3 x 0.90 ແມັດ ຈຳນວນ 2 ກະຊັງ.
- ກະຊັງປະສົມພັນກົບ ຂະໜາດ 2 x 4 x 1.2 ແມັດ ຈຳນວນ 2 ກະຊັງ.
- ກະຕ່ອງຊຽວຕັກກົບ ຈຳນວນ 1 ອັນ.
- ອາຫານກົບຊະນິດເປັນຝຸ່ນ ຈຳນວນ 1 ຖົງ (10 ກິໂລກຣາມ) ແລະ ຊະນິດເມັດ ສຳເລັດຮູບຂະໜາດນ້ອຍພິເສດ ຈຳນວນ 2 ເປົ໋າ (40 ກິໂລກຣາມ) ໃຊ້ໃນການອະນຸບານລູກກົບ.



- ອາຫານກົບຊະນິດເມັດສຳເລັດຮູບຂະໜາດນ້ອຍ ຂະໜາດກາງ ແລະ ຂະໜາດໃຫ່ຍ ຈຳນວນລວມ 6 ເປົ໋າ (120 ກິໂລກຣາມ).

ຜົນການຈັດຕັ້ງປະຕິບັດກິດຈະກຳນີ້: ສາມາດສ້າງລາຍຮັບ ຈາກການຂາຍລູກພັນກົບ ໃຫ້ກັບຊາວກະສິກອນບ້ານນາຍາງ ທີ່ເຂົ້າຮ່ວມໂຄງການ ຄື: ທ້າວ ທອງດຳ ສາມາດຜະລິດລູກກົບຂາຍ ຈຳນວນ 9,050 ໂຕ ເປັນເງິນ 4,365,000 ກີບ (17,460 ບາດ) ໂດຍມີຕົ້ນທຶນຄ່າອາຫານ 720,000 ກີບ (2,880 ບາດ) ແລະ ທ້າວ ທອງສູນ ຜະລິດລູກກົບຂາຍ ຈຳນວນ 131,800 ໂຕ ເປັນເງິນ 40 ລ້ານກີບ (160,000 ບາດ) ຜົນສຳເລັດຂອງການສົ່ງເສີມ ຄືການສ້າງຄວາມເຊື່ອໝັ້ນ ໃຫ້ແກ່ ຊາວກະສິກອນສາມາດປະຕິບັດການຜະລິດດ້ວຍຕົນເອງ ໂດຍມີພະນັກງານວິຊາການ ຂອງສູນ ເປັນທີ່ປຶກສາ ແລະ ສະໜັບສະໜູນ ອຸປະກອນເພື່ອການຜະລິດພັນກົບ.

ຊາວກະສິກອນບ້ານນາຍາງ

	ຜົນຜະລິດ	ລາຍຮັບ
ທ້າວທອງດຳ	9,050 ໂຕ	4,365,000 ກີບ (17,460 ບາດ)
ທ້າວທອງສູນ	131,800 ໂຕ	40 ລ້ານກີບ (160,000 ບາດ)



4.3 ວຽກງານຂະຫຍາຍຜົນການສົ່ງເສີມການຜະລິດສັດນ້ຳ: ໄດ້ສະໜັບສະໜູນໂຄງການປະມົງໂຮງຮຽນ ເປັນການຂະຫຍາຍຜົນ ການຖ່າຍທອດຄວາມຮູ້ດ້ານການປະມົງໄປຍັງສະຖາບັນການສຶກສາ ຈຳນວນ 5 ແຫ່ງ ເພື່ອໃຫ້ເປັນສະຖານທີ່ຮຽນຮູ້ ສຳຫຼັບນັກສຶກສາ ແລະ ຜູ້ສົນໃຈທົ່ວໄປ ໂດຍມີໂຮງຮຽນເຂົ້າຮ່ວມກິດຈະກຳ ດັ່ງນີ້:

1. ວິທະຍາໄລເຕັກນິກດົງຄຳຊ້າງ ນະຄອນຫຼວງວຽງຈັນ
2. ວິທະຍາໄລເຕັກນິກ ແຂວງວຽງຈັນ
3. ໂຮງຮຽນເຕັກນິກວິຊາຊີບແບບປະສົມ ແຂວງຊຽງຂວາງ
4. ໂຮງຮຽນເຕັກນິກວິຊາຊີບ ແຂວງບໍລິຄຳໄຊ
5. ວິທະຍາໄລກະສິກຳ ແລະ ປ່າໄມ້ ແຂວງບໍລິຄຳໄຊ

ມີການແຕ່ງຕັ້ງຄະນະກຳມະການປະມົງໂຮງຮຽນທັງ 5 ແຫ່ງ ຈຳນວນ 10 ຄົນຕໍ່ແຫ່ງ ປະກອບດ້ວຍຄູ 3 ຄົນ ແລະ ນັກສຶກສາ 7 ຄົນ ຮັບຜິດຊອບດູແລ ການຜະລິດສັດນ້ຳ ແລະ ສະໜັບສະໜູນປັດໃຈການຜະລິດ ໃຫ້ກັບໂຮງຮຽນແຕ່ລະແຫ່ງດັ່ງນີ້:

- ກະຊັງລ້ຽງກົບ ຂະໜາດ 2 x 4 x 1.2 ແມັດ ຈຳນວນ 1 ກະຊັງ.
- ກະຊັງລ້ຽງປາດຸກ ຂະໜາດ 2 x 4 x 1.2 ແມັດ ຈຳນວນ 1 ກະຊັງ.
- ລູກກົບ ອາຍຸ 50 ວັນ ຈຳນວນ 500 ໂຕ.
- ລູກປາດຸກບິກອຸຍ 5-7 ເຊັນຕີແມັດ ຈຳນວນ 800 ໂຕ.
- ອາຫານກົບ ຂະນິດເມັດສຳເລັດຮູບຂະໜາດນ້ອຍ 2 ເປົ໋າ ແລະ ຂະໜາດກາງ 3 ເປົ໋າ
- ອາຫານປາດຸກ ຂະນິດເມັດສຳເລັດຮູບຂະໜາດນ້ອຍ 2 ເປົ໋າ ແລະ ຂະໜາດກາງ 3 ເປົ໋າ
- ຊຸດ Test Kit ວິເຄາະຄຸນນະພາບນ້ຳ 1 ຊຸດ

ການໃຊ້ປະໂຫຍດຈາກຜົນຜະລິດກົບ ແລະ ປາດຸກຈາກການລ້ຽງໃນກະຊັງຂະໜາດ 2 x 4 x 1.2 ແມັດ ຂອງໂຮງຮຽນ 5 ແຫ່ງດັ່ງນີ້:

- ສະໜັບສະໜູນເປັນອາຫານສຳຫຼັບນັກຮຽນ.
- ໂຮງຮຽນບາງແຫ່ງ ໄດ້ຂາຍຜົນຜະລິດບາງສ່ວນ ເພື່ອນຳລາຍໄດ້ໄປໃຊ້ ໃນກິດຈະກຳອື່ນໆ.
- ໂຮງຮຽນບາງແຫ່ງ ເຊັ່ນ ໂຮງຮຽນເຕັກນິກດົງຄຳຊ້າງ ໄດ້ສະໜັບສະໜູນຜົນຜະລິດກົບໃຫ້ໂຮງຮຽນທີ່ມາຢ້ຽມຢາມເບິ່ງສະຖານທີ່ ເພື່ອນຳໄປເປັນພໍ່ແມ່ພັນ.

4.4 ວຽກງານຂະຫຍາຍຜົນສົ່ງເສີມການຜະລິດສັດນ້ຳ ຢູ່ຕ່າງແຂວງ: ເປັນການສົ່ງເສີມ ແລະ ຂະຫຍາຍຜົນໃນການຖ່າຍທອດຄວາມຮູ້ ແລະ ເຕັກໂນໂລຊີດ້ານການຜະລິດສັດນ້ຳ ໃຫ້ກັບ ຊາວກະສິກອນ ແລະ ພະນັກງານ-ລັດຖະກອນ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ນັກສຶກສາທີ່ຢູ່ ໃນແຂວງຕ່າງໆ ພ້ອມທັງ ສະໜັບສະໜູນແນວພັນສັດນ້ຳ ໄດ້ແກ່ ປາດຸກ, ກົບ ແລະ ອຸປະກອນການລ້ຽງສັດນ້ຳ ເຊັ່ນ ອາຫານສັດນ້ຳ ແລະ ກະຊັງ ໃຫ້ກັບຊາວກະສິກອນ ແລະ ສະຖາບັນການສຶກສາອື່ນໆ ເພື່ອໃຊ້ໃນການປະຕິບັດຕົວຈິງ ແລະ ຂະຫຍາຍຜົນໄດ້ ໃນພື້ນທີ່ຕໍ່ໄປ ໂດຍໄລຍະເວລາ 5 ປີ ຕັ້ງແຕ່ປີ 2015 - 2019 ຜົນການຈັດຕັ້ງປະຕິບັດວຽກງານ ລວມເປັນມູນຄ່າທັງໝົດ 20 ລ້ານກີບ (83,740 ບາດ) ໂດຍມີລາຍລະອຽດ ດັ່ງນີ້:

ລ/ດ	ສະຖານທີ່	ລາຍການທີ່ໄດ້ສະໜັບສະໜູນ	ມູນຄ່າ(ກີບ)	ມູນຄ່າ(ບາດ)
01	ແຂວງວຽງຈັນ: - ວິທະຍາໄລເຕັກນິກແຂວງວຽງຈັນ. - ໂຮງຮຽນວັດທະນາທຳຊົນເຜົ່າ ຫຼັກ 67. - ໂຮງຮຽນເຕັກນິກວິຊາຊີບ ເມືອງວັງວຽງ.	ລູກປາ 22,000 ໂຕ ລູກກົບ 300 ໂຕ ອາຫານປາ 1 ເປົ໋າ ລູກປາດຸກ 500 ໂຕ ກະຊັງ 2 ອັນ	2,200,000	8,800
02	ນະຄອນຫຼວງວຽງຈັນ: - ເມືອງນາຊາຍທອງ - ວິທະຍາໄລເຕັກນິກດົງຄຳຊ້າງ - ມະຫາວິທະຍາໄລແຫ່ງຊາດ	ລູກປາ 10,000 ໂຕ ລູກກົບ 9,250 ໂຕ ອາຫານກົບ 26 ເປົ໋າ ກະຊັງ 26 ອັນ,	12,875,000	51,500
03	ແຂວງບໍລິຄຳໄຊ: - ເມືອງບໍລິຄັນ - ວິທະຍາໄລກະສິກຳ ແລະ ປ່າໄມ້ - ໂຮງຮຽນເຕັກນິວິຊາຊີບແຂວງບໍລິຄຳໄຊ	ລູກປາ 23,600 ໂຕ ລູກກົບ 600 ໂຕ ອາຫານປາ 2 ເປົ໋າ ກະຊັງ 2 ອັນ	3,240,000	12,960
04	ແຂວງຫົວພັນ: - ບ້ານແທ່ນ	ລູກປາດຸກ 1,000 ໂຕ ອາຫານປາ 3 ເປົ໋າ	750,000	3,000
05	ແຂວງຄຳມ່ວນ: - ພະແນກກະສິກຳ ແລະ ປ່າໄມ້ ແຂວງ	ລູກປາ 5,000 ໂຕ	500,000	2,000
06	ແຂວງສະຫວັນນະເຂດ: - ພະແນກກະສິກຳ ແລະ ປ່າໄມ້ ແຂວງ	ລູກປາ 10,000 ໂຕ	1,000,000	4,000
07	ແຂວງອັດຕະປື: ເມືອງສະໜາມໄຊ	ລູກປາ 3,700 ໂຕ ລູກກົບ 620 ໂຕ ອາຫານປາ+ກົບ 7 ເປົ໋າ ກະຊັງ 3 ອັນ	370,000	1,480
		ລວມ	20,935,000	83,740





ບົດທີ 3
ຜົນສຳເລັດ

ສູນກາງອົງຄວາມຮູ້

ຕະຫຼອດໄລຍະເວລາ 20 ປີທີ່ຜ່ານມາ ສູນພັດທະນາ ແລະບໍລິການດ້ານການກະເສດຫ້ວຍຊອນ-ຫ້ວຍຊົ້ວ ໄດ້ ດຳ ເ ນີ ນ ຕາ ມ ວັ ດ ຖຸ ປ ະ ສົ ງ ຫຼັ ກ ຂ ອ ງ ໂ ຄ ງ ການ ໃ ນ ການ ເ ຮັ ດ ໜ້ າ ທີ່ ເ ປັ ນ ແ ຫຼ່ ງ ຮ ຽ ນ ຮູ້ ແ ລ ະ ເ ຜີ ຍ ແ ຜ່ ຄ ວ າ ມ ຮູ້ ທ າ ງ ວິ ຊ າ ກ ານ ດ້ ານ ກ າ ນ ກ ະ ເ ສ ດ ທີ່ ສ ອ ດ ຄ ້ ອ ງ ກັ ບ ສ ະ ພ າ ບ ພື້ ນ ທີ່ ແ ລ ະ ເ ໝ າ ະ ສົ ມ ກັ ບ ວິ ຖີ ຊີ ວິ ດ ຂ ອ ງ ປ ະ ຊ າ ຊົ ນ ລ າ ວ ຈົ ນ ປ ະ ສົ ມ ຜົ ນ ສ ຳ ເ ລັ ດ ສ າ ມ າ ດ ເ ປັ ນ ສ ູ ນ ກ າ ງ ໃ ນ ກ ານ ເ ຜີ ຍ ແ ຜ່ ຄ ວ າ ມ ຮູ້ ເ ປັ ນ ສ ະ ຖ ານ ທີ່ ຝ ຶ ກ ອ ົ ບ ຮ ົ ມ , ສ ະ ຖ ານ ທີ່ ຝ ຶ ກ ງ ານ ສ ຳ ລ ັ ບ ພ ະ ນ ັ ກ ງ ານ ດ ้ ານ ກ ານ ກ ะ ເ ສ ດ ລ ວ ມ ເ ຖ ິ ງ ນ ັ ກ ຮ ຽ ນ ນ ັ ກ ສ ຶ ກ ສ າ ເ ປ ັ ນ ຈ ຳ ນ ວ ນ ຫ ຼ ວ ງ ຫ ຼ າ ຍ .



ການສຶກສາອົບຮົມ ເພື່ອພັດທະນາຄວາມຮູ້ດ້ານການກະເສດໃນສູນ ໄດ້ແກ່:

- ລະດັບຊາວບ້ານ/ຊາວກະສິກອນ: ການຝຶກອົບຮົມຄວາມຮູ້ດ້ານການກະເສດໃຫ້ກັບຊາວກະສິກອນ ທີ່ອາໃສຢູ່ບໍລິເວນໝູ່ບ້ານອ້ອມຂ້າງສູນ ແລະ ທົ່ວເມືອງນາຊາຍທອງ ສາມາດປະຕິບັດໄດ້ປີລະ 02 ຄັ້ງ ໂດຍແຕ່ລະຄັ້ງຈະແບ່ງອອກເປັນ 03 ໜ່ວຍງານຫຼັກໃນການໃຫ້ການຝຶກອົບຮົມ ຄື: ວິຊາການປູກຝັງ, ການລ້ຽງສັດ ແລະ ການປະມົງ ໜ່ວຍງານລະລວມປະມານ 160–240 ຄົນ ຕໍ່ປີ ແລະ ຍັງມີຊາວກະສິກອນຈາກຕ່າງແຂວງອື່ນທີ່ຂໍເຂົ້າຮ່ວມຝຶກອົບຮົມ ໄດ້ແກ່ ແຂວງ ອຸດົມໄຊ ແລະ ແຂວງ ບໍ່ແກ້ວເປັນຕົ້ນ.

ຝຶກອົບຮົມນິເທດສະການ ການປູກ-ການລ້ຽງ ສະຖານີບໍລິການເຕັກນິກກະສິກຳ ແລະ ປ່າໄມ້ ທົ່ງແສນ ເມືອງ ຄຳເກີດ ແຂວງ ບໍລິຄຳໄຊ ຄັ້ງວັນທີ 8 ກຸມພາ 2018.









ນັກສຶກສາຝຶກງານໃນສູນ

• ລະດັບໂຮງຮຽນ ແລະ ສະຖາບັນ: ກຸ່ມຈາກໂຮງຮຽນ ແລະ ສະຖາບັນຕ່າງໆ ຈາກທົ່ວ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ທີ່ສົ່ງ ນັກຮຽນ ນັກສຶກສາ ເຂົ້າຮ່ວມຝຶກອົບຮົມ ແລະຝຶກງານໃນສູນ ນັບຕັ້ງແຕ່ປີ 2004–2019 ຈຳນວນ 20-50 ຄົນ ຕໍ່ປີ ຈາກ 13 ສະຖາບັນສຶກສາ ແລະ ຍັງມີນັກສຶກສາຂອງໄທ ຈາກມະຫາວິທະຍາໄລແມ່ໂจ้ ຈຳນວນ 06 ຄົນ ເຂົ້າຝຶກງານໃນສູນ ເປັນໄລຍະເວລາ 03 ເດືອນ.

• ລະດັບພະນັກງານຈາກອົງກອນອື່ນໆ ແລະ ຊາວກະສິກອນຈາກແຂວງຕ່າງໆ : ມີພະນັກງານ ຈາກອົງກອນຕ່າງໆ ຂອງລັດ ເຂົ້າມາຮັບການອົບຮົມໃນດ້ານຕ່າງໆ ເຊັ່ນ : ພະນັກງານລະດັບວິຊາການຂອງເມືອງຈົນເຖິງຫົວໜ້າພະແນກກະສິກຳ 17 ແຂວງ ອົງການ ຊາວໜຸ່ມ ສ ປ ປ.ລາວ ທົ່ວປະເທດ ໂຄງການເຄື່ອນໄຟຟ້ານ້ຳເທິນ 2 ໂຄງການ ເຂື່ອນໄຟຟ້ານ້ຳງື່ມ 2 ປະມານ 150-200 ຄົນ ຕໍ່ ປີ.

ນັບຈາກທີ່ໄດ້ຈັດຕັ້ງສູນມານັ້ນ ບັດນີ້ ເປັນເວລາ 20 ປີ ທີ່ສູນແຫ່ງນີ້ ເຮັດໜ້າທີ່ເປັນສູນ ກາງທາງການກະເສດ ເປັນແບບຢ່າງ ແລະ ເປັນ ແຫຼ່ງຮຽນຮູ້ສາທິດໃຫ້ແກ່ພະນັກງານ ແລະ ຊາວກະສິກອນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ເຂົ້າມາສຶກສາ ຕະຫຼອດຈົນຝຶກອົບຮົມ ແລະ ຖ່າຍທອດວິຊາການ ແລະ ເທັກໂນໂລຍີດ້ານຕ່າງໆ ໄດ້ຢ່າງສົມບູນ ລວມເຖິງການເຮັດສວນສາທິດ ການກະເສດຕາມແນວພຣະຣາຊດຳຣິ ທິດສະດີໃໝ່ ທີ່ເອີ້ນວ່າ “ຄອບຄົວຕົວແບບ” ຈຳນວນ 13 ຄອບຄົວ ໂດຍຄັດເລືອກເອົາຊາວກະສິກອນທີ່ຂາດແຄນທີ່ດິນ ທຳມາຫາກິນ ແລະ ມີຊີວິດຄວາມເປັນຢູ່ທຸກຍາກ ເພື່ອເຂົ້າມາຢູ່ອາໃສພ້ອມຮັບການສົ່ງເສີມ ແລະ ຖ່າຍທອດຄວາມຮູ້ເທັກໂນໂລຍີໃນຮູບແບບກະເສດປະສົມປະສານ ໂດຍມີໄລຍະເວລາ ບໍ່ເກີນ 04 ປີ ສາມາດເກັບເງິນໄປຊື້ທີ່ດິນເຮັດການກະເສດ

ຫຼັກ 22 ສູນກາງຄວາມຮູ້



ລະດັບຊາວບ້ານ/ຊາວກະສິກອນ

- ✔ ເລີ່ມຕັ້ງແຕ່ປີ 2006
- ✔ ອົບຮົມຄວາມຮູ້ດ້ານຊາວກະສິກອນ 160 – 240 ຄົນ/ປີ



ລະດັບໂຮງຮຽນ/ສຖາບັນການສຶກສາ

- ✔ ເລີ່ມຕັ້ງແຕ່ປີ 2002
- ✔ ນັກສຶກສາຝຶກງານ 20 – 50 ຄົນ/ປີ
- ✔ ຈາກ 14 ສະຖາບັນການສຶກສາ

ຫຼັກ 22



ລະດັບກອມ/ໜ່ວຍງານ

- ✔ ເລີ່ມຕັ້ງແຕ່ປີ 2006
- ✔ ໂຄງການຂອງລັດ 150 ຄົນ
- ✔ ເອກະຊົນ ແລະ ອື່ນໆ 15–50 ຄົນ/ປີ



ຄອບຄົວຕົວແບບ

- ✔ ຈາກຊາວກະສິກອນຍາກຈົນບໍ່ມີທີ່ດິນ ສ້າງສາ
- ✔ ໃຫ້ຄວາມຮູ້ ແລະ ເຮັດການຜະລິດຢູ່ພາຍໃນສູນຈຳນວນ 13 ຄົນ





ການຂະຫຍາຍຜົນສູ່ຕ່າງແຂວງ

ຈາກຄວາມຮ່ວມມືກັນຢ່າງໃກ້ຊິດຂອງຄະນະເຮັດວຽກຝ່າຍລາວ-ໄທໄດ້ວາງເປົ້າໝາຍ ໃນດ້ານການຂະຫຍາຍຜົນໄປຍັງແຂວງຕ່າງໆ ຈຳນວນ 17 ແຂວງ ເພື່ອຖ່າຍທອດເຕັກໂນໂລຊີ ດ້ານ ກ ະ ສິ ກຳ ໃຫ້ກັບ ພະ ນັ ກ ງ ານ ພ ະ ແນ ກ ກ ະ ສິ ກຳ ແລະ ປ່າໄມ້ ແຂວງ ໄດ້ຮັບ ຄ ວ າ ມ ຮູ້ ແລະ ນ ຳ ເ ອ ິ າ ຄ ວ າ ມ ຮູ້ ແລະ ເຕັກ ໂ ນ ໂ ລ ຊ ີ ຂ ອ ງ ວ ຽ ກ ງ ານ ພັ ດ ທ ະ ນ າ ດ ້ ານ ຕ ່ າ ງ ໆ ເຊ ັ ່ ນ: ວ ຽ ກ ງ ານ ຊ ົ ນ ລ ະ ປ ະ ທ ານ ວ ຽ ກ ງ ານ ພັ ດ ທ ະ ນ າ ທ ີ ່ ດ ິ ນ ວ ຽ ກ ງ ານ ອ ິ ຊ າ ກ ານ ປ ູ ກ ຝ ັ ງ ວ ຽ ກ ງ ານ ລ ້ ຽ ງ ສ ັ ດ ແ ລ ະ ວ ຽ ກ ງ ານ ປ ະ ມ ົ ງ ໄປ ຖ ່ າ ຍ ທ ອ ດ ແ ລ ະ ສ ົ ່ ງ ເ ສ ີ ມ ຊ າ ວ ກ ະ ສ ິ ກ ອ ນ ລ າ ວ ເ ພ ື ່ ອ ນ ຳ ໄ ປ ໃ ຊ ້ ກ ັ ບ ກ ານ ພ ັ ດ ທ ະ ນ າ ດ ້ ານ ກ ະ ສ ິ ກ ຳ ໄ ດ ້ ດ ຳ ເ ນ ີ ນ ກ ານ ໄ ປ ແ ລ ້ ວ ຈ ຳ ນ ວ ນ 9 ແ ຂ ວ ງ ໂ ດ ຍ ມ ີ ພ ະ ນ ັ ກ ງ ານ ພ ະ ແ ນ ກ ກ ະ ສ ິ ກ ຳ ແ ລ ະ ປ ່ າ ໄ ມ ້ ແ ຂ ວ ງ ແ ລ ະ ຄ ອ ບ ຄ ົ ວ ຕ ົ ວ ແ ບ ບ, ເ ປ ັ ນ ກ ຸ ່ ມ ເ ປ ົ ້ າ ໝ າ ຍ ນ ອ ກ ຈ າ ກ ນ ີ ້, ຍ ັ ງ ມ ີ ກ ານ ດ ຳ ເ ນ ີ ນ ງ ານ ຕ ິ ດ ຕ າ ມ ວ ຽ ກ ງ ານ ຂ ະ ຫ ຍ າ ຍ ຜ ົ ນ ລ ວ ມ ເ ຖ ິ ງ ມ ີ ກ ານ ສ ະ ໜ ັ ບ ສ ະ ໜ ູ ນ ຊ ່ ວ ຍ ເ ຫ ຼ ື ອ ໃ ນ ຍ າ ມ ຂ າ ດ ແ ຄ ນ ດ ັ ່ ງ ນ ີ ້:

1. ແຂວງ ຫ ລ ວ ງ ພ ະ ບ າ ງ ໄ ດ ້ ຈ ັ ດ ຕ ັ ້ ງ ປ ະ ຕ ິ ບ ັ ດ ວ ຽ ກ ງ ານ ຂ ະ ຫ ຍ າ ຍ ຜ ົ ນ ເ ມ ື ່ ອ ວ ັ ນ ທ ີ 5-6 ສ ິ ງ ຫ າ 2010
2. ແຂວງ ສ ະ ຫ ວ ັ ນ ນ ะ ເ ຂ ດ ໄ ດ ້ ຈ ັ ດ ຕ ັ ້ ງ ປ ะ ຕ ิ ບ ั ด ว ฺ ก ง า น ข ะ ห ย า ย ผ ึ ม เ ม ื ่ อ ว ั น ท ี 24-25 ก ั น ย า 2010
3. ແ ຂ ວ ງ ບ ໍ ລ ິ ຄ ຳ ໄ ຊ ໄ ດ ้ ຈ ั ด ต ั ้ ง ป ะ ต ิ บ ั ด ว ฺ ก ง า น ข ะ ห ย า ย ผ ึ ม เ ม ื ่ อ ว ั น ท ี 19-20 ต ุ ล า 2010
4. ແ ຂ ວ ງ ຫ ຼ ວ ງ ນ ้ ำ ท า ไ ด ้ ຈ ั ด ต ั ้ ง ป ะ ต ิ บ ั ด ว ฺ ก ง า น ข ะ ห ย า ย ผ ึ ม เ ม ื ่ อ ว ั น ท ี 16-17 ส ิ ง ห า 2011



5. ນະຄອນຫຼວງວຽງຈັນ ໄດ້ຈັດຕັ້ງປະຕິບັດວຽກງານ ຂະຫຍາຍຜົນ ເມື່ອວັນທີ 30 ກັນຍາ 2011
6. ແຂວງອຸດົມໄຊ ໄດ້ຈັດຕັ້ງປະຕິບັດວຽກງານ ຂະຫຍາຍຜົນ ເມື່ອວັນທີ 29-30 ພຶດສະພາ 2012
7. ແຂວງອັດຕະປື ໄດ້ຈັດຕັ້ງປະຕິບັດວຽກງານ ຂະຫຍາຍຜົນ ເມື່ອວັນທີ 23-24 ສິງຫາ 2012
8. ແຂວງຜົ້ງສາລີ ໄດ້ຈັດຕັ້ງປະຕິບັດວຽກງານ ຂະຫຍາຍຜົນ ເມື່ອວັນທີ 14-15 ພຶດສະພາ 2013
9. ແຂວງຊຽງຂວາງ ໄດ້ຈັດຕັ້ງປະຕິບັດວຽກງານ ຂະຫຍາຍຜົນ ເມື່ອວັນທີ 23-24 ສິງຫາ 2013
10. ແຂວງບໍລິຄຳໄຊ ເມືອງຄໍເກີດ ບ້ານຫຼັກຊາວ ໄດ້ຈັດຕັ້ງປະຕິບັດວຽກງານ ຂະຫຍາຍຜົນ ເມື່ອວັນທີ 8 ກຸມພາ 2018
11. ແຂວງອັດຕະປື ໄດ້ຈັດຕັ້ງປະຕິບັດວຽກງານ ຕິດຕາມຂະຫຍາຍຜົນ ຄັ້ງທີ 11 ເມື່ອວັນທີ 10-14 ກໍລະກົດ 2019 ເຂົ້າໄປຊ່ວຍເຫຼືອ ເອົາກົບ, ປາ, ເມັດພັນຜັກ, ພັນໄມ້ໃຫ້ໝາກເຊັ່ນ: ເບ້ຍໝາກມ່ວງ, ລິ້ນຈີ່, ສົ້ມໂອ, ໝາກນາວ ແລະ ພັນສັດເຊັ່ນ: ໄກ່, ເປັດນອ້ຍ, ໄປສະໜັບສະໜູນ ຈຳນວນ 5 ສູນດັ່ງນີ້:



1. ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ໜອງລົມ
2. ສູນພັກຊົ່ວຄາວບ້ານຫາດຍາວ
3. ສູນພັກຊົ່ວຄາວບ້ານດົງບາກ
4. ສູນພັກຊົ່ວຄາວດອນບົກ
5. ສູນພັກຊົ່ວຄາວຕາມໍຢອດ

ຈາກການຂະຫຍາຍຜົນດັ່ງກ່າວ ເຮັດໃຫ້ຮູ້ວ່າແຕ່ລະແຂວງມີບັນຫາ ແລະ ຄວາມຕ້ອງການໃນກາ ນ ພັ ດທະນາກາານກະສິກຳໃນດ້ານໃດແດ່ ແລະມີຄວາມສາມາດຈະພັດທະນາໃຫ້ເປັນສູນລວມຂອງການພັດທະນາດ້ານການກະສິກຳສະເພາະດ້ານແນວໃດເຊັ່ນ:

ແຂວງຫລວງພະບາງ ມີຄວາມຕອ້ງການ ແລະ ມີຄວາມສາມາດທີ່ຈະພັດທະນາດ້ານການປະມົງ ຈຶ່ງໄດ້ສະໜັບສະໜູນງົບປະມານໃນການສ້າງສະຖານທີ່ເພາະພັນປາ ປັດໃຈການຜະລິດ ພອ້ມທັງຄວາມຮູ້ການຜະລິດ ແລະ ການຂະຫຍາຍພັນປາ

ແຂວງຫລວງນ້ຳທາ: ມີຄວາມຕ້ອງການ ແລະ ມີຄວາມສາມາດທີ່ຈະພັດທະນາດ້ານກະສິ ກ ຳ ປະເພດໄມ້ໃຫ້ໝາກ ສູນສຶກສາການພັດທະນາຫ້ວຍຮ່ອງໄຄ້ອັນເນື່ອງມາຈາກພະຣາຊະດຳຣິ ແຂວງຊຽງໃໝ່ ໄດ້ສະໜັບສະໜູນພັນໄມ້ໃຫ້ໝາກຊະນິດຕ່າງໆ ຈຳນວນ 1,200 ຕົ້ນໃຫ້ກັບພະແນກກະສິກຳ ແລະປ່າໄມ້ ແຂວງ ຫລວງນ້ຳທາ ເພື່ອປູກແລະຂະຫຍາຍພັນຕໍ່ໄປ

ແຂ ວ ງ ອັ ດຕະປື ເປັນສູນຮຽນຮູ້ໃນການພັດທະນາດ້ານການລ້ຽງສັດ ໂດຍໃຫ້ການສະໜັບສະໜູນປັດໃຈການຜະລິດໄດ້ແກ່ ເປັດເທດ ຈຳນວນ 200 ຕົວ ພ້ອມຕູ້ຟັກໄຂ່ ເພື່ອເປັນບ່ອນຜະລິດ ແລະ ຂະຫຍາຍພັນໃຫ້ກັບຊາວກະສິກອນຕໍ່ໄປ.

ການຂະຫຍາຍຜົນໄປຍັງແຂວງຕ່າງໆ

ແຂວງຫລວງພະບາງ
ໄດ້ຈັດຕັ້ງປະຕິບັດວຽກງານ
ຂະຫຍາຍຜົນ
ເມື່ອວັນທີ 5-6 ສິງຫາ 2010



ແຂວງອັດຕະປື
ໄດ້ຈັດຕັ້ງປະຕິບັດວຽກງານ
ຂະຫຍາຍຜົນ
ເມື່ອວັນທີ 23-24 ສິງຫາ 2012



ແຂວງສະຫວັນນະເຂດ
ໄດ້ຈັດຕັ້ງປະຕິບັດວຽກງານ
ຂະຫຍາຍຜົນ
ເມື່ອວັນທີ 24-25 ກັນຍາ 2010



ແຂວງຜົ້ງສາລີ
ໄດ້ຈັດຕັ້ງປະຕິບັດວຽກງານ
ຂະຫຍາຍຜົນ
ເມື່ອວັນທີ 14-15 ພຶດສະພາ 2013



ແຂວງບໍລິຄຳໄຊ
ໄດ້ຈັດຕັ້ງປະຕິບັດວຽກງານ
ຂະຫຍາຍຜົນ
ເມື່ອວັນທີ 19-20ຕຸລາ 2010



ແຂວງຊຽງຂວາງ
ໄດ້ຈັດຕັ້ງປະຕິບັດວຽກງານ
ຂະຫຍາຍຜົນ
ເມື່ອວັນທີ 23-24 ສິງຫາ 2013



ແຂວງຫຼວງນ້ຳທາ
ໄດ້ຈັດຕັ້ງປະຕິບັດວຽກງານ
ຂະຫຍາຍຜົນ
ເມື່ອວັນທີ 16-17 ສິງຫາ 2011



ແຂວງບໍລິຄຳໄຊ
ເມືອງຄໍເງິດ ບ້ານຫຼັກຊາວ
ໄດ້ຈັດຕັ້ງປະຕິບັດວຽກງານ ຂະຫຍາຍຜົນ
ເມື່ອວັນທີ 8 ມຸນພາ 201.



ນະຄອນຫຼວງວຽງຈັນ
ໄດ້ຈັດຕັ້ງປະຕິບັດວຽກງານ
ຂະຫຍາຍຜົນ
ເມື່ອວັນທີ 30 ກັນຍາ 2011



ແຂວງອັດຕະປື
ໄດ້ຈັດຕັ້ງປະຕິບັດວຽກງານ
ຕິດຕາມຂະຫຍາຍຜົນຄັ້ງທີ 11
ເມື່ອວັນທີ 10-14 ກໍລະກົດ 2019



ແຂວງຈຸດົມໄຊ
ໄດ້ຈັດຕັ້ງປະຕິບັດວຽກງານ
ຂະຫຍາຍຜົນ
ເມື່ອວັນທີ 29-30 ພຶດສະພາ 2012





ດ້ານການປະມົງ



ດ້ານກະສິກຳ



ດ້ານລ້ຽງສັດ

ແຂວງທີ່ເຂົ້າໄປຊ່ວຍເຫຼືອ ປະຕິບັດວຽກງານ ຂະຫຍາຍຜົນ



ຈາກລະດັບແຂວງ ສູ່ລະດັບປະເທດ

ຈາກບົດບາດ ແລະ ຄວາມສຳເລັດທີ່ເຫັນເປັນຮູບປະທຳໃນດ້ານອົງຄວາມຮູ້ດັ່ງກ່າວ ໂດຍສະເພາະຄວາມສາມາດຂອງສູນພັດທະນາ ແລະ ບໍລິການດ້ານການກະເສດ ທີ່ມີຄວາມພ້ອມ ທີ່ຈະດຳເນີນງານໃນຂອບເຂດທົ່ວປະເທດຂອງ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ປະກອບກັບຄວາມສຳເລັດຂອງສູນພັດທະນາ ແລະ ບໍລິການດ້ານການກະເສດທີ່ໄດ້ຮັບພຣະຣາຊທານ ພຣະມະຫາກະຣຸນາທິຄຸນຈາກພຣະບາດສົມເດັດພຣະມະຫາພູມິພົນ ອະດຸນຍະເດດ ມະຫາຣາດ ບໍຣົມນາດບໍພິດ ໃຫ້ຈັດຕັ້ງສູນນີ້ຂຶ້ນ ດັ່ງນັ້ນ ເມື່ອວັນທີ 9 ຕຸລາ 2013 ກະຊວງກະສິກຳ ແລະປ່າໄມ້ ຈຶ່ງໄດ້ຈັດພິທີສົ່ງມອບສູນ ຈາກເດີມ ເຊິ່ງຢູ່ພາຍໃຕ້ການຈັດຕັ້ງປະຕິບັດ ຂອງ ນະຄອນຫຼວງວຽງຈັນ ໃຫ້ມາຢູ່ການດູແລ ແລະ ຈັດຕັ້ງປະຕິບັດຂອງກະຊວງກະສິກຳ ແລະ ປ່າໄມ້ ເຊິ່ງຈະເຮັດໃຫ້ມີງົບປະມານ ແລະ ບຸກຄະລາກອນທີ່ຈະສະໜັບສະໜູນ ການປະຕິບັດ ວຽກງານເພີ່ມຫຼາຍຂຶ້ນ ທີ່ສຳຄັນ ຈະມີບົດບາດໃນການສ້າງອົງຄວາມຮູ້ ແລະ ພັດທະນາບຸກຄະລາກອນ ທາງດ້ານການກະເສດຂອງລາວໃຫ້ພັດທະນາກ້າວໄກຍິ່ງຂຶ້ນໄປ.



ຕົວຢ່າງ ຄອບຄົວຕົວແບບ





• ທ້າວ ຄຳອ້ວນ ສີຫາວົງ ອາຍຸ 64 ປີ ບ້ານ ຫົວຊ້າງ ເມືອງ ນາຊາຍທອງ ນະຄອນຫຼວງວຽງຈັນ ເມື່ອກ່ອນປູກເຂົ້າເຮັດການກະສິກຳແບບປະສົມປະສານ ມີທີ່ດິນຢູ່ 5 ເຮັກຕາ ຫຼື ປະມານ 12,65 ໄລ່. ຕໍ່ມາປີ 2001 ເຂົ້າໄປຮຽນຮູ້ທີ່ສູນດ້ານການປູກພືດ ແລະ ລ້ຽງສັດ. ຊຶ່ງທາງສູນໄດ້ຈັດແປງໃຫ້ລົງມືປະຕິບັດຕົວຈິງ. ຈາກນັ້ນຈຶ່ງກັບໄປເຮັດຢູ່ທີ່ບ້ານໂດຍມີການປູກເຂົ້າ, ປູກໝາກພ້າວ, ປູກໝາກມ່ວງ, ປູກໝໍ່ໄມ້, ລ້ຽງປາ, ລ້ຽງໄກ່ ແລະ ເພາະພັນກົບ ລາຍໄດ້ຫຼັກໄດ້ມາຈາກການລ້ຽງປາ ແລະ ເພາະພັນລູກກົບຂາຍ ທ່ານ ຄຳອ້ວນ ຢາກໃຫ້ທາງບ້ານເປັນສູນຮຽນຮູ້ເພາະຢາກໃຫ້ຄົນທີ່ບໍ່ສາມາດເຂົ້າໄປຮຽນຮູ້ທີ່ສູນກໍ່ສາມາດມາຮຽນຢູ່ທີ່ບ້ານນີ້ໄດ້ ພ້ອມທີ່ຈະຖ່າຍທອດຄວາມຮູ້ ແລະ ປະສົບການ, ຖອດຖອນບົດຮຽນທີ່ໄດ້ໄປ ຮຽນມາ ນອກຈາກນີ້ຍັງໄດ້ແຈກຈ່າຍແມ່ພັນພືດ, ພັນສັດໃຫ້ກັບຄົນທີ່ມາຮຽນຮູ້ນຳ

ປະຈຸບັນ ທ່ານ ຄຳອ້ວນ ບອກວ່າທຸກມື້ນີ້ມີຄວາມສຸກບໍ່ມີເງິນກໍ່ຢູ່ໄດ້ຢູ່ແບບເສດຖະກິດພໍພຽງ ສິ່ງສຳຄັນຄືມີສຸຂະພາບດີຂຶ້ນສາມາດສົ່ງລູກທັງ 6 ຄົນຮຽນຈົບການສຶກສາ ທຸກຄົນມີຄອບຄົວທີ່ພໍຢູ່ພໍກິນ ຕອນນີ້ກໍ່ມີລູກຄົນໜຶ່ງມາຊ່ວຍເຮັດນຳກັນຢູ່ທີ່ບ້ານນີ້ ສາມາດຊື້ລົດໄຖ, ລົດຈັກໃຫ້ລູກຂີ່ໄປໂຮງຮຽນ ຢາກຂອບໃຈໃນຫຼວງລາດຊະການທີ 9 ທ່ານສາມາດສ້າງສູນແຫ່ງນີ້ມາແບ່ງເບົາຄວາມທຸກໃຫ້ພວກເຮົາ ແລະ ເອົາຄວາມຮູ້ມາໃຫ້ທຸກວັນນີ້ລູກໆກໍ່ດີໃຈທີ່ພໍ່ເຮັດກະສິກຳແບບນີ້.







• ທ້າວ ແກ້ວ ພົມພິສວຍ ອາຍຸ 62 ປີ ມີພູມລຳເນົາເດີມຢູ່ແຂວງ ສະຫວັນນະເຂດ ທາງພາກໄຕ້ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເບື້ອງຕົ້ນ ມີອາຊີບເປັນ ກຳມະກອນກໍ່ສ້າງ ແລະ ຮັບຈ້າງທົ່ວໄປ ໄດ້ຮັບຄ່າຈ້າງວັນ 13,000 ກີບ ຫຼືປະມານວັນລະ 50 ບາດ ບໍ່ມີບ້ານ ແລະ ທີ່ດິນເຮັດການຜະລິດເປັນຂອງຕົວເອງ ຈຶ່ງໄດ້ຕັດສິນໃຈເຂົ້າຮ່ວມ ໂຄງການຄອບຄົວຕົວແບບຂອງສູນ ໃນປີ 2000 ໂດຍສູນໄດ້ຈັດສັນທີ່ດິນ ເນື້ອທີ່ 2 ເຮັກຕາ ຫຼື ປະມານ 12 ໄລ່ 2 ງານ ແບ່ງພື້ນທີ່ອາໄສອອກເປັນ 1 ງານ ເນື້ອທີ່ນາ 3 ໄລ່ ຂຸດໜອງປາ 2 ງານ ສວນຜັກ 1 ໄລ່ ສວ່ນໃຫ້ໃຫ້ໝາກ ແລະ ປ່າປະມານ 8 ໄລ່ ໃນປີ 2004 ການ ພັດທະນາດ້ານວິຊາການກະເສດ ໄດ້ໃຫ້ຄວາມຮູ້ເພີ່ມເຕີມກ່ຽວກັບການປັບປ່ຽນວິຖີການຜະລິດ ໂດຍການຖ່າຍທອດເທັກນິກການເຮັດກະເສດອິນຊີ ການເຮັດຝຸ່ນປົ່ນຊີວະພາບ, ປຸ໋ຍນ້ຳຊີວະພາບ ການຂະຫຍາຍພັນໄມ້ໃຫ້ໝາກ ໄດ້ແກ່ ການຕິດຕາ, ຕໍ່ກິ່ງ, ສຽບຍອດ ລວມເຖິງປັບວິທີຄິດ ທັດສະນະຄະຕິ ໃນການດຳລົງຊີວິດ ເມື່ອໄລຍະເວລາຜ່ານໄປ 1 ປີ ຜົນປະກົດວ່າ ທ້າວ ແກ້ວ ແລະ ຄອບຄົວ ສາມາດມີເງິນເກັບ (ຈາກການສະສົມວັນລະປະມານ 60,000-70,000 ກີບ) ຊື້ທີ່ດິນ ເນື້ອທີ່ 1.5 ໄລ່ ທີ່ບ້ານນາຍາງ ເປັນຂອງຕົນເອງໄດ້.

ປະຈຸບັນ ທ້າວ ແກ້ວ ໄດ້ອອກຈາກສູນໄປແລ້ວ ແລະ ໄດ້ຢູ່ອາໃສ ແລະ ທຳມາຫາກິນ ຢູ່ເນື້ອທີ່ດິນຂອງຕົນເອງ ໂດຍມີອາຊີບຫຼັກໃນການປູກຜັກ ແລະ ຂາຍກິ່ງພັນໄມ້ໃຫ້ໝາກ ນອກຈາກນີ້ ຍັງເປັນຜູ້ຖ່າຍທອດຄວາມຮູ້ ແລະ ເທັກນິກວິທີດ້ານການກະເສດແກ່ເພື່ອນບ້ານ ແລະ ຊາວກະສິກອນຊາວລາວດ້ວຍກັນເອງອີກດ້ວຍ.









• ທ້າວ ກາເຢ້ງ ຈ່ຽຍາຊົ່ງ ເມືອງຄໍເກີດ ບ້ານຫຼັກຊາວ ແຂວງບໍລິຄຳໄຊ ຮຽນຈົບ ສາຂາ ກົດໝາຍອາຍາ ຊັ້ນ ປະລິນຍາຕີ ຈາກ ວິທະຍາໄລກົດໝາຍພາກກາງ ນະຄອນຫຼວງວຽງຈັນ ທີ່ໄປຮຽນກົດໝາຍເພາະຄິດຢາກເປັນນັກການເມືອງ ແຕ່ເມື່ອໃກ້ຈະຈົບກໍ່ປ່ຽນໃຈຈະຂໍເປັນນັກ ພັດທະນາດີກວ່າ ເມື່ອກ່ອນຄອບຄົວເຮັດນາ, ເຮັດໄຮ່, ເຮັດສວນ ແຕ່ຄິດວ່າສິ່ງທີ່ເຂົາເຮັດມາ ແຕ່ສະໄໝກ່ອນແມ່ນໄປບໍ່ຖືກທາງ ສະນັ້ນ, ຈຶ່ງປ່ຽນມາເຮັດກະສິກຳໃໝ່ໃຫ້ຖືກທາງ ກໍ່ຄິດວ່າ ເຮົາຮຽນກົດໝາຍນີ້ໃຫ້ກ່ຽວຂ້ອງກັບກົດໝາຍທີ່ສົ່ງເສີມກະສິກຳຫຼາຍທີ່ສຸດ ມີນະໂຍບາຍຫຼາຍທີ່ສຸດ ຈຳເປັນຕ້ອງມາສຶກສາດ້ານການກະສິກຳ

ກ່ອນທີ່ຈະຮູ້ຈັກສູນພັດທະນາ ແລະ ບໍລິການດ້ານການກະເສດຫ້ວຍຊອນ-ຫ້ວຍຊົ້ວນີ້ ເຫັນເຂົາໂພດທາງອ່ອນລາຍວ່າ: ສູນພັດທະນາ ແລະ ບໍລິການດ້ານການກະເສດຫ້ວຍຊອນ-ຫ້ວຍຊົ້ວນີ້ສົ່ງເສີມເລື້ອງກະສິກຳເປັນໂຄງການຮ່ວມມືລາວ-ໄທ ກໍ່ຕັດສິນໃຈຂີ່ລົດໄປເຖິງ ສູນພັດທະນາ ແລະ ບໍລິການດ້ານການກະເສດຫ້ວຍຊອນ-ຫ້ວຍຊົ້ວ. ທ່ານ ປອ ອານຸລົມ ຕຸນາລົມ ຫົວໜ້າສູນຖາມວ່າເປັນຫຍັງນອ້ງຮູ້ ກໍ່ເລີຍເລົ່າໃຫ້ຟັງວ່າເຫັນທາງອ່ອນລາຍ ຫົວໜ້າສູນ ກໍ່ບອກວ່ານອ້ງມັກແທ້ບໍ ໃຫ້ມາປຶກສາແລະປະສານກັນ ຫລັງຈາກນັ້ນກໍ່ມີການປຶກສາຫາລື ແລະ ປະສານກັນຕະຫຼອດມາເຖິງວັນນີ້ ເພາະຢາກຮູ້ເລື່ອງກະສິກຳ, ດ້ານການປູກການລ້ຽງສັດ ອີກຫຼາຍຢ່າງ ອີກຢ່າງກໍ່ໄດ້ເລີ່ມລົງມືປູກກ່ອນແລ້ວ ເພາະວ່າເປັນສິ່ງທີ່ເຮົາໃຫ້ນ້ຳ ໃຫ້ປຸ໋ຍທີ່ສາມາດ ເຮັດໄດ້ຕາມທຳມະຊາດ ສ່ວນການລ້ຽງສັດຕ້ອງໄດ້ລົງທຶນຫຼາຍ ຈຶ່ງຕັດສິນໃຈປູກໃຫ້ດີສາກ່ອນ

ສິ່ງທີ່ສູນພັດທະນາ ແລະ ບໍລິການດ້ານການກະເສດຫ້ວຍຊອນ-ຫ້ວຍຊົ້ວ, ໄດ້ສະໜັບສະໜູນ ຄື:ພະນັກງານວິຊາການຂອງສູນ ໄດ້ມາຢ້ຽມຢາມເຖິງບ້ານແລ້ວໃຫ້ເບ່ຍໝາກກ້ຽງ ເພື່ອປູກ ຈຶ່ງໄດ້ລອງປູກໝາກກ້ຽງ ແລະໄປສຶກສາຫາຄວາມຮູ້ ມີອາຈານຢູ່ທີ່ສູນ ຄອຍບອກ ຄວາມຮູ້ໃຫ້ ຄຳແນະນຳ ແລະອາໃສຖາມໝູ່ທີ່ຮຽນຈົບກະສິກຳນຳ ຄັ້ງທຳອິດ ຍັງບໍ່ຄາດຄິດວ່າ ໄດ້ຜົນຜະລິດ ຂະໜາດນີ້ພໍມາທົດລອງເຮັດວ່າປີໜຶ່ງ ກໍ່ເຫັນຜົນຜະລິດໄດ້ຕາມທີ່ເຮົາພັດທະນາ ຖືວ່າດີພໍສົມຄວນ ບາງທີກໍ່ທໍ້ ບາງທີກໍ້ເປັນແຮງຈຸງໃຈເພື່ອໃຫ້ເຮົາສືບຕໍ່ ສິ່ງທີ່ທໍ້ກໍ່ຄືວ່າເຮົາຍັງບໍ່ມີຄອບຄົວ ເຮັດ ເໝື່ອຍມາບໍ່ມີຄົນທີ່ແຕ່ງຢູ່ຄົວກິນຖ້າ ອັນນີ້ຄືຄວາມຈິງເລີຍ.

ສິ່ງປະທັບໃຈທີ່ສຸດຄື ຜົນຜະລິດທີ່ເຮົາປູກມັນງາມຂຶ້ນມາ ທາງພໍ່ແມ່ພີ່ນອ້ງກໍ່ດີໃຈນຳ ເຂົາກໍ່ ຄ່ອຍໃຫ້ກຳລັງໃຈ ເຂົາວ່າເຂດນີ້ມີແຕ່ນອ້ງຄົນດຽວທີ່ເຮັດໄດ້ ກໍ່ຕັ້ງໃຈເຮັດໄປ ອາຈານ ທາງຝັ່ງໄທ ແລະ ທາງຝັ່ງລາວ ມີກຳລັງໃຈໃຫ້ຕະຫຼອດ ໃຫ້ຂໍ້ມູນທຸກໆ ຢ່າງ ອັນນີ້ກໍ່ເປັນຈຸດໜຶ່ງທີ່ໃຫ້ ກາເຢ້ງ ແຂງແຮງ ແລ້ວກໍ່ຄວາມພູມໃຈໃນຕົວເຮົາທີ່ໄດ້ມາເຮັດການກະສິກຳແບບເປັນທຳມະຊາດນີ້ ສິ່ງທີ່ເຮົາປູກ-ລ້ຽງຈາກມືເຮົາເອງ ແລ້ວໄດ້ກິນແລະຮັບປະກັນວ່າ ປອດໄພບໍ່ມີສານພິດ ບໍ່ວ່າ ຈະເປັນພືດ ແລະ ເປັນສັດ





ໃນອານາຄົດ ກາເຢ້ັ ຈ່ັງຢາຊ່ັ ຄິດກ່ອນທ່ີຈະມາເຮັດການກະສິກຳນ້ີ ເພາະຄົນບ້ານເຮົາ ເຂົາຂາດຄວາມຮູ້ເລ່ືອງການກະສິກຳແບບນ້ີ ແລ້ວປູກພືດ ແບບປູກມາແຕ່ດຶກດຳບັນບໍ່ມີການ ປ່ຽນແປງເລີຍເຂົາຈະບໍ່ຖາມບໍ່ກ້າເຮັດ ບໍ່ກ້າລົງມື ສະນັ້ນໃນຖານະເຮົາເປັນຄົນລຸ່ນໃໝ່ຕ້ອງ ລົງມືກ່ອນໃຫ້ເຂົາເຫັນຜົນ ຫລັງຈາກນັ້ນຈ່ຶງຄ່ອຍໂຄສະນາເຜີຍແຜ່ຂ່າວສານ ຊວນຄົນທ່ີມັກ ຢາກປູກ, ຢາກລ້ຽງ ເມ່ືອໄດ້ຈັກຄົນສອງຄົນແລ້ວກ່ໍຈະປ່ຽນຊີວິດຄອບຄົວເຂົາ ຈາກທ່ີເຂົາປູກຝ່ືນ ໃຫ້ຫັນມາປູກໄມ້ໃຫ້ໝາກ ໄມ້ທຳມະຊາດທ່ີປ່ຽນອານາຄົດໃນທາງທ່ີຖືກຕ້ອງ ຕາມນະໂຍບາຍ ພັກ-ລັດ ແລ້ວຊີວິດຄອບຄົວເຂົາຈະດີຂ້ຶນ.

• ນາງ ທອາດ ອິນທິສານ ຊາວກະສິກອນ ເມືອງ ບໍລິຄັນ ແຂວງ ບໍລິຄຳໄຊ ແຕ່ກ່ອນ ເຮັດນາ ແລ້ວກ່ໍລ້ຽງເປັດ, ລ້ຽງໄກ່ ເມ່ືອລູກສາວໄປຮຽນຢູ່ຫ້ວຍຄູນ 3 ປີ, ຢູ່ປາກຊັນ 3 ປີ ແລ້ວໄດ້ໄປຝຶກງານຢູ່ ນະຄອນຫຼວງວຽງຈັນໄປຢູ່ທ່ີສູນ ແລ້ວມາຖາມແມ່ວ່າເອົາເປັດບໍ່ ລູກສາວເອົາເປັດມາໃຫ້ 30 ໂຕ, ສ່ວນອາຫານແມ່ນໃຊ້ແຕ່ຮຳເກືອຢ່າງດຽວ ທາງສູນກ່ໍມາແນະ ນຳພໍ່ພັນແມ່ພັນໃຫ້ສັກຢາ (ສີດຢາ) ລູກສາວຈ່ຶງໄປຊ້ືຢາຢູ່ທ່ີປາກຊັນມາຫຼອດໜ່ຶງ 60 ພັນກີບ (200 ບາດ) ສັກໄດ້ 40 – 50 ໂຕ, ລູກສາວສັກເອງໄດ້ໄປຮຽນທາງດ້ານກະສິກຳມາ, ຜົນຜະລິດ ກ່ໍດີຂ້ຶນ ກ່ໍໄດ້ພາກັນລ້ຽງແລ້ວກ່ໍແຜ່ພັນອອກມາຂາຍໃຫ້ພ່ີນ້ອງຕ່ໍຫຼາຍຄົນ, ນອກຈາກນ້ີສູນຍັງມາ ອຸດໜູນຄອຍອຸປະຖຳຄ້ຳຊູເລ່ືອງຕ້ົນໄມ້, ປາ, ເປັດ ແລະ ໃຫ້ຄວາມຮູ້ການປູກ-ການລ້ຽງເຮັດ ໜ້ຄອບຄົວເຮົາມ້ີຢູ່ມ້ີກ່ິນອຸດົມສົມບູນ ແລະ ສາມາດຂາຍມ້ີລາຍໄດ້ເປັນເສດຖະກ່ິດຄອບຄົວເຮົາ ດ້ີຂ້ຶນເພາະມ້ີຜົນຜະລິດດ້ີບໍ່ຕ້ອງໃຊ້ສານເຄມ້ີ ປອດສານພ້ິດດ້ີຕ່ໍສຸຂະພາບເຮົານ່ຳ ຊຸດນ້ີຈະຂາຍປາ ຂາຍເປັດ ແລະ ຈະໄປຊ້ືງ່ວມາລ້ຽງເພ່ີມອ້ີກ ຕ້ອງຂອບໃຈສູນຫຼາຍໆ.



ຕົວຢ່າງຄອບຄົວ**ຕົວແບບ**

ທ້າວ ຄຳອ້ອນ ສີຫາວົງ
ນະຄອນຫລວງວຽງຈັນ
ລ້ຽງກົບ ແລະ ສັດນ້ຳ ເປັນຫລັກ



ທ້າວ ແກ້ວ ພິມພິສອຍ
ນະຄອນຫລວງວຽງຈັນ
ກະສິກຳຜະສົມຜະສານ ປູກພືດ-ລ້ຽງສັດ



ທ້າວ ກາເຢ້ຍ ຈົ່ງຍາສົ່ງ
ແຂວງບໍລິຄຳໄຊ
ປູກເຂົ້າ ແລະ ໄມ້ໃຫ້ໝາກ ເປັນຫລັກ



ນາງ ຫວາດ ອິນທິສານ
ແຂວງບໍລິຄຳໄຊ
ລ້ຽງເປັດ ລ້ຽງປາ ເປັນຫລັກ



ບອກເຫລົ່າຄວາມສຳເລັດ

ທ່ານ ອານຸລົມ ຕຸນາລົມ ອາດີດຜູ້ອຳນວຍການສູນພັດທະນາ ແລະ ບໍລິການດ້ານການກະເສດ ຫ້ວຍຊອນ-ຫ້ວຍຊົ້ວ ມີໜ້າທີ່ດູແລການດຳເນີນງານໃນສູນມາເປັນເວລາ 15 ປີ ໄດ້ບອກເລົ່າ ແລະ ສະທ້ອນເຖິງຜົນສຳເລັດທີ່ເກີດຂຶ້ນຕະຫຼອດໄລຍະເວລາທີ່ໄດ້ດູແລການດຳເນີນງານຈົນເຖິງ ຂະຫຍາຍຜົນສຳເລັດໄປສູ່ປະຊາຊົນລາວໃນແຂວງຕ່າງໆຈົນສາມາດເປັນຄອບຄົວຕົວແບບ.



ສູນແຫ່ງນີ້ມີຜົນການດຳເນີນງານມາຄົບ 25 ປີ ໃນປີ 2019 ຊຶ່ງເກີດຂຶ້ນຈາກອັນທຳອິດ ທີ່ມັນເກີດຂຶ້ນຈາກຄວາມຮ່ວມມືຂອງສອງລັດຖະບານ ຫຼື ສອງປະມຸກລັດໃນອາດີດ ທີ່ສ້າງມາ ອັນທີສອງກໍ່ຄືການຮ່ວມຈິດຮ່ວມໃຈເປັນໜຶ່ງດຽວຂອງທີມງານປະຕິບັດງານຝ່າຍລາວ ແລະ ຝ່າຍໄທ ທີ່ໄດ້ຮ່ວມກັນມາປະຕິບັດຕົວຈິງແລ້ວກໍ່ພັດທະນາສູນຂຶ້ນມາໃຫ້ຢູ່ໃນຄວາມສຳເລັດ ຈົນເຖິງທຸກວັນນີ້ ແຕ່ສິ່ງສຳຄັນທີ່ສຸດຄືກຳລັງໃຈທີ່ພັກດັນໃຫ້ມີການປະຕິບັດຕົວຈິງຂອງທີມງານສອງຝ່າຍ ກໍ່ຍ້ອນ ໄປທີ່ຄວາມຊ່ວຍເຫຼືອຂອງພຣະເຈົ້າມະຫາຊີວິດໄທອັນນີ້ມາເຮັດໃຫ້ທີມງານຂອງຂ້າພະເຈົ້າຖືວ່າ ມີກຽດອັນສູງສົ່ງ.

ຄວາມພູມໃຈສູງສຸດຄືຜົນສຳເລັດຂອງສູ ນທີ່ໄດ້ນຳສິ່ງທີ່ເປັນແນວຄິດຂອງ ພຣະບາດສົມເດັດ ພຣະມະຫາພູມິພົນອະດຸນຍະເດດມະຫາຣາດ ບໍຣົມນາດບໍພິດ ໃນການພັດທະນາຊີວິດຄວາມເປັນຢູ່ ຂອງຊາ ວ ບ້ ານ ໃ ຫ້ ດີ ຂຶ້ ນ ໂດຍການນຳເອົາຜົນສຳເລັດແນວຄວາມຄິດທາງວິຊາການຕ່າງໆ ການປູກ-ການລ້ຽງ ໄປແນະນຳຊາວບ້ານ ແລະ ເກີດເປັນຜົນສຳເລັດໃຫ້ເຫັນທຸກວັນນີ້ ຈາກຄອບຄົວ ທີ່ບໍ່ມີຫຍັງ ບໍ່ມີຄວາມຮູ້ຫຍັງ ສຸດທ້າຍກໍ່ນຳຄວາມຮູ້ມານຳພາຊີວິດຂອງຊາວບ້ານຫຼາຍຄອບຄົວ ໃຫ້ດີຂຶ້ນ ອັນນີ້ພວກເຮົາສາມາດຈັບຕ້ອງໄດ້ ແລະ ເຫັນໄດ້ກັບຕາຖືເປັນຕົວຊີ້ບອກຄວາມສຳເລັດ.



ປະມວນພາບພະຣາດຊະກອນນິຍະກິດ

ສະເດັດພຣະຣາຊດຳເນີນທອດພຣະເນດການດຳເນີນງານ
ສູນພັດທະນາ ແລະ ບໍລິການດ້ານການກະເສດ ຫ້ອຍຊອນ-ຫ້ອຍຊໍ້ວ (ຫລັກ 22)
ປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

- ວັນທີ 8 ເມສາ 1994
- ວັນທີ 28 ຕຸລາ 1994
- ວັນທີ 8 ເມສາ 1996
- ວັນທີ 21 ມັງກອນ 1997
- ວັນທີ 26 ພະຈິກ 2007
- ວັນທີ 5 ມີນາ 2009
- ວັນທີ 14 ມີນາ 2012
- ວັນທີ 28 ເມສາ 2014




ວັນທີ 8 ເມສາ 1994



ວັນທີ 8 ເມສາ 1994



ວັນທີ 28 ຕຸລາ 1994



ວັນທີ 28 ຕຸລາ 1994



ວັນທີ 8 ເມສາ 1996



ວັນທີ 8 ເມສາ 1996



ວັນທີ 21 ມັງກອນ 1997



ວັນທີ 21 ມັງກອນ 1997



ວັນທີ 26 ພະຈິກ 2007



ວັນທີ 26 ພະຈິກ 2007



ວັນທີ 5 ມີນ 2009



ວັນທີ 5 ມີນາ 2009



ວັນທີ 14 ມີນາ 2012



ວັນທີ 14 ມີນາ 2012

20 ปี
ສູນພັດທະນາ ແລະ ບໍລິການດ້ານການກະເສດ ຫ້ວຍຊອນ-ຫ້ວຍຊົ້ວ



ວັນທີ 28 ເມສາ 2014



ວັນທີ 28 ເມສາ 2014



ວັນທີ 28 ເມສາ 2014



ວັນທີ 28 ເມສາ 2014



ວັນທີ 28 ເມສາ 2014



ວັນທີ 28 ເມສາ 2014




ผลสำเร็จ
ข้าว
องค์ความรู้
ทิศทางการขยายผล






ກອງປະຊຸມ
ຂະຫຍາຍຜົນສູ່ເມືອງທຸກຍາກ
ວັນທີ 28 - 29 ເມສາ 2014




ງານພັດທະນາທີ່ດິນ


ດິນໃນສູນພັດທະນາແລະ
ບໍລິການດ້ານກະສິກຳ
ຫ້ວຍຊອມ-ຫ້ວຍຊີ້ວ


ໄກ່ດຳພູພານ
ລັກສະນະ
ລັກສະນະເປັນໄກ່ສາຍພັນພື້ນເມືອງ ຂົນສີດຳ
ໜັງດຳ ເລັບດຳ ໜັງຕີນດຳ ຊົ້ນຕີນສີດຳ ແລະ
ກະດູກມີສີດຳ ຊົ້ນມີຣິດຊາດຄືຄືກັບໄກ່ພື້ນເມືອງ
ສາມາດລ້ຽງປ່ອຍຕາມທຳມະຊາດໄດ້
ການນຳໃຊ້
- ໄກ່ຜູ້ມີນ້ຳໜັກ 3 ກິໂລ
- ໄກແມ່ມີນ້ຳໜັກ 1,5 ກິໂລ
- ໄຫ້ໄຂ່ປີລະ 3-4 ຊຸດ
- ໄຫ້ໄຂ່ຊຸດລະ 10-15 ໜ່ວຍ
- ລາຄາໄກ່ນ້ອຍ 7,000 ກີບ/ໂຕ
- ສາມາດຟັກໄຂ່ ແລະ ລ້ຽງລູກດ້ວຍຕົນເອງໄດ້
- ມີຄວາມຕ້ານທານຕໍ່ໂລກ ແລະ ສະພາບແວດລ້ອມໄດ້ດີ




ปาทิดเหู๊อๅ


ปาขภาษาพมาใตละปะมาบ 45 ภภ


ພືດຝຸ່ນສິດ
ຖົ່ວພຸ່ມ
Vigna unguiculata
ຖົ່ວພ້າ
Canavalia ensiformis
ປໍເທົ້ອໆ
Crotalaria juncea



ລາຍຊື່ຄະນະ ບໍລິຫານຝ່າຍລາວ
ສູນພັດທະນາ ແລະ ບໍລິການດ້ານການກະເສດຫ້ວຍຊອນ-ຫ້ວຍຊໍ້ ສ ປ ປ ລາວ

ຜູ້ບໍລິຫານ

• ທ່ານ ບຸນຈັນ ກົມບຸນຍະສິດ	ຜູ້ອຳນວຍການ
• ທ່ານ ສີສະເກດ ຂັນທະລັດ	ຮອງຜູ້ອຳນວຍການ
• ທ່ານ ດວງຕາວັນ ສີສົມບັດ	ຮອງຜູ້ອຳນວຍການ
• ທ່ານ ລຳພອນ ພົນສີລາ	ຮອງຜູ້ອຳນວຍການ

ຫົວໜ້າຂະແໜງ

• ທ່ານນາງ ເຂັມພອນ ແພງຄຳຮັກ	ຫົວໜ້າຂະແໜງສິ່ງເສີມຝຶກອົບຮົມ
• ທ່ານນາງ ບຸນເພັງ ຈິດຕະວົງ	ຫົວໜ້າຂະແໜງລ້ຽງສັດ
• ທ່ານ ຄອນສະຫວັນ ວົງພະຈັນ	ຫົວໜ້າຂະແໜງປະມົງ
• ທ່ານ ພິມພາ ແສງພະຈັນ	ຫົວໜ້າຂະແໜງປູກຝັງ
• ທ່ານ ຄຳປັນ ສິດທິວົງ	ຫົວໜ້າຂະແໜງບໍລິຫານ,ແຜນການແລະການຮ່ວມມື

ລາຍຊື່ຄະນະປະຕິບັດວຽກງານງານວິຊາການຝ່າຍໄທ

ສູນພັດທະນາ ແລະ ບໍລິການດ້ານການກະເສດຫ້ວຍຊອນ-ຫ້ວຍຊີ້ວ (ຫຼັກ 22) ສປປ ລາວ

ຄະນະປະຕິບັດວຽກງານດ້ານຊົນລະປະທານ

1. ທ່ານ ຈາຣຶກ ວັດທະນາໂກໄສ	ຜູ້ອຳນວຍການສຳນັກງານຊົນລະປະທານທີ 5
2. ທ່ານ ອະພິຊາດ ຊຸມນຸມມະນີ	ຜູ້ອຳນວຍການໂຄງການຊົນລະປະທານອຸດອນທານີ
3. ທ່ານ ທິນນະກອນ ແສງອາວຸດ	ນາຍຊ່ຽງຊົນລະປະທານອາວຸໂສ

ຄະນະປະຕິບັດວຽກງານດ້ານກົມປະມົງ

1. ທ່ານນາງ ເຣນູ ສີຣິມົງຄົນຖາວອນ	ປະມົງຈັງຫວັດສະກົນນະຄອນ
2. ທ່ານ ນະເຣດ ນາເມືອງຣັກ	ສູນວິໄຈແລະພັດທະນາການເພາະລ້ຽງສັດນ້ຳຈືດເຂດ 4 ອຸດອນທານີ
3. ທ່ານ ວັນລົບ ກອງກຣຳ	ດ່ານກວດສັດນ້ຳແຂວງໜອງຄາຍ

ຄະນະປະຕິບັດວຽກງານດ້ານການລ້ຽງສັດ

1. ທ່ານ ຄົມຈັກ ພິໄຊລົນນະລົງສົງຄາມ	ທີ່ປຶກສາກົມລ້ຽງສັດ
2. ທ່ານ ຊູສັກ ປະພາສະໜວັດ	ທີ່ປຶກສາກົມລ້ຽງສັດ
3. ທ່ານ ສົມພອນ ໂຊກຈະເຣີນ	ຜູ້ອຳນວຍການສູນວິໄຈແລະພັດທະນາງົວຊີ້ນ ຈັງຫວັດລົບບູລີ
4. ທ່ານ ທະວີ ພົງສຸພັນ	ນາຍສັດຕະວະແພດຊຳນານການພິເສດ ສູນວິໄຈ ແລະ ພັດທະນາການສັດຕະວະແພດ ພາກຕາເວັນອອກສຽງເໜືອຕອນບົນ. ແຂວງຂອນແກ່ນ

ຄະນະປະຕິບັດວຽກງານດ້ານພັດທະນາທີ່ດິນ

1. ທ່ານ ຊຸມພອນ ສາດຕຣາວາຫະ	ຜູ້ອຳນວຍການກຸ່ມວຽກແຜນການໃຊ້ທີ່ດິນ ສຳນັກພັດທະນາທີ່ດິນເຂດ 5
2. ທ່ານ ອະດຣຸນ ສຣິສຸພັນ	ຜູ້ອຳນວຍການສະຖານີພັດທະນາທີ່ດິນໜອງບົວລຳພູ
3. ທ່ານ ສະຣາວຸດ ສີຣິລັກ	ສຳນັກພັດທະນາທີ່ດິນໜອງຄາຍ ສຳນັກພັດທະນາທີ່ດິນເຂດ 5

ຄະນະປະຕິບັດວຽກງານດ້ານວິຊາການປູກຝັງ

1. ທ່ານ ສົມຊາຍ ເຊື້ອຈີນ	ຜູ້ອຳນວຍການສູນພັດທະນາການກະເສດພູສີງ ຮັບເມື່ອງມາຈາກພຣະຣາຊດຳຣິ
2. ທ່ານ ປຣະຫຍັດ ຍຸພິນ	ຜູ້ອຳນວຍການສູນວິໄຈແລະພັດທະນາການກະເສດສະກົນນະຄອນ
3. ທ່ານນາງ ສີຣິຣັດ ເຖື່ອນສົມບັດ	ສູນວິໄຈແລະພັດທະນາການກະເສດສະກົນນະຄອນ
4. ທ່ານ ວິຣະວັດ ດູ່ປ້ອງ	ສູນວິໄຈແລະພັດທະນາການກະເສດສະກົນນະຄອນ

ຄະນະຈັດພິມໜັງສື

25 ປີ ສູນພັດທະນາ ແລະ ບໍລິການດ້ານການກະເສດຫ້ວຍຊອນ-ຫ້ວຍຊົ້ວ ສປປ ລາວ

ຄະນະທີ່ປຶກສາ ແລະ ອຳນວຍການ

ທ່ານ ດະນຸຊາ ສິນທະວານິນ	ເລຂາທິການ ກປຮ
ທ່ານ ລະລິດ ຖະນອມສິງ	ຮອງເລຂາທິການ ກປຮ
ທ່ານ ປະວັດ ນະວະມະລັດຕະນະ	ຮອງເລຂາທິການ ກປຮ
ທ່ານນາງ ອຸດສະນີ ທູບທອງ	ຮັກສາການຮອງເລຂາທິການ ກປຮ
ທ່ານນາງ ທະກົນວັນ ໄກສໍລະກຸນ	ທີ່ປຶກສາດ້ານການປະສານງານໂຄງການ
ທ່ານນາງ ວັດສະລີ ວັດທະນະໄກ	ທີ່ປຶກສາດ້ານການພັດທະນາ

ຄະນະທຳງານຈັດທຳໜັງສື

ທ່ານ ທະໄທ ວະສຸນັນ	ຜູ້ອຳນວຍການກອງປະສານງານໂຄງການພື້ນທີ່ 2
ທ່ານນາງ ພິຊະຍະດາ ທັດສະພາກ	ຜູ້ອຳນວຍການກອງປະຊາສຳພັນ
ທ່ານ ປະລິນຍະວັດ ວັດສະຫຼະອາພາກອນ	ຜູ້ອຳນວນການກຸ່ມປະສານງານໂຄງການພື້ນທີ່ 2/1
ທ່ານ ເອກະໄຊ ເພັ້ງສະຫວ່າງ	ຜູ້ອຳນວຍການກຸ່ມສື່ສານອົງກອນ
ທ່ານນາງ ວິໄລ ໝອກອາລຸນ	
ທ່ານນາງ ເບນຈະຣັດ ອັກຄະລະພົນວົງ	
ທ່ານນາງ ສຸດທິພາ ອາສິດລະພົດ	
ທ່ານ ພິສິດ ວິຊຽນທິດສະພອນ	
ທ່ານນາງ ອາລັນຍາ ນາກພັນ	
ທ່ານນາງ ປະທິບ ສຣິຄຳ	
ທ່ານນາງ ລັດຕະນະໄຊ ໂພທິຊຳນານ	
ທ່ານນາງ ພູຂົງ ຄົມສັກສິດ	

ຈັດພິມເມື່ອ ພະຈິກ 2019 ຈຳນວນ 3,000 ຫົວ
ເລກສາກົນປະຈຳໜັງສື (ISBN) 978-616-7671-61-1

ຈັດທຳໂດຍ
ສຳນັກງານຄະນະກຳມະການພິເສດເພື່ອປະສານງານໂຄງການອັນເນື່ອງມາຈາກພຣະລາດຊະດຳຣິ (ສຳນັກງານ ກປຮ)
2012 ຊອຍອະນຸສົມມະລິນ 36 ຖະໜົນອະນຸສົມມະລິນ ແຂວງບາງຍີ່ຂັນ ເຂດບາງພະລັດ ກຸງເທບ 10700
ໂທລະສັບ 0-2447-8500-6 ໂທສານ 0-2447-8562

www.rdpb.go.th

ພິມທີ່: ຫຈກ.ອະນຸການພິມ ໂທ: 0-2282-6033-4

(ຮູບພາບໜ້າປົກ)

ເມື່ອວັນທີ 8 ເມສາ 1994 (ຫລັງຈາກການເປີດຂົວມິດຕະພາບ ລາວ-ໄທ ແຫ່ງທີ 1) ພຣະບາດສົມເດັດພຣະມະຫາພູມິພົນ ອະດຸນຍະເດດ ມະຫາຣາດ ບໍຣິມນາດບໍພິດ ສະເດັດໄປຊົງເປີດໂຄງການສູນພັດທະນາ ແລະ ບໍລິການດ້ານການກະເສດ ຫ້ວຍຊອນ-ຫ້ວຍຊົ້ວ ຮ່ວມກັບ ພະບະທ່ານ ໝູຣັກ ພູມສະຫວັນ ປະທານປະເທດແຫ່ງ ສປປ ລາວ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ



ป้ายโถงทางสูมผัดทะมา และ บริการด้านการทางทะเลส ห้วยซอม-ห้วยขี้ว

สำนักงานคณะกรรมการพิเศษเพื่อประสานงาน
โครงการอันเนื่องมาจากพระราชดำริ (สำนักงาน กปร.)

อาคารสำนักงานโครงการอันเนื่องมาจากพระราชดำริ
เลขที่ 2012 ซอยอรุณอมรินทร์ 36 ถนนอรุณอมรินทร์ แขวงบางยี่ขัน
เขตบางพลัด กรุงเทพมหานคร 10700
โทรศัพท์ 0-2447 8500-6 โทรสาร 0-2447 8562

www.rdpb.go.th